LIBRARIES
UNIVERSITY OF WISCONSIN–MADISON

# Peace talks (Royal Lao Government and Neo Lao Hak Xat). 1972-10

[s.l.]: [s.n.], 1972-10

https://digital.library.wisc.edu/1711.dl/JGE6ZSFWB5V6X8K

This material may be protected by copyright law (Title 17, US Code).

For information on re-use see:
http://digital.library.wisc.edu/1711.dl/Copyright

The libraries provide public access to a wide range of material, including online exhibits, digitized collections, archival finding aids, our catalog, online articles, and a growing range of materials in many media.

When possible, we provide rights information in catalog records, finding aids, and other metadata that accompanies collections or items. However, it is always the user's obligation to evaluate copyright and rights issues in light of their own use.

à conserver

17-10-72
17 OCT 1972

ຄຳປາໄສ

ຂອງ ທ່ານພູມ ສີປະເສີດ, ຫົວໜ້າຄະນະຜູ້ແທນບັນດາກຳລັງ
ຮັກຊາດລາວ, ກ່າວໃນໂອກາດເປີດປະຊຸມເຈລະຈາ ແກ້ໄຂ
ບັນຫາລາວເປັນທາງການ ໃນວັນທີ ໑໗/໑໐/໑໙໗໒. Mardi 17 Octobre 1972

---

ຮຽນ ບັນດາທ່ານ,

ມື້ນີ້, ຄະນະຜູ້ແທນບັນດາກຳລັງຮັກຊາດທີ່ຕາງໜ້າໃຫ້ແນວລາວຮັກຊາດ ແລະ ກຳລັງເປັນກາງຮັກຊາດຮູ້ສຶກປິຕິຍິນດີທີ່ໄດ້ມານະຄອນຫຼວງວຽງຈັນຕາມຄວາມລິເລີ່ມຂອງສະເດັດຫົວຂອງ, ແລະ ພ້ອມກັບພວກທ່ານເປີດກອງປະຊຸມເຈລະຈາເປັນທາງການຄັ້ງທຳອິດໃນມື້ນີ້. ໂດຍຢືນພື້ນໃນເຈດຕະນາດີຂອງຕົນທີ່ຍາມໃດກໍຢາກແກ້ໄຂບັນຫາລາວໂດຍສັນຕິວິທີ, ພວກຂ້າພະເຈົ້າຫວັງວ່າຈະໄດ້ພ້ອມກັນກັບພວກທ່ານຊອກຫາວິທີການແກ້ໄຂບັນຫາລາວຢ່າງເໝາະສົມ ແນໃສ່ຢຸດເຊົາສົງຄາມ, ຟື້ນຟູສັນຕິພາບຄືນສູ່ປະເທດຊາດ, ເພື່ອຕອບສະໜອງຄວາມມຸ່ງມາດປາຖະໜາອັນແຮງກ້າຂອງປະຊາຊົນລາວທົ່ວຊາດທີ່ຢາກໃຫ້ບ້ານເມືອງເຮົາມີເອກະລາດ, ປະຊາທິປະໄຕ, ສັນຕິພາບ, ຄວາມເປັນກາງ, ຄວາມຖືກຕ້ອງປອງດອງ ແລະ ເອກະພາບແຫ່ງຊາດ.

ຮຽນ ບັນດາທ່ານ ,

ບັນດາກຳລັງຮັກຊາດລາວໄດ້ຖະແຫຼງຫຼັກພື້ນອັນສະເໝີຕົ້ນສະເໝີປາຍຂອງຕົນຫຼາຍໆເທື່ອມາແລ້ວ, ຫຼັກພື້ນອັນນັ້ນແມ່ນ: <u>ບັນຫາລາວຕ້ອງໄດ້ຮັບການແກ້ໄຂບົນພື້ນຖານຈິດໃຈຂອງສັນຍາເຊີແນວປີ ໑໙໖໒ ກ່ຽວກັບລາວ ແລະ ສອດຄ່ອງກັບສະພາບການຕົວຈິງຢູ່ລາວໃນປະຈຸບັນ.</u>

ສະພາບການຕົວຈິງດັ່ງກ່າວນັ້ນແມ່ນແນວໃດແທ້ ? ສາເຫດອັນໃດທີ່ພາໃຫ້ເກີດມີສະພາບການດັ່ງກ່າວນັ້ນແມ່ນອັນໃດ ? ນັ້ນແມ່ນເລື່ອງທີ່ຈະຕ້ອງພິຈາລະນາກ່ອນອື່ນໝົດ, ຈາກນັ້ນຈຶ່ງຊອກຫາວິທີອັນຖືກຕ້ອງເພື່ອເຮັດໃຫ້ສະພາບການໃນປະເທດເຮົາກັບຄືນສູ່ຄວາມສະຫງົບ.

ຕາມຄວາມເປັນຈິງແລ້ວ, ໄດ້ຫຼາຍສິບປີມານີ້ ປະເທດຊາດບ້ານເມືອງເຮົາຕົກຢູ່ໃນສະພາວະສົງຄາມອັນຍືດຍາວ ແລະ ດຸເດືອດທີ່ສຸດ, ຖືກຈັກກະພັດເຂົ້າມາຮຸກຮານເອົາເປັນເມືອງຂຶ້ນ, ເຮັດໃຫ້ປະຊາຊົນລາວຖືກກົດຂີ່ຂູດຮີດ, ປາບປາມຢ່າງປ່າເຖື່ອນ ແລະ ທຸກຍາກລຳບາກແສນສາຫັດ. ປະຊາຊົນລາວບໍ່ສາມາດອົດທົນຕໍ່ສະພາບການດັ່ງກ່າວນັ້ນຈຶ່ງໄດ້ຈັບອາວຸດລຸກຂຶ້ນຕໍ່ສູ້ເພື່ອກູ້ຊາດ ແລະ ຍາດໄດ້ໄຊຊະນະນັບມື້ນັບໃຫຍ່ຫຼວງ, ໄຊຊະນະທີ່ກອງປະຊຸມເຊີແນວປີ ໑໙໕໔ ໄດ້ຮັບຮູ້ເອກະລາດ, ອຳນາດອະທິປະໄຕ, ເອກະພາບ ແລະ ດິນແດນອັນຄົບຖ້ວນຂອງລາວກໍຄືຂອງຫວຽດນາມ ແລະ ກຳພູຊາ.

ຕາມຄວາມຈິງແທ້, ຫຼັງຈາກໄດ້ໄຊຊະນະດັ່ງກ່າວແລ້ວນັ້ນ, ປະຊາຊົນລາວຄວນຈະໄດ້ພ້ອມກັນສ້າງສາປະເທດຊາດບ້ານເມືອງຂອງຕົນໃນສັນຕິພາບ, ມີຄວາມຖືກຕ້ອງປອງດອງ ແລະ ປະເທດຊາດເປັນເອກະພາບມາເຖິງແລ້ວ. ແຕ່ຕົວຈິງນັ້ນບໍ່ເປັນແນວນັ້ນ. ຫຼັງຈາກສັນຍາເຊີແນວໄດ້ເຊັນກັນບໍ່ທັນໃດ, ຈັກກະພັດອາເມລິກາກໍໄດ້ກະໂດດເຂົ້າມາຮຸກຮານລາວ, ເຮັດໃຫ້ແປວໄຟສົງຄາມຢູ່ລາວລຸກລາມຄືນອີກ.

ຕະຫຼອດໄລຍະ ໑໘ ປີກ່ອນທີ່ຜ່ານມາ, ຈັກກະພັດອາເມລິກາໄດ້ດຳເນີນນະໂຍບາຍແຊກແຊງ ແລະ ຮຸກຮານປະເທດຊາດບ້ານເມືອງຂອງພວກເຮົາຢ່າງປ່າເຖື່ອນທີ່ສຸດ, ມີກົນອຸບາຍຄອບຄອງປະຊາຊົນເຮົາ, ດັບສູນບັນດາກຳລັງຮັກຊາດ ແລະ ເຮັດໃຫ້ປະເທດຊາດບ້ານເມືອງຂອງພວກເຮົາກາຍເປັນທັງເມືອງຂຶ້ນແບບໃໝ່ ແລະ ຖານທັບ ເພື່ອເປັນແປ້ນຢັ້ນຂະຫຍາຍການຮຸກຮານໄປສູ່ປະເທດຕ່າງໆໃນອິນດູຈີນ ແລະ ອາຊີອາຄະເນ.

ຕະຫຼອດໄລຍະ ໑໘ ປີດັ່ງກ່າວນັ້ນ, ຈັກກະພັດອາເມລິກາໄດ້ຊົງໃຊ້ວິທີການທາງການທະຫານ, ການເມືອງ, ເສດຖະກິດ ແລະ ວັດທະນາທຳ, ເພື່ອຂັດຂວາງ ແລະ ທຳລາຍຄວາມຖືກຕ້ອງປອງດອງຊາດຢູ່ລາວຕັ້ງສອງຄັ້ງ, ໂຄ່ນລົ້ມລັດຖະບານປະສົມແຫ່ງຊາດທີ່ມີຕົວແທນຂອງບັນດາກຳລັງຮັກຊາດເຂົ້າຮ່ວມນຳ, ຢຽບຢ່ຳສັນຍາຕ່າງໆທີ່ບັນດາຝ່າຍລາວໄດ້ເຊັນກັນ, ຢຽບຢ່ຳສັນຍາເຊີແນວປີ ໑໙໕໔ ກ່ຽວກັບອິນດູຈີນ ແລະ ປີ ໑໙໖໒ ກ່ຽວກັບລາວ, ບໍ່ໄດ້ລົດລະໃນການເພີ່ມທະວີສົງຄາມຮຸກຮານປະເທດເຮົາ, ເຂັ່ນຂ້າຮາວີ ແລະ ຄອບຄອງປະຊາຊົນເຮົາ.

ຫຼັງຈາກທີ່ສັນຍາເຊີແນວປີ ໑໙໕໔ ໄດ້ເຊັນກັນບໍ່ເທົ່າໃດ, ອາເມລິກາໄດ້ລົບລ້າງຄຳໝັ້ນສັນຍາຂອງຕົນຄື ເຄົາລົບເອກະລາດ, ອະທິປະໄຕ, ເອກະພາບ ແລະ ດິນແດນອັນຄົບຖ້ວນຂອງສາມປະເທດໃນອິນດູຈີນທີ່ໄດ້ລະບຸໄວ້ຢ່າງຈະແຈ້ງ ໃນຖະແຫຼງການສຸດທ້າຍຂອງສັນຍາດັ່ງກ່າວ. ອາເມລິກາໄດ້ແຊກແຊງ ແລະ ຮຸກຮານປະເທດເຮົາຢ່າງບ້າອາດ, ເອົາປະເທດເຮົາເຂົ້າຢູ່ໃຕ້ຄວາມອາລັກຂາຂອງກຸ່ມ "ຊີອາໂຕ" ຕາມລຳພັງໃຈ, ກໍ່ເອົາລັດຖະບານກະຕ່າຍ, ໃຊ້ກອງທະຫານບຸກໂຈມຕີຍຶດສອງແຂວງຊຳເໜືອ ແລະ ຜົ້ງສາລີ ຊຶ່ງແມ່ນເຂດເຕົ້າໂຮມຂອງບັນດາຝ່າຍກຳລັງປະເທດລາວດັ່ງທີ່ໄດ້ລະບຸໄວ້ໃນສັນຍາເຊີແນວປີ ໑໙໕໔ ກ່ຽວກັບອິນດູຈີນ. ຍ້ອນຖືກປະລາໄຊໃນກົນອຸບາຍບຸກໂຈມຕີຍຶດເອົາໃນສອງແຂວງນັ້ນ ແລະ ຍ້ອນຖືກຕີ້ນຕ້ານຈາກຂະບວນຕໍ່ສູ້ຂອງປະຊາຊົນເຮົາໃນທົ່ວປະເທດ ແລະ ສຽງວິພາກວິຈານຂອງໂລກ, ຈັກກະພັດອາເມລິກາຈຶ່ງຈຳຕ້ອງໃຫ້ພວກລູກນ້ອງຂອງພວກເຂົາຍອມຮັບຈັດຕັ້ງລັດຖະບານປະສົມແຫ່ງຊາດຄັ້ງທີ່ໜຶ່ງ ເມື່ອເດືອນ ໑໑/໑໙໕໗, ຊຶ່ງມີຕົວແທນຂອງແນວລາວຮັກຊາດເຂົ້າຮ່ວມນຳ. ແຕ່ຫຼັງຈາກນັ້ນບໍ່ເທົ່າໃດ, ມາຮອດເດືອນ ໕/໑໙໕໘, ຈັກກະພັດອາເມລິກາຊໍ້າພັດໂຄ່ນລົ້ມລັດຖະບານປະສົມແຫ່ງຊາດດັ່ງກ່າວ, ເອົາລູກນ້ອງອື່ນຂຶ້ນກຳອຳນາດ, ມ້າງຄວາມຖືກຕ້ອງປອງດອງຊາດ, ດຳເນີນການປາບປາມປະຊາຊົນທີ່ຮັກຊາດ, ຈັບກຸມຄຸມຂັງສະເດັດເຈົ້າສຸພານຸວົງ ແລະ ຜູ້ນຳອື່ນໆຂອງແນວລາວຮັກຊາດອີກຫຼາຍທ່ານຢ່າງຜິດກົດໝາຍ, ດຳເນີນກົນອຸບາຍປົດອາວຸດກົມກອງຕ່າງໆຂອງທະຫານແນວລາວຮັກຊາດ ແລະ ກໍ່ສົງຄາມຮຸກຮານປະເທດເຮົາຄືນໃໝ່.

ແຕ່ກົນອຸບາຍອັນໂຫດຫ້ຽມຂອງອາເມລິກາ ແລະ ລູກນ້ອງດັ່ງກ່າວນັ້ນ ໄດ້ຖືກປະລາໄຊຢ່າງອັບອາຍຂາຍໜ້າອີກເທື່ອໜຶ່ງ. ພາຍໃຕ້ການນຳພາຂອງແນວລາວຮັກຊາດ, ບັນດາກົມກອງຂອງກອງກຳລັງປະກອບອາວຸດຂອງຝ່າຍປະເທດລາວໄດ້ພ້ອມກັບປະຊາຊົນໃນທົ່ວປະເທດລຸກຂຶ້ນຕໍ່ສູ້ຕ້ານການຮຸກຮານຂອງອາເມລິກາ ແລະ ລູກນ້ອງຢ່າງພິລະອາດຫານ. ຍ້ອນຖືກປະລາໄຊຢ່າງໜັກໜ່ວງທາງການທະຫານ, ຖືກໂດດດ່ຽວທາງການເມືອງໃນລະດັບສູງ ແລະ ຍ້ອນຍືນຕໍ່ໜ້າໄພອັນຕະລາຍແຫ່ງການພັງທະລາຍຂອງກຸ່ມກະບົດຊາດພູມີໜໍສະຫວັນ, ສະເພາະຢ່າງຍິ່ງແມ່ນພາຍຫຼັງໄຊຊະນະອັນດັງກ້ອງກັງວານຂອງກອງທັບ ແລະ ປະຊາຊົນແຂວງນ້ຳທາ, ຈັກກະພັດອາເມລິກາແລະ

ລູກນີ້ຈຳຕ້ອງຍອມຈັດຕັ້ງລັດຖະບານປະສົມແຫ່ງຊາດເປັນເທື່ອທີສອງ ແລະ ພ້ອມກັບ ໑໔ ປະເທດເຊັນສັນຍາເຈນີແວປີ ໑໙໖໒ ກ່ຽວກັບລາວ, ຢືນຢັນອີກເທື່ອໜຶ່ງກ່ຽວກັບເອກະລາດ, ອະທິປະໄຕ, ເອກະພາບ, ພື້ນແຜ່ນດິນອັນຄົບຖ້ວນ ແລະຄວາມເປັນກາງຂອງລາວ. ຕາມສັນຍາດັ່ງກ່າວນັ້ນ, ອາເມລິກາໄດ້ໃຫ້ຄຳໝັ້ນສັນຍາວ່າຈະ "ບໍ່ໃຫ້ມີການກະທຳໃດໆຫລືຈະບໍ່ເຂົ້າຮ່ວມທຸກການກະທຳໃດໆທີ່ອາດຈະກໍ່ຄວາມເສຍຫາຍໂດຍກົງຫລືໂດຍທາງອ້ອມຕໍ່ອະທິປະໄຕ, ເອກະລາດ, ຄວາມເປັນກາງ, ເອກະພາບ ແລະພື້ນແຜ່ນດິນອັນຄົບຖ້ວນຂອງລາວ", "ບໍ່ໃຊ້ກຳລັງອາວຸດຫລືການນາບຂູ່ດ້ວຍອາວຸດຫລືວິທີການໃດໆທີ່ຈະກໍ່ຄວາມເສຍຫາຍຕໍ່ສັນຕິພາບຢູ່ລາວ" ແລະ "ບໍ່ແຊກແຊງໂດຍກົງຫລືໂດຍທາງອ້ອມເຂົ້າໃນວຽກງານພາຍໃນຂອງລາວ". ແຕ່ໃນຕົວຈິງແລ້ວ, ຕະຫລອດ ໑໐ ປີຜ່ານມາ, ທຸກການກະທຳຂອງຈັກກະພັດອາເມລິກາ ລ້ວນແຕ່ເປັນການລະເມີດ ແລະຝ່າຝືນຂໍ້ຄວາມຕ່າງໆ ທີ່ເຂົາໄດ້ໃຫ້ຄຳໝັ້ນສັນຍາໄວ້ນັ້ນຢ່າງສົ້ນເຊີງ ແລະ ຮ້າຍແຮງ.

<u>ທາງດ້ານການທະຫານ:</u> ຈັກກະພັດອາເມລິກາບໍ່ເອົາຫົວຊາຕໍ່ຂໍ້ຄວາມທີ່ໄດ້ລະບຸໄວ້ໃນມາດຕາ ໒, ມາດຕາ ໔ ແລະມາດຕາ ໕ ຂອງອານຸສັນຍາຂອງສັນຍາເຈນີແວປີ ໑໙໖໒ ກ່ຽວກັບລາວ. ໃນ ໑໐ ກວ່າປີທີ່ຜ່ານມາ, ພວກເຂົາໄດ້ນຳເອົາທີ່ປຶກສາ, ພະນັກງານທະຫານເປັນພັນໆຄົນ, ອາວຸດຍຸດທະພັນນັບເປັນໝື່ນໆໂຕນ, ຍົນຮົບ ແລະ ຍົນຂົນສົ່ງທາງທະຫານເປັນຮ້ອຍໆ ລຳເຂົ້າມາປະເທດເຮົາຢ່າງຜິດກົດໝາຍ.

ພວກເຂົາໄດ້ເພີ່ມທະວີການຊ່ວຍເຫລືອຫລາຍທີ່ສຸດ, ສະເພາະໃນປີ ໑໙໗໒ ເທົ່ານັ້ນກໍ່ຂຶ້ນເຖິງ ໕໒໐ ລ້ານໂດລາ, ໃນນັ້ນ ໔໕໐ ກວ່າລ້ານໂດລາແມ່ນການຊ່ວຍເຫລືອທາງທະຫານ ແລະ ໗໐ ລ້ານໂດລາ ແມ່ນການຊ່ວຍເຫລືອທາງດ້ານບໍລິຫານເສດຖະກິດ (ຕາມຕົວເລກຂອງສະພາສູງອາເມລິກາ). ໂດຍເອົາໃສ່ລະບົບທີ່ປຶກສາ ແລະ ອາວຸດຂອງອາເມລິກາທີ່ກ່າວມານັ້ນ, ອາເມລິກາໄດ້ອອກແຮງກໍ່ສ້າງ ແລະ ຂະຫຍາຍກອງທະຫານຝ່າຍຂວາຂຶ້ນເຖິງ ໘ ໝື່ນກວ່າຄົນ. ອັນທີ່ຮ້າຍແຮງກວ່ານັ້ນແມ່ນ ພວກເຂົາຍັງໄດ້ຈັດຕັ້ງກຳລັງພິເສດ ໒ ໝື່ນກວ່າຄົນໂດຍແມ່ນກົມສືບຂ່າວລາຊະການລັບຂອງອາເມລິກາ ຊີ-ໄອ-ເອ ເປັນຜູ້ປະກອບເຄື່ອງຂອງ, ອາວຸດຍຸດທະພັນ, ລ້ຽງເກືອ, ອົບຮົມ, ບັງຄັບບັນຊາໂດຍກົງ. ໂດຍເອົາໃສ່ເຄື່ອງມືດັ່ງກ່າວນັ້ນ, ອາເມລິກາໄດ້ດຳເນີນ "ສົງຄາມພິເສດ", ຮຸກຮານປະເທດເຮົາ, ອອກແຮງບຸກຍຶດເຂດຄວບຄຸມຂອງບັນດາກຳລັງທີ່ຮັກຊາດ; ພ້ອມກັບນັ້ນ, ກໍ່ບັງຄັບປະຊາຊົນທີ່ຢູ່ໃນເຂດປົດປ່ອຍເປັນແສນເຂົ້າໄປຢູ່ໃນອັນທີ່ເອີ້ນວ່າ "ເຂດອົບພະຍົບລີ້ໄພ".

ຫລັງຈາກກອງທະຫານຫຸ່ນໄດ້ຖືກປະລາໄຊຢ່າງລຽນຕິດ ແລະ ໜັກໜ່ວງມາແລ້ວ, ເປັນຕົ້ນນັບຕັ້ງແຕ່ນິກສັນໄດ້ຂຶ້ນກຳອຳນາດຕໍ່ມາ, ພວກເຂົາໄດ້ນຳເອົາກອງທະຫານຫຼວງໄທເກືອບ ໕໐ ກອງພັນເຂົ້າມາຮ່ວມຮົບຢູ່ລາວ, ໃຊ້ດິນໄທເພື່ອສ້າງລະບົບຖານທັບເປັນແປ້ນຍັນສຳລັບມາຮຸກຮານປະເທດລາວ ແລະ ບັນດາປະເທດໃນອິນດູຈີນ. ພວກເຂົາຍັງໄດ້ໃຊ້ກອງທະຫານຫຸ່ນໄຊ່ງ່ອນເຂົ້າມາຮຸກຮານລາວອີກ, ສົ່ງທີ່ເດີນກົບບັນເຄື່ອນທັບ "ລາມຊອນ ກູລ" ເຂົ້າທາງເລກ ໙ ພາກໃຕ້ຂອງລາວເມື່ອຕົ້ນປີ ໑໙໗໑, ແຕ່ສຸດທ້າຍພວກເຂົາກໍ່ໄດ້ຖືກປະລາໄຊຢ່າງຈົບແສບດັ່ງທີ່ທຸກຄົນໄດ້ຮັບຮູ້ແລ້ວ.

ເມື່ອເປັນແນວນັ້ນ, ມັນເປັນອັນຈະແຈ້ງວ່າ, ໃນຕົວຈິງທຸກການເຄື່ອນໄຫວກໍ່ສົງຄາມຢູ່ໃນລາວແມ່ນອາເມລິກາບັງຄັບບັນຊາໂດຍກົງ ແລະ ອຳນາດການປົກຄອງວຽງຈັນ, ພວກຫຸ່ນໄຊ່ງ່ອນ ແລະ ພວກກຳອຳນາດປະຕິການໄທໄດ້ກາຍເປັນກຸ່ມສຳພັນທະຫານທີ່ເປັນເຄື່ອງມືຂອງອາເມລິກາໃນການຮຸກຮານປະເທດເຮົາ ແລະ ປະ

ເທດຕ່າງໆໃນອິນດູຈີນ.

ສົງຄາມທີ່ຮ້າຍແຮງເປັນພິເສດທີ່ຄັ້ນແຕ່ເດືອນ ໕ ປີ ໑໙໖໔ ເປັນຕົ້ນມາ, ໂດຍສະເພາະຢ່າງຍິ່ງ ແມ່ນນັບແຕ່ ນິກຊອນຂຶ້ນກຳອຳນາດມານີ້, ຈັກກະພັດອາເມລິກາໄດ້ໃຊ້ກອງທັບອາກາດອັນໃຫຍ່ຫລວງມາຖິ້ມລະເບີດຍິງທຳລາຍຢ່າງມີລັກສະນະລ້າງຜານຢູ່ຫລາຍເຂດອັນກວ້າງຂວາງ ໃນປະເທດເຮົາ. ພວກເຂົາໄດ້ໃຊ້ລະເບີດທຸກຊະນິດ, ເຊັ່ນລະເບີດທຳລາຍ, ລະເບີດລູກຫວ່ານ, ລະເບີດນາປານ, ຢາພິດເຄມີເຂັ່ນຂ້າປະຊາຊົນເຮົາ ນັບເປັນພັນໆຄົນ, ທຳລາຍເຮືອນຊານໝູ່ບ້ານນັບເປັນພັນໆແຫ່ງ ແລະ ຕົວເມືອງນ້ອຍໃຫຍ່ ຕັ້ງສິບໆແຫ່ງ, ວັດວາອາຮາມ ແລະ ໂຮງຮຽນເປັນຈຳນວນຫລາຍ, ທຳລາຍໄຮ່ນາຮົ້ວສວນ ແລະ ພູຜາປ່າດົງອັນມີຄຸນຄ່າຄົງຫລາຍໆແຫ່ງ. ຕາມຕົວເລກທີ່ຍັງບໍ່ທັນຄົບຖ້ວນ, ໃນຫລາຍປີທີ່ຜ່ານມາ, ຈຳນວນລະເບີດທີ່ອາເມລິກາຖິ້ມລົງໃສ່ປະເທດເຮົາໄດ້ຂຶ້ນເຖິງ ໓ ລ້ານກວ່າໂຕນ, ທຳລາຍປະເທດຊາດບ້ານເມືອງຂອງພວກເຮົາຢ່າງໜັກໜ່ວງ, ກໍ່ຄວາມເຈັບເປັນລົ້ມຕາຍຕໍ່ປະຊາຊົນເຮົານັບບໍ່ຖ້ວນ. ທຸກການກະທຳຂອງຈັກກະພັດອາເມລິກາເຫລົ່ານັ້ນລ້ວນແຕ່ມີລັກສະນະທຳລາຍເຊື້ອຊາດ, ທຳລາຍສິ່ງທີ່ມີຊີວິດ ແລະ ທຳລາຍທຸກເງື່ອນໄຂຄ້ຳຈູນຊີວິດຢ່າງປ່າເຖື່ອນທີ່ສຸດຕໍ່ຊາດເຮົາ. ອັນນີ້ແມ່ນໂທດກຳລົ້ນຟ້າເຫລືອແຜ່ນດິນທີ່ຈັກກະພັດອາເມລິກາເອົາໃສ່ປະເທດຊາດເຮົາ. ມັນໄດ້ເຮັດໃຫ້ມວນມະນຸດມີຄວາມຄຽດແຄ້ນ ແລະ ກ່າວປະນາມມັນນັບມື້ນັບຮ້າຍແຮງ ແລະ ກໍຍິ່ງເຮັດໃຫ້ນ້ຳໃຈຄຽດແຄ້ນສັດຕູ ແລະ ນ້ຳໃຈຮັກຊາດຂອງປະຊາຊົນເຮົາ ແລະ ບັນດາກຳລັງປະກອບອາວຸດຮັກຊາດນັບມື້ນັບພົ້ນເດືອດຂຶ້ນຕື່ມ.

<u>ທາງດ້ານການເມືອງ:</u> ເຖິງວ່າຈຳເປັນຕ້ອງຍອມຈັດຕັ້ງລັດຖະບານປະສົມແຫ່ງຊາດເມື່ອປີ ໑໙໖໒ ແລະ ໄດ້ໃຫ້ຄຳໝັ້ນສັນຍາຢ່າງເຄັ່ງຂຶມວ່າ ຈະບໍ່ແຊກແຊງໂດຍກົງຫລືໂດຍທາງອ້ອມເຂົ້າກິດຈະການພາຍໃນຂອງລາວກໍຕາມ, ແຕ່ພາຍຫລັງທີ່ລັດຖະບານດັ່ງກ່າວໄດ້ຖືກສ້າງຕັ້ງຂຶ້ນບໍ່ເທົ່າໃດ, ຈັກກະພັດອາເມລິກາກໍໄດ້ໃຊ້ທຸກເລ່ຫລ່ຽມອັນໂຫດຕ້ຽນເພື່ອບີດບ້ອນໜີບຕີ ທຳລາຍ, ແລະ ໂຄ່ນລົ້ມມັນຈົນໄດ້.

ໃນເດືອນ ໔/[illegible]/໑໙໖໓, ຈັກກະພັດອາເມລິກາ ແລະ ລູກມືໄດ້ບົງການຂຶ້ນຕົນກ້າວໜ້າໃນການໃຊ້ມືຊຸ ບາງປ່ານປະເມ, ຄືຂ້າຄາດຕະກຳຕົວຊູຣີ່ທີ່ສຸດຄື ພະນະທ່ານ ກີນີມ ພົນເສນາ, ລັດຖະມົນຕີກະຊວງການຕ່າງປະເທດຊຶ່ງເປັນຜູ້ຕໍ່ສູ້ຢ່າງເດັດດ່ຽວເພື່ອນະໂຍບາຍສັນຕິພາບເປັນກາງ ແລະ ກໍການຄາດຕະກຳການເມືອງຂຶ້ນເປັນລະລອກຢູ່ວຽງຈັນ; ພ້ອມກັນນັ້ນກໍໜີບຮັດ, ຂົ່ມຂູ່, ບີດບ້ອນ, ບັນດາລັດຖະມົນຕີ ແລະ ລັດຖະມົນຕີຊ່ວຍວ່າການຂອງແນວລາວຮັກຊາດ ແລະ ຝ່າຍເປັນກາງຮັກຊາດຢ່າງບ້າລະອາດ, ເຮັດໃຫ້ພາວະອົງປະກອບທີ່ສຳຄັນຂອງລັດຖະບານປະສົມແຫ່ງຊາດເຄື່ອນໄຫວບໍ່ໄດ້ ແລະ ຍ້ອນແນວນັ້ນ ລັດຖະບານປະສົມແຫ່ງຊາດຈຶ່ງອ່ອນເພຍ. ຕໍ່ຈາກນັ້ນ, ກໍໄດ້ການລັດຖະປະຫານທາງທະຫານຂຶ້ນເມື່ອວັນທີ ໑໙/໔/໖໔ ໂຄ່ນລົ້ມລັດຖະບານປະສົມແຫ່ງຊາດ ໓ ຝ່າຍ, ແລ້ວຈັດຕັ້ງອຳນາດການປົກຄອງທີ່ນິຍົມອາເມລິກາຂຶ້ນເພື່ອສືບຕໍ່ປະຕິບັດກົນອຸບາຍຮຸກຮານປະເທດເຮົາ.

ໃນສົມນັ້ນ, ຄຽງຂ້າງກັບອຳນາດການປົກຄອງວຽງຈັນ, ອາເມລິກາໄດ້ສ້າງຕັ້ງລະບົບສຳນັກງານອົງການຕ່າງໆຂອງອາເມລິກາຊຶ່ງລວມມີບັນດາພະແນກການບໍລິຫານ, ເສດຖະກິດ ແລະ ການທະຫານຢ່າງຄົບຖ້ວນ ແລະ ເຊື່ອງໂຕຢູ່ພາຍໃຕ້ສະຖານທູດອາເມລິກາ ແລະ ອົງການ ຢູເຊັດ ເຊິ່ງເບື້ອງແທ້ແມ່ນສຳນັກພົວສຳເລັດລາຊະການຂອງອາເມລິກາປະຈຳລາວ, ແມ່ນກົງຈັກຄອບຄອງລາວເມືອງຂຶ້ນແບບໃໝ່ຂອງອາເມລິກາທີ່ຄອບງຳກົງຈັກບໍລິຫານຂອງຝ່າຍວຽງຈັນ. ອົງການດັ່ງກ່າວນັ້ນຄອບງຳທຸກນະໂຍບາຍພາຍໃນ ແລະ ຕ່າງປະເທດຂອງ

ພະລາຊະອານາຈັກລາວ, ພາຍໃຕ້ການຄອບຄອງແບບເຊື່ອງຫນ້າຂອງອາເມລິການັ້ນ, ປະເທດເຮົາຈຶ່ງພຽງແຕ່ເປັນເອກະລາດທາງຮູບນອກ ແລະແບບປອມແປງເທົ່ານັ້ນ, ແຕ່ ເນື້ອແທ້ໄດ້ກາຍເປັນຫົວເມືອງຂຶ້ນແບບໃຫມ່ຂອງອາເມລິກາ. ຢູ່ໃຕ້ອຳນາດນັ້ນ, ເພື່ອສ້າງ ແລະຂະຫຍາຍຖານທັບຢູ່ໄທ ແລະແກ່ງຖີ່ເອົາໄທເຂົ້າຮັບໃຊ້ແຜນການຮຸກຮານຂອງອາເມລິກາຕໍ່ບັນດາປະເທດໃນອິນດູຈີນ, ອາເມລິກາໄດ້ຍຸຍົງສົ່ງເສີມ ແລະໃຊ້ໄທ ເພື່ອປິດລ້ອມຫນີບຕົງລາວໂດຍກົງ. ດັ່ງນັ້ນ, ບໍ່ພຽງແຕ່ອາເມລິກາໄດ້ເພີ່ມທະວີການຄອບຄອງປະເທດເຮົາ, ແຕ່ຫາກຍັງສ້າງໃຫ້ໄທມີເງື່ອນໄຂອັນສະດວກຫລາຍຢ່າງ ເພື່ອແຜ່ອຳນາດກຳລັງຂອງລັດທິໄທໃຫຍ່ເຂົ້າປະເທດເຮົາ, ພ້ອມກັບອາເມລິກາປິດລ້ອມຫນີບຕົງປະເທດເຮົາ ແລະ ໃຊ້ທຸກວິທີທາງ ເພື່ອແຊກຊຶມ, ກຸກກວນປະເທດເຮົາໃນທຸກດ້ານ.

ນອກຈາກນັ້ນ, ການຊ່ວຍເຫລືອ ຂອງອາເມລິກາ ກໍ່ໄດ້ເຮັດໃຫ້ເສດຖະກິດຂອງປະເທດເຮົາຂຶ້ນກັບອາເມລິກາ, ລາຄາເງິນກີບຕົກຕ່ຳ, ຄ່າຄອງຊີບແພງຂຶ້ນ, ເຮັດໃຫ້ຊີວິດການເປັນຢູ່ຂອງຂ້າລາຊະການ, ທະຫານ ຕຳຫລວດ ແລະປະຊາຊົນເດືອດຮ້ອນ, ວັດທະນະທຳ ແລະສັງຄົມເປື້ອນເປິ. ເມື່ອເບິ່ງລວມແລ້ວ ຈຶ່ງເຫັນແຈ້ງວ່າ, ຕະຫລອດຊົ່ວໄລຍະເວລາ ທີ່ຈັກກະພັດອາເມລິກາມາຮຸກຮານປະເທດເຮົານັ້ນ, ມັນໄດ້ເຮັດໃຫ້ບ້ານເມືອງເຮົາເສັຽຄວາມເປັນເອກະລາດ, ອຳນາດອະທິປະໄຕ, ມັນທຳລາຍຄວາມຖືກຕ້ອງປອງດອງຊາດ ເຮັດໃຫ້ບ້ານເມືອງມີການວຸ່ນວາຍ ຂ້າຟັນລັນແທງກັນບໍ່ເຊົາຈັກເທື່ອ, ປະຊາຊົນບໍ່ມີສິດແຫ່ງຄວາມເປັນມະນຸດ ແລະ ຕົກທຸກໄດ້ຍາກຢ່າງສົມເພດເວທະນາ. ຫມາຍຄວາມວ່າ ປະເທດເຮົາໄດ້ກາຍເປັນຫົວເມືອງຂຶ້ນແບບໃຫມ່ ຂອງຈັກກະພັດອາເມລິກາ.

ຄວາມຈິງຕ່າງໆ ທີ່ກ່າວມານັ້ນ ໄດ້ສະແດງໃຫ້ເຫັນຢ່າງຄັບຖ້ວນວ່າ ຈັກກະພັດອາເມລິກາ ເປັນຜູ້ຮຸກຮານປະເທດເຮົາ, ການແຊກແຊງຮຸກຮານຂອງອາເມລິກາ ແມ່ນສາຍເຫດຂອງຄວາມຈິບເປັນ ລົ້ມຕາຍທຸກຢ່າງ ຂອງປະຊາຊົນເຮົາ, ແມ່ນຕົ້ນຕໍກຳເນີດຂອງສະພາບການອັນຫນັກຫນ່ວງທີ່ສຸດ ທີ່ເກີດຂຶ້ນຢູ່ລາວຕະຫລອດ ໒໐ ປີມານີ້. ຈັກກະພັດອາເມລິກາ ແມ່ນສັດຕູຕົວອັນຕະລາຍທີ່ສຸດ ຂອງປະຊາຊົນເຮົາ.

ແຕ່ນັ້ນເປັນທຳມະດາຢູ່ວ່າ, ພວກປະຕິການຂອງຈັດຊຸມນີ ຂອງຈັກກະພັດອາເມລິກາ ກໍ່ຕ້ອງມີຄວາມຮັບຜິດຊອບຕໍ່ຫນ້າປະເທດຊາດ, ຕໍ່ຫນ້າປະຫວັດສາດ ກ່ຽວກັບໂທດກຳຂາຍຊາດຂອງພວກເຂົາ ແລະສະເດັດເຈົ້າສຸວັນນະພູມາເອງ ກໍ່ຕ້ອງໄດ້ຫາບແບກຄວາມຮັບຜິດຊອບເຊັ່ນດຽວກັນ.

ໃນຖານະຄົນລາວຜູ້ເປັນເຈົ້າຂອງປະເທດ, ເຮັດແນວໃດພວກເຮົາ ຈຶ່ງຈະບໍ່ມີຄວາມຕ່ຳຕ້ຽງຫນ້າ ໃນເມື່ອເຮືອນຊານບ້ານຊ່ອງຖືກທຳລາຍເປົາຕານ, ປະເທດຊາດຖືກເຊື່ອມເສັຽ? ເຮັດແນວໃດພວກເຮົາຈະໄປເບິ່ງລ້າໆໄດ້ ໃນເມື່ອອະທິປະໄຕຂອງປະເທດຊາດ ແລະຜົນປະໂຫຍດຂອງປະຊາຊົນຖືກຢຽບຢ່ຳຍ່ຳຍີແນວນັ້ນ ?

ປະຊາຊົນລາວກໍ່ເຊັ່ນດຽວກັບປະຊາຊົນທັງຫລາຍ ແລະກໍ່ພຸ່ງອ້າຍນ້ອງໄດ້ຕັດສິນໃຈລຸກຂຶ້ນຕໍ່ສູ້ຢ່າງເດັດດ່ຽວຫນຽວແຫນ້ນ ຕ້ານການຮຸກຮານຂອງອາເມລິກາ, ປົກປັກຮັກສາປະເທດຊາດອັນແສນຮັກຂອງຕົນ. ບໍ່ມີຈັກເທື່ອ ຊາດເຮົາຈະຍອມເປັນຂີ້ຂ້າຫນ້າຂັ້ງຂອງອາເມລິກາ, ບໍ່ມີຈັກເທື່ອປະຊາຊົນເຮົາຈະຍອມກົ້ມຫົວຕໍ່ກຳລັງແຮງດ້ອຍລະເບີດລູກປືນຂອງສັດຕູ. ບັນດາໂທດກຳອັນປ່າເຖື່ອນຂອງຈັກກະພັດອາເມລິກາ ແລະລູກນີ້ ຍິ່ງເຮັດໃຫ້ນ້ຳໃ[...] ຄຽດແຄ້ນຂອງປະຊາຊົນເຮົາຕໍ່ສັດຕູທີ່ປຸ້ນບ້ານ, ຊິງເມືອງ ແລະຕໍ່ພວກຂາຍຊາດພຸ່ງຂຶ້ນສູງລະດັບສູງ. ເພື່ອເອກະລາ[...] ສັນຕິພາບ ແລະຄວາມເປັນກາງອັນແທ້ຈິງ, ເພື່ອຜົນປະໂຫຍດແຫ່ງຊາດຂອງຕົນ ແລະດ້ວຍພາລະກິດຂອງພວກເຮົາ ທີ່ມີຕໍ່ສັນຕິພາບ ແລະ ຄວາມປອດໄພ ຂອງບັນດາປະເທດ ໃນອິນດູຈີນ, ອາຊີ ອາຄະເນ ແລະໃນໂລກ, ປວງຊົນລາວທັງຊາດ ໄດ້ສາມັກຄີອ້ອມຂ້າງ ກຸ່ມກ້ອນສາມັກຄີສູຣິບ ລະຫວ່າງແນວລາວຮັກຊາດກັບກຳລັງເປັນ

ກາງຮັກຊາດ, ສາມັກຄີຢ່າງແໜ້ນແຟ້ນກັບປະຊາຊົນທຸກເຜົ່າ ແລະກຳພູຊາອ້າຍນ້ອງດຳເນີນການຕໍ່ຕ້ານຢ່າງເດັດດ່ຽວທຸກຮູບແບບ, ຕັດສິນໃຈຕໍ່ສູ້ເພື່ອປົກປັກຮັກສາເອກະລາດ, ອະທິປະໄຕຂອງປະເທດຊາດ, ປົກປັກຮັກສາເຂດແດນ, ທັບມ້າງທຸກການກະທຳສົງຄາມທາງທະຫານຂອງຈັກກະພັດອາເມລິກາ ແລະລູກມື ໃຫ້ມຸ່ນທະລາຍລົງ, ໂນ້ມບາດຄ້ອນລົງໂຫດຢ່າງເໝາະສົມໃສ່ຫົວຂອງພວກເຂົາ. ຕາມໄລຍະແຫ່ງການຕໍ່ສູ້ກູ້ຊາດຕ້ານອາເມລິກາ, ບັນດາກຳລັງຮັກຊາດໄດ້ຮັບໄຊຊະນະອັນໃຫຍ່ຫລວງທີ່ສຸດ ແລະໄດ້ຮັບການຫລໍ່ຫລອມໃຫ້ເຕີບໃຫຍ່ຂຶ້ນໃນທຸກດ້ານ, ປະຈຸບັນນີ້ ພວມຢືນຢູ່ໃນທ່າມີໄຊ, ທາເປັນເຈົ້າການຢູ່ໃນທົ່ວສະໜາມຮົບ; ເຂດກວດກາ ຂອງບັນດາກຳລັງຮັກຊາດກໍໄດ້ຖືກຮັກສາໄວ້ຢ່າງແໜ້ນໜາ, ໄດ້ຮັບການສ້າງສາ ແລະປັບປຸງໃຫ້ເຂັ້ມແຂງກວ່າເວລາໃດໝົດ ແລະກໍເປັນສິ່ງທີ່ເຮັດໃຫ້ປະຊາຊົນລາວທົ່ວປະເທດຮູ້ສຶກທະນົງອົງອາດ. ຍິ່ງກວ່ານັ້ນ, ໄຊຊະນະຂອງຊາດເຮົາ ໃນພາລະກິດອັນເສັ້ນຫ້າວຕ້ານອາເມລິກາເພື່ອກູ້ຊາດ ໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າ ໃນໄຊຊະນະລວມອັນຍິ່ງໃຫຍ່ທີ່ສຸດຂອງສາມຊາດໃນອິນດູຈີນ ທີ່ໄດ້ພ້ອມກັນຕໍ່ສູ້ ພ້ອມກັນເອົາໄຊຊະນະອາເມລິກາ ແລະສ້າງປະເທດຊາດ ຕາມແນວທາງສະເພາະຂອງແຕ່ລະຊາດໃຫລາວ. ນັ້ນກໍແມ່ນດ້ານໜຶ່ງຂອງສະພາບການຕົວຈິງຢູ່ລາວໃນປະຈຸບັນ. ຖ້າຫາກບໍ່ເຫັນໄດ້ແນວນັ້ນ ຫລືຫາກປະຕິເສດຄວາມຈິງອັນນັ້ນ ກໍຈະບໍ່ແກ້ໄຂບັນຫາລາວປະຈຸບັນໄດ້ຢ່າງຖືກຕ້ອງ.

ຈາກສະພາບການຕົວຈິງດັ່ງກ່າວຂ້າງເທິງ, ອາດຈະສະຫລຸບເປັນຫລັກການໃຫ້ແກ່ການແກ້ໄຂບັນຫາລາວດັ່ງ

ອາເມລິກາໄດ້ທຳລາຍສັນຍາເຊີແນວກ່ຽວກັບລາວ, ໄດ້ໂຄ່ນລົ້ມລັດຖະບານປະສົມແຫ່ງຊາດທັງສອງຊຸດ ແລະ ໄດ້ດຳເນີນການແຊກແຊງຮຸກຮານພາຍໃຕ້ຫລາຍຮູບການ ແລະ ໄດ້ດຳເນີນສົງຄາມທຳລາຍປະເທດເຮົາ; ເພື່ອນີ້ ຝ່າຍວຽງຈັນກໍໄດ້ເຮັດຕາມການໜີບເຕັ້ງຂອງອາເມລິກາ, ໄດ້ເຮັດໃຫ້ອຳນາດການປົກຄອງວຽງຈັນກາຍເປັນອຳນາດການປົກຄອງ ທີ່ນິຍົມອາເມລິກາ, ປະຕິບັດທຸກກົນອຸບາຍ ແລະ ແຜນການຮຸກຮານ ຂອງອາເມລິກາ.

ສະນັ້ນ ເພື່ອແກ້ໄຂບັນຫາລາວ :

+ ອາເມລິກາຕ້ອງຢຸດເຊົາສົງຄາມ, ຢຸດເຊົາທຸກການຕິດພັນທາງທະຫານ ແລະທຸກການແຊກແຊງເຂົ້າລາວ, ຕ້ອງເຄົາລົບອະທິປະໄຕ, ເອກະລາດ, ຄວາມເປັນກາງ, ເອກະພາບ ແລະຜືນແຜ່ນດິນອັນຄົບຖ້ວນຂອງລາວ ດັ່ງສັນຍາເຊີແນວປີ ໑໙໖໒ ກ່ຽວກັບລາວ ໄດ້ລະບຸໄວ້ ແລະ ດັ່ງທີ່ອາເມລິກາເອງ ກໍໄດ້ໃຫ້ຄຳໝັ້ນສັນຍາວ່າ ຈະເຄົາລົບນັບຖືນັ້ນ.

+ ອາເມລິກາຕ້ອງເຄົາລົບສິດຕົກລົງດ້ວຍຕົນເອງ ຂອງປະຊາຊົນລາວ, ກິດການພາຍໃນຂອງລາວຕ້ອງໃຫ້ຄົນລາວແກ້ໄຂນຳກັນ ບົນພື້ນຖານສະພາບການຕົວຈິງປະຈຸບັນຢູ່ລາວ, ທາງຝ່າຍວຽງຈັນ ຕ້ອງປະລະນະໂຍບາຍເດີນຕາມອາເມລິກາ. ບັນດາຝ່າຍລາວທີ່ກ່ຽວຂ້ອງ ຈະຈັດຕັ້ງລັດຖະບານປະສົມແຫ່ງຊາດຊຸດໃໝ່ ແລະແກ້ໄຂບັນຫາທີ່ວາງອອກໃໝ່ໃຫ້ເໝາະສົມກັບສະພາບການໃນປະຈຸບັນ. ເປັນພື້ນຖານໃຫ້ແກ່ກິດການຟື້ນຟູສັນຕິພາບ. ປະຕິບັດຄວາມຖືກຕ້ອງປອງດອງ ແລະເອກະພາບຂອງຊາດ ຢ່າງແທ້ຈິງ ແລະຢ່າງເດັດຂາດ.

ສິ່ງທີ່ໄດ້ເວົ້າມາເທິງນີ້ ແມ່ນຄວາມຈິງ ຂອງສະພາບການຢູ່ລາວ ແລະບັນຫາຕ່າງໆທີ່ຈະຕ້ອງວາງອອກເພື່ອພ້ອມກັນແກ້ໄຂ. ຝ່າຍບັນດາກຳລັງຮັກຊາດລາວ ເຊິ່ງຍາມໃດກໍຍຶດຖືຜົນປະໂຫຍດຂອງຊາດ ຂຶ້ນສູງກວ່າສິ່ງອື່ນໝົດ ແມ່ນຕັດສິນໃຈຕໍ່ສູ້ຕ້ານຈັກກະພັດອາເມລິກາຜູ້ຮຸກຮານຢ່າງເດັດດ່ຽວທຸກຮູບແບບ, ຍາດເອົາ ແລະປົກປັກຮັກສາເອກະລາດ, ປະຊາທິປະໄຕ, ສັນຕິພາບ, ເປັນກາງ ແລະ ເອກະພາບ ມາໃຫ້ແກ່ປະເທດຊາດ.

ປະຈຸບັນນີ້ເຖິງວ່າ ບັນດາກຳລັງຮັກຊາດພວມຢູ່ໃນທ່ານີໄຊ, ທ່າເປັນເຈົ້າການ ແຕ່ຍັງຍຶດໝັ້ນຢູ່ໃນພື້ນປະໂຫຍດອັນສູງສົ່ງຂອງປະເທດຊາດ, ເພື່ອຕອບສະໜອງຄວາມມຸ່ງມາດປາຖະໜາອັນແຮງກ້າ ທີ່ຢາກໄດ້ເອກະລາດ ແລະ ສັນຕິພາບອັນແທ້ຈິງ ມາສູ່ທຸກຊຸມຊົນໃນທົ່ວປະເທດ, ພວກຂ້າພະເຈົ້າຍັງໄດ້ຮັກສາຫລັກໝັ້ນ ແລະ ເຈຕະນາດີໃນການແກ້ໄຂບັນຫາລາວດ້ວຍສັນຕິ ໂດຍຜ່ານການເຈລະຈາລະຫວ່າງຝ່າຍລາວທີ່ກ່ຽວຂ້ອງ ເຊິ່ງສະແດງອອກໃນວິທີການການເມືອງ ໕ ຂໍ້ ທີ່ພວກຂ້າພະເຈົ້າໄດ້ປະກາດອອກໃນວັນທີ ໖/໓/໑໙໗໐ ແລະ ໃນຈົດໝາຍ ສະບັບລົງວັນທີ ໒໔/໗/໑໙໗໒ ຂອງສະເດັດເຈົ້າ ສຸພານຸວົງ ເພິ່ນກໍ່ໄດ້ຍົກເອົາເປັນພື້ນຖານປຶກສາຫາລືກັນ.

ໃນວາລະປະຊຸມນີ້, ຕາງໜ້າໃຫ້ຄະນະຜູ້ແທນບັນດາກຳລັງຮັກຊາດລາວ, <u>ຂ້າພະເຈົ້າ ຂໍອະທິບາຍເນື້ອໃນລະອຽດ ຂອງວິທີການການເມືອງ ໕ ຂໍ້ ດັ່ງຕໍ່ໄປນີ້</u> :

໑- ເພື່ອຟື້ນຟູ ແລະ ຮັກສາສັນຕິພາບຢູ່ລາວຢ່າງຍາວນານ, ອາເມລິກາຕ້ອງເຄົາລົບຢ່າງແທ້ຈິງຕໍ່ອະທິປະໄຕ, ເອກະລາດ, ຄວາມເປັນກາງ ເອກະພາບ ແລະ ດິນແດນອັນຄົບຖ້ວນຂອງລາວ ດັ່ງສັນຍາເຈນີວປີ ໑໙໖໒ ກ່ຽວກັບລາວໄດ້ລະບຸໄວ້, ຢຸດເຊົາທຸກການແຊກແຊງເຂົ້າວຽກງານພາຍໃນຂອງລາວ ບໍ່ວ່າພາຍໃຕ້ຮູບການໃດ ໆ.

໒- ອາເມລິກາຕ້ອງຢຸດເຊົາສົງຄາມຮຸກຮານລາວ, ຢຸດເຊົາການຖິ້ມລະເບີດ, ຢຸດເຊົາທຸກການເຄື່ອນໄຫວທາງທະຫານ ແລະ ການກ່ຽວພັນທາງທະຫານ ຂອງອາເມລິກາຢູ່ລາວ.

໓- ອາເມລິກາຕ້ອງຖອນທີ່ປຶກສາ, ພະນັກງານທະຫານ ພ້ອມທັງພະນັກງານເທັກນິກທາງທະຫານຂອງອາເມລິກາ ແລະ ບັນດາປະເທດໃນຝ່າຍອາເມລິກາ, ຕ້ອງຖອນກອງທະຫານຫລວງ ແລະທະຫານນອກລະບຽບຂອງໄທ, ພ້ອມທັງອາວຸດ ແລະອຸປະກອນສົງຄາມຕ່າງໆ ຂອງອາເມລິກາ ອອກຈາກລາວໃຫ້ໝົດ; ຕ້ອງລົບລ້າງທຸກການຈັດຕັ້ງທະຫານ ແລະ ເຄື່ອງທະຫານ ຂອງອາເມລິກາ ແລະໄທຢູ່ລາວ; ຕ້ອງລົບລ້າງກອງທະຫານພິເສດ ເຊິ່ງແມ່ນອາເມລິກາຈັດຕັ້ງຂຶ້ນ, ອົບຮົມ, ປະກອບອາວຸດ, ເຄື່ອງຂອງລ້ຽງເກືອ ແລະ ບັນຊາໂດຍກົງນັ້ນ ໃນທັນທີ.

໔- ອາເມລິກາຕ້ອງເລີກລ້າງທຸກຖານທັບ, ທຸກທີ່ຕັ້ງ ແລະພື້ນຖານທາງທະຫານ ຂອງອາເມລິກາ ແລະ ໄທຢູ່ໃນແຜ່ນດິນລາວ, ຕ້ອງຢຸດເຊົາ ການໃຊ້ຖານທັບທາງທະຫານ ແລະທຸກກຳລັງ ຂອງອາເມລິກາຢູ່ໄທ ແລະ ກອງທະຫານໄທ ເພື່ອແຊກແຊງ ແລະ ຮຸກຮານລາວ.

໕- ອາເມລິກາຕ້ອງຮັບຜິດຊອບທັງໝົດ ຕໍ່ການເສັຽຫາຍທຸກຢ່າງ ທີ່ເນື່ອງມາຈາກສົງຄາມຮຸກຮານ, ເປັນຕົ້ນແມ່ນຍ້ອນສົງຄາມດ້ວຍກອງທັບອາກາດຂອງອາເມລິກາຕັ້ງແຕ່ປີ ໑໙໖໔ ເຖິງປະຈຸບັນ; ອາເມລິກາ ຕ້ອງຫາບແບກທຸກການໃຊ້ຈ່າຍເພື່ອປົວແປງບາດແຜສົງຄາມ ຊຶ່ງແມ່ນອາເມລິກາເປັນຜູ້ກໍ່ຂຶ້ນຢູ່ລາວ.

໖- <u>ເພື່ອເຮັດໃຫ້ປະເທດລາວ ກາຍເປັນປະເທດເອກະລາດ, ເປັນກາງຢ່າງແທ້ຈິງ</u>,

ປະຕິບັດນະໂຍບາຍຕ່າງປະເທດສັນຕິພາບ, ເປັນກາງ ກໍຕ້ອງຕາມຖະແຫລງການ ກ່ຽວກັບຄວາມເປັນກາງຂອງລາວ ລົງວັນທີ ໙/໗/໑໙໖໒ ເຊິ່ງກອງປະຊຸມເຈນີວປີ ໑໙໖໒ ກ່ຽວກັບລາວໄດ້ຮັບຮູ້ ແລະ ບັນທຶກໄວ້.

ຕາມສັນຍາດັ່ງກ່າວ, ພະລາຊະອານາຈັກລາວ ບໍ່ເຂົ້າຮ່ວມກຸ່ມສຳພັນທະຫານກັບຕ່າງປະເທດ, ບໍ່ຮັບຮູ້ຄວາມອາລັກຂາບໍ່ວ່າ ຂອງກຸ່ມສຳພັນທະຫານໃດໆ, ບໍ່ອະນຸຍາດໃຫ້ປະເທດໃດມີຖານທັບທະຫານ ແລະ ພະນັກງານທະຫານຢູ່ບົນພື້ນແຜ່ນດິນລາວຫລືນຳເອົາອາວຸດຍຸດທະພັນ ແລະອຸປະກອນສົງຄາມອື່ນໆ ເຂົ້າມາລາວ ບໍ່ວ່າພາຍໃຕ້ຮູບການໃດໆ. ເພາະສະນັ້ນຕ້ອງ :

ກ- ລົບລ້າງທຸກສັນຍາ ແລະຂໍ້ຕົກລົງທີ່ມີລັກສະນະທາງທະຫານ ຫລືວ່າລັກສະນະອື່ນໃດ ທີ່ຂັດຕໍ່ຄວາມເປັນກາງ ຂອງພະລາຊະອານາຈັກລາວ, ພະລາຊະອານາຈັກລາວຢືນຢັນອີກເທື່ອໜຶ່ງວ່າ ບໍ່ຮັບຮູ້ການຄວາມອາລັກຂາ ຂອງປະເທດມະຫາອຳນາດໃດໆ, ຫລື ກຸ່ມສຳພັນທະຫານໃດໆ, ເປັນຕົ້ນແມ່ນ ກຸ່ມ ຊີອາໂຕ ເຊິ່ງແມ່ນ ອາເມລິກາ ເປັນຜູ້ຕັ້ງຂຶ້ນ.

ຂ- ພະລາຊະອານາຈັກລາວຮັກສາ ແລະຂະຫຍາຍສາຍສຳພັນ ກັບປະເທດຕ່າງໆ ຕາມຫລັກການ ໕ ປະການ ຢູ່ຮ່ວມກັນໂດຍສັນຕິ ໂດຍບໍ່ຈຳແນກລະບອບການເມືອງ ແລະສັງຄົມ; ຮັກສາ ແລະຂະຫຍາຍການພົວພັນຮ່ວມໄມ້ຮ່ວມມືທາງດ້ານເສດຖະກິດ ແລະ ວັດທະນະທຳ ກັບທຸກປະເທດ ບົນຫລັກການສະເໝີພາບ ແລະຕ່າງຝ່າຍຕ່າງມີຜົນ; ຮັບເອົາການຊ່ວຍເຫລືອທາງເສດຖະກິດ ແລະເທັກນິກ ຈາກທຸກປະເທດ ລວມທັງອາເມລິກາ ໂດຍບໍ່ມີການຜູກມັດທາງການເມືອງໃດ ໆ.

ຄ- ສະເພາະບັນດາປະເທດໃນອິນດູຈີນ, ພະລາຊະອານາຈັກລາວຂະຫຍາຍການພົວພັນມິດສະພາບອັນດີງາມ ຖານເພື່ອນບ້ານໃກ້ຄຽງ ບົນຫລັກການ ໕ ປະການ ຢູ່ຮ່ວມກັນໂດຍສັນຕິ ແລະບັນດາຫລັກການ ຂອງສັນຍາເຈນີວປີ ໑໙໕໔ ກ່ຽວກັບອິນດູຈີນ ແລະ ສັນຍາເຈນີວປີ ໑໙໖໒ ກ່ຽວກັບລາວ ເພື່ອພ້ອມກັນປົກປັກຮັກສາ ແລະສ້າງສາປະເທດຊາດ ຕາມແນວທາງສະເພາະ ຂອງແຕ່ລະປະເທດ.

ງ- ບັນຫາຕ່າງໆທີ່ພົວພັນລະຫວ່າງລາວກັບບັນດາປະເທດໃນອິນດູຈີນ ຈະແມ່ນລາວ ແລະບັນດາປະເທດເຫລົ່ານັ້ນ ປຶກສາຫາລືແກ້ໄຂເອົາເອງ ບົນພື້ນຖານສະເໝີພາບ, ເຄົາລົບເອກະລາດ, ອະທິປະໄຕ, ເອກະພາບ ແລະ ຜືນແຜ່ນດິນອັນຄົບຖ້ວນ ຂອງແຕ່ລະປະເທດ, ບົນຈິດໃຈເຂົ້າໃຈ ແລະ ຊ່ວຍເຫລືອຊຶ່ງກັນ ແລະ ກັນ, ໂດຍບໍ່ໃຫ້ມີການແຊກແຊງ ຂອງປະເທດອື່ນ.

ຈ- ເພື່ອແກ້ໄຂບັນຫາຕ່າງໆ ທີ່ພົວພັນລະຫວ່າງບັນດາຝ່າຍ, ກ້າວໄປເຖິງປະຕິບັດ <u>ຄວາມຄືດອງປອງດອງ, ແລະ ເອກະພາບແຫ່ງຊາດ</u> ເຮັດໃຫ້ພົນລະເມືອງລາວທຸກຄົນ ລ້ວນແຕ່ມີເງື່ອນໄຂ ພ້ອມກັນປະກອບເຫື່ອແຮງສ້າງສາປະເທດຊາດ ເອກະລາດ, ປະຊາທິປະໄຕ ແລະວັດທະນາຖາວອນ :

ກ- ບົນພື້ນຖານສິດເສລີພາບ ປະຊາທິປະໄຕຂອງປະຊາຊົນ ທີ່ໄດ້ປະກາດອອກ ແລະ ປະຕິບັດ, ແລະບົນພື້ນຖານລັດຖະທຳມະນູນ ແລະ ກົດໝາຍເລືອກຕັ້ງ ທີ່ໄດ້ຮັບການປັບປຸງແກ້ໄຂ ໃຫ້ເໝາະກັບສະພາບການປະຈຸບັນ, ຕ້ອງດຳເນີນການເລືອກຕັ້ງຢ່າງເສລີພາບ ປະຊາທິປະໄຕ, ເລືອກຕັ້ງສະພາ ແລະ ລັດຖະບານປະສົມທີ່ເປັນທາງການ ເຊິ່ງເປັນຕົວແທນຢ່າງແທ້ຈິງ ໃຫ້ແກ່ປະຊາຊົນລາວບັນດາຊົນຊາດ, ສ້າງ ປະເທດລາວ ໃຫ້ເປັນປະເທດ ສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເປັນກາງ, ເອກະພາບ ແລະ ວັດທະນາຖາວອນ.

ບົນຈິດໃຈເຄົາລົບ ພະລາຊະບັນລັງ, ສະເພາະໜ້ານີ້ ບັນດາຝ່າຍລາວທີ່ກ່ຽວຂ້ອງ ຈັດຕັ້ງລັດຖະບານປະສົມຊົ່ວຄາວແຫ່ງຊາດຊຸດໃໝ່ ແລະຈັດຕັ້ງສະພາປະສົມການເມືອງ ເພື່ອແກ້ໄຂວຽກງານຕ່າງໆ.

ຂ- ລັດຖະບານປະສົມຊົ່ວຄາວແຫ່ງຊາດຊຸດໃໝ່ ທີ່ໄດ້ຈັດຕັ້ງຂຶ້ນ ຕາມລະບຽບການພິເສດ, ປະກອບດ້ວຍ ພາກສ່ວນຕ່າງໆ ເທົ່າທຽມກັນ ດັ່ງລຸ່ມນີ້ :

- ແນວລາວຮັກຊາດ.

- ບັນດາກຳລັງເປັນກາງຮັກຊາດ ແລະ ບັນດາຕົວຊົງຄຸນນະວຸດທິ ປັນຍາຊົນຕ່າງໆ ທີ່ເຫັນດີເຫັນພ້ອມນຳ ສັນຕິພາບ, ເອກະລາດ ແລະ ຄວາມເປັນກາງ.

- ແລະ ຝ່າຍຂວາ ວຽງຈັນ.

ລັດຖະບານປະສົມຊົ່ວຄາວແຫ່ງຊາດ ມີໂຄງການການເມືອງໃໝ່ ແລະ ກົງຈັກຊ່ວຍວຽກໃໝ່ ທີ່ໄດ້ຮັບການເຫັນດີຕົກລົງກັນລະຫວ່າງຝ່າຍທີ່ກ່ຽວຂ້ອງ ເພື່ອປະຕິບັດພາລະໜ້າທີ່ດັ່ງຕໍ່ໄປນີ້ :

ພົວພັນຕິດຕໍ່ກັບຕ່າງປະເທດ, ຮັກສາສັນຕິພາບ ແລະ ປະຕິບັດບັນດາສັນຍາທີ່ໄດ້ເຊັນກັນລະຫວ່າງຝ່າຍຕ່າງໆ; ປະກາດໃຊ້ ແລະ ປະຕິບັດສິດເສລີພາບ ປະຊາທິປະໄຕຂອງປະຊາຊົນ, ຮັບເອົາການຊ່ວຍເຫຼືອ ແລະແບ່ງປັນຂອງຊ່ວຍເຫຼືອທີ່ປະເທດຕ່າງໆຊ່ວຍລາວ, ສົມທົບກັບສະພາປະສົມການເມືອງກຽມການເລືອກຕັ້ງທີ່ມີເສລີພາບ, ປະຊາທິປະໄຕຢ່າງແທ້ຈິງ, ເຮັດໃຫ້ປະເທດຊາດເປັນເອກະພາບ.

ຄ- ສະພາປະສົມການເມືອງເປັນສັນຍາລັກແຫ່ງຈິດໃຈເອກະພາບແຫ່ງຊາດ, ເປັນອົງການຮັບຜິດຊອບຊຸກຍູ້ຄວາມປອງດອງ ແລະ ຄວາມເປັນເອກະພາບແຫ່ງຊາດ. ສະພາດັ່ງກ່າວ ປະກອບດ້ວຍຕົວແທນ ຂອງບັນດາຝ່າຍທີ່ກ່ຽວຂ້ອງ, ຕົວຮັກຊາດທັງຍິງ ແລະຊາຍ ທີ່ຕາງໜ້າໃຫ້ບັນດາຊົນຊາດ, ສາສະໜາ, ຊົນຄົນ ແລະຕົວຊົງຄຸນວຸດທິ ປັນຍາຊົນອື່ນໆ ໃນທົ່ວປະເທດ ເຊິ່ງບັນດາຝ່າຍທີ່ກ່ຽວຂ້ອງເຫັນດີນຳກັນ.

ເພື່ອກ້າວໄປເຖິງການປະຕິບັດຄວາມຖືກຕ້ອງປອງດອງ ແລະເອກະພາບແຫ່ງຊາດ, ສະພາປະສົມການເມືອງ ຈະມີການດັດແປງກົດໝາຍ ແລະລະບຽບການເລືອກຕັ້ງ ໃຫ້ມີເສລີພາບ ປະຊາທິປະໄຕແທ້ຈິງ, ເພື່ອເລືອກຕັ້ງສະພາ ແລະ ຈັດຕັ້ງລັດຖະບານປະສົມແຫ່ງຊາດເປັນທາງການ, ເປັນຕົວແທນຂອງປະຊາຊົນ ບັນດາຊົນຊາດລາວ.

ງ- ບັນດາຝ່າຍລາວທີ່ກ່ຽວຂ້ອງ ຈະຕົກລົງກັນກ່ຽວກັບ ບັນດາຂໍ້ກຳນົດຮັບປະກັນຄວາມປອດໄພໃຫ້ບ່ອນຕັ້ງຂອງລັດຖະບານປະສົມ ແລະ ສະພາປະສົມການເມືອງ, ຕ້ານທຸກການທຳລາຍ ຫຼື ການຫຼິ້ນຕົວ ບໍ່ວ່າຈະມາຈາກກຳລັງໃດ ຢູ່ພາຍໃນ ຫຼື ນອກປະເທດ ເພື່ອໃຫ້ລັດຖະບານປະສົມແຫ່ງຊາດຊົ່ວຄາວ ແລະສະພາປະສົມການເມືອງ ມີການເຄື່ອນໄຫວ ໄດ້ຢ່າງມີປະສິດທິຜົນ.

໔- <u>ເພື່ອຮັບປະກັນຄວາມຍຸຕິທຳ ແລະຄວາມສະຫງົບ</u> ໃຫ້ແກ່ພົນລະເມືອງລາວທຸກຄົນ ໂດຍບໍ່ຈຳແນກບ່ອນເກົ່າເກີດ ຫຼື ທ່າອ່ຽງການເມືອງ ແລະ ກໍ່ສ້າງ ແລະ ປັບປຸງຈິດໃຈຖືກຕ້ອງປອງດອງ ແລະ ເອກະພາບແຫ່ງຊາດ ເປັນແຕ່ລະກ້າວ :

ກ- ຝ່າຍຕ່າງໆ ໃຫ້ຄຳໝັ້ນສັນຍາວ່າ ຈະບໍ່ມີການປະພຶດຈຳແນກແກ້ແຄ້ນ ຕໍ່ບັນດາຕົວຄົນທີ່ໄດ້ຮ່ວມມືກັບຝ່າຍອື່ນ ໃນສະໄໝສົງຄາມ, ຝ່າຍວຽງຈັນ ຕ້ອງຍຸບເລີກ ບັນດາເຂດອົບພະຍົບຫຼົບໄພ ແລະສົ່ງປະຊາຊົນທີ່ໄດ້ຖືກບີບບັງຄັບ ໃຫ້ພັດພາກຈາກບ້ານເກີດເມືອງນອນຂອງຕົນ ກັບຄືນສູ່ພູມລຳເນົາເດີມ ແລະຕ້ອງໃຊ້ຄ່າເສຍຫາຍທຸກຢ່າງ ໃຫ້ແກ່ເຂົາເຈົ້າ.

ຂ- ລັດຖະບານປະສົມຊົ່ວຄາວແຫ່ງຊາດ ຈະຮັບປະກັນຢ່າງເດັດຂາດ ກ່ຽວກັບການປະຕິບັດສິດ

ເສລີພາບປະຊາທິປະໄຕທຸກຢ່າງໃຫ້ແກ່ປະຊາຊົນ ແລະ ລົບລ້າງທຸກຂໍ້ບັງຄັບ, ທຸກລະບຽບການ ແລະ ທຸກການຈັດຕັ້ງ ທີ່ຂັດກັບສິດເສລີພາບ ປະຊາທິປະໄຕຕ່າງໆ ດັ່ງກ່າວ.

ຄ- ຊຸກຍູ້ການສ້າງສາເພື່ອຟື້ນຟູທຸກດ້ານຢ່າງເປັນປົກກະຕິລະຫວ່າງສອງເຂດ, ສ້າງເງື່ອນໄຂອັນສະດວກ ໃຫ້ແກ່ປະຊາຊົນໃນການໄປມາຫາກິນຄ້າຂາຍ, ຢ້ຽມຢາມຖາມຂ່າວຊຶ່ງກັນແລະກັນ, ແລກປ່ຽນຈົດໝາຍຂ່າວຄາວ, ວັດທະນະທຳ ແລະອື່ນໆ, ເພື່ອເຮັດໃຫ້ປະເທດຊາດບ້ານເມືອງເປັນເອກະພາບໂດຍໄວ ໂດຍຜ່ານການເຈລະຈາລະຫວ່າງບັນດາຝ່າຍທີ່ກ່ຽວຂ້ອງ ບົນຫຼັກການສະເໝີພາບ ແລະປອງດອງຊາດ.

ງ- <u>ເພື່ອຍຸດຕິສົງຄາມ ສ້າງເງື່ອນໄຂອັນສະດວກໃຫ້ແກ່ການປະຕິບັດ ບັນດາຂໍ້ຕ່າງໆ ທີ່ບັນດາຝ່າຍ ໄດ້ຕົກລົງກັນແລ້ວນັ້ນ</u> :

ກ- ບັນດາຝ່າຍທີ່ເປັນປໍລະປັກກັນ ອອກຄຳສັ່ງໃຫ້ທຸກກຳລັງທະຫານ ແລະກຳລັງທະຫານນອກລະບຽບ ທີ່ຢູ່ພາຍໃຕ້ການບັງຄັບບັນຊາຂອງຕົນ, ຫຼື ສຳພັນກັບຕົນ ປະຕິບັດການຢຸດຍິງກັນທີ່ຢ່າງເຂັ້ມງວດ ແລະພ້ອມກັນ ໃນທົ່ວດິນແດນລາວ ດັ່ງນີ້ :

- ອາເມລິກາຢຸດເຊົາການຖິ້ມລະເບີດພ້ອມໆກັບຢຸດເຊົາທຸກການເຄື່ອນໄຫວທາງການທະຫານ ຂອງອາເມລິກາ ແລະບັນດາປະເທດທີ່ຂຶ້ນກັບຝ່າຍອາເມລິກາຢູ່ລາວຢ່າງສິ້ນເຊີງ ແລະຕະຫຼອດການ.

- ບັນດາກຳລັງປະກອບອາວຸດລາວຢຸດເຊົາທຸກການເຄື່ອນໄຫວທາງການທະຫານ ທີ່ເປັນປໍລະປັກຕໍ່ກັນທາງໜ້າດິນ ແລະ ທາງອາກາດ, ຢຸດເຊົາທຸກການກະທຳ ທີ່ເປັນການລ່ວງລ້ຳ ຫຼື ບຸກຍຶດເຂດຄວບຄຸມຊຶ່ງກັນ ຂອງຝ່າຍນັ້ນ ຫຼື ຝ່າຍນີ້.

ຂ- ໃນພ້ອມທີ່ການຢຸດຍິງໄດ້ມີຜົນສັກສິດນັ້ນ, ບັນດາຝ່າຍທີ່ກ່ຽວຂ້ອງແລກປ່ຽນຊະເລີຍ ທະຫານ ແລະ ປະຊາຊົນທັງນັ້ນ ທີ່ຖືກຈັບ ບໍ່ວ່າຈະເປັນສັນຊາດໃດກໍ່ຕາມ ໃຫ້ແກ່ກັນ ຕາມລະບຽບການ ທີ່ບັນດາຝ່າຍໄດ້ຕົກລົງກັນ. ການແລກປ່ຽນຊະເລີຍດັ່ງກ່າວ ຈະເລີ່ມຕົ້ນ ແລະ ສິ້ນສຸດລົງພ້ອມໆ ກັນກັບກຳນົດເວລາຖອນທີ່ປຶກສາ, ພະນັກງານທະຫານ ຂອງອາເມລິກາ ແລະ ຂອງບັນດາປະເທດທີ່ຂຶ້ນກັບ ຝ່າຍອາເມລິກາ ແລະ ທະຫານໄທ ອອກຈາກລາວ.

ຄ- ບັນດາຝ່າຍຈະຕົກລົງຈັດຕັ້ງອົງການປະສົມ ເພື່ອກວດກາ ແລະຄວບຄຸມ ການສະຫງົບເສິກ ແລະ ປະຕິບັດ ຂໍ້ຕ່າງໆ ທີ່ໄດ້ເຊັນກັນ ລະຫວ່າງຝ່າຍລາວທີ່ກ່ຽວຂ້ອງ ໂດຍມີການຊ່ວຍເຫຼືອ ຂອງຄະນະກຳມະການສາກົນ ໃນຂອບເຂດໜ້າທີ່ ທີ່ໄດ້ລະບຸໄວ້ ໃນສັນຍາເຊີແນວປີ ໑໙໖໒ ກ່ຽວກັບລາວ .

ຮຽນ ບັນດາທ່ານ !

ເນື້ອໃນໃຈຄວາມຂອງວິທີການການເມືອງ ໕ ຂໍ້ ດັ່ງກ່າວ ແມ່ນລະບົບໜຶ່ງ ທີ່ເປັນເອກະພາບ ມີການພົວພັນເຊິ່ງກັນ ແລະກັນຢ່າງແໜ້ນແຟ້ນ ທີ່ບໍ່ສາມາດຈະຕັດແຍກອອກຈາກກັນ, ແນໃສ່ແກ້ໄຂກິດການ ທຸກດ້ານ ຂອງບັນຫາລາວທັງທາງພາຍໃນ ແລະຕ່າງປະເທດ, ທັງທາງການເມືອງ ແລະທາງການທະຫານ. ເນື້ອໃນ ໕ ຂໍ້ນັ້ນ ແມ່ນສົມເຫດສົມຜົນທີ່ສຸດ ! ມັນໄດ້ກຳເນີດຂຶ້ນຈາກສະພາບການຕົວຈິງຂອງລາວໃນປະຈຸບັນ. ມີການຄຳນຶງເຖິງຜົນປະໂຫຍດຂອງບັນດາຝ່າຍທີ່ກ່ຽວຂ້ອງ ຢ່າງເໝາະສົມ, ພວກຂ້າພະເຈົ້າຖືວ່າ ເນື້ອໃນຂອງວິທີການການເມືອງ ໕ ຂໍ້ດັ່ງກ່າວ ຕອບສະໜອງກັບຄວາມມຸ່ງມາດປາຖະໜາຢ່າງເລິກເຊິ່ງ ຂອງປະຊາຊົນເຮົາ ແລະຜົນປະໂຫຍດພື້ນຖານ ຂອງຊາດເຮົາ, ຕອບສະໜອງກັບ ພະລາຊະປະສົງ ຂອງພະບາດສົມເດັດ ພະເຈົ້າມະຫາຊີວິດ ກໍຄືຜົນປະໂຫຍດແຫ່ງສັນຕິພາບ ແລະຄວາມສະຫງົບ ຢູ່ອິນດູຈີນ, ຢູ່ອາຊີ ອາຄະເນ ແລະ ໃນໂລກ.

ພວກຂ້າພະເຈົ້າຫວັງວ່າ ຝ່າຍພວກທ່ານ ຈະຕອບສະໜອງຂໍ້ສະເໜີຕ່າງໆ ຂອງພວກຂ້າພະເຈົ້າ ຢ່າງຕັ້ງໜ້າ, ເພື່ອພ້ອມກັນແກ້ໄຂບັນຫາລາວ ໂດຍສັນຕິວິທີ ໃຫ້ໄດ້ຕາມຄວາມມຸ່ງມາດປາຖະໜາ ແລະຄອງຄອຍຢ່າງຕັ້ງໃຈ ຂອງປວງປະຊາຊົນລາວ ໝົດທັງຊາດ .

---

9e séance

12-12-72

17 OCT 1972

ຮ່າງ

ຂໍ້ຕົກລົງລະຫວ່າງຄະນະຜູ້ແທນບັນດາກຳລັງຮັກຊາດລາວ
ກັບຄະນະຜູ້ແທນອຳນາດການປົກຄອງ ວຽງຈັນ

---

ຄະນະຜູ້ແທນ ບັນດາກຳລັງຮັກຊາດລາວ ໂດຍແມ່ນ ທ່ານນາຍພົນ ພູນ ສີປະເສີດ ເປັນຫົວໜ້າ ແລະ ຄະນະຜູ້ແທນ ອຳນາດການປົກຄອງວຽງຈັນໂດຍແມ່ນທ່ານ ເພັງ ພົງສະຫວັນ ເປັນຫົວໜ້າ, ໄດ້ດຳເນີນ ການເຈລະຈາ ຢູ່ວຽງຈັນ ແຕ່ວັນທີ່ ໑໗/໑໐/໗໒, ເພື່ອຊອກວິທີການ ແກ້ໄຂບັນຫາລາວ ໂດຍສັນຕິວິທີ.

ເພື່ອຕອບສະໜອງຄວາມມຸ່ງມາດປາຖະໜາອັນແຮງກ້າ ຂອງປະຊາຊົນໃນທົ່ວປະເທດທີ່ມີຄວາມມຸ່ງຫວັງຢາກກໍ່ສ້າງປະເທດລາວ ໃຫ້ເປັນປະເທດສັນຕິພາບ, ເອກະລາດ, ເປັນກາງ, ປະຊາທິປະໄຕ ເອກະພາບ ແລະ ວັດທະນາຖາວອນ;

ເພື່ອຢຸດເຊົາສົງຄາມ, ຟື້ນຟູສັນຕິພາບ, ສ້າງເງື່ອນໄຂເພື່ອປະຕິບັດຄວາມຖືກຕ້ອງປອງດອງ ແລະ ເອກະພາບຂອງຊາດ;

ຫຼັງຈາກໄດ້ພ້ອມກັນສັງເກດສະພາບການຕົວຈິງທຸກດ້ານ ແລະ ບັນດາບັນຫາອັນສັບສົນ ຂອງປະເທດຊາດ;

ໜຶ່ງ – ສອງຝ່າຍໄດ້ເປັນເອກະສັນກັນຢືນຢັນອີກເທື່ອໜຶ່ງວ່າ ສັນຍາເຈນີວປີ ໑໙໖໒ ກ່ຽວກັບລາວ ທີ່ໄດ້ຮັບຮູ້ ເອກະລາດ, ອະທິປະໄຕ, ຄວາມເປັນກາງ, ເອກະພາບ ແລະຜືນແຜ່ນດິນ ອັນຄົບຖ້ວນຂອງລາວ ແມ່ນພື້ນຖານອັນຖືກຕ້ອງທີ່ສຸດ ເພື່ອແກ້ໄຂບັນຫາລາວ, ສອດຄ່ອງກັບສິດປະໂຫຍດອັນພື້ນຖານ ແລະ ຄວາມມຸ່ງມາດປາຖະໜາອັນເລິກເຊິ່ງຂອງລາວ ແລະຂອງປະຊາຊົນ ບັນດາຊົນຊາດລາວ, ສອດຄ່ອງກັບສິດປະໂຫຍດຂອງລາວ ແລະ ຄວາມສະຫງົບຂອງບັນດາປະເທດໃນອິນດູຈີນ, ໃນອາຊີ ອາຄະເນ ແລະ ໃນໂລກ.

ສອງຝ່າຍ ໄດ້ຢືນຢັນອີກເທື່ອໜຶ່ງ ຄຸນຄ່າການເມືອງ ແລະກົດໝາຍ ຂອງສັນຍາເຈນີວ ດັ່ງກ່າວຂ້າງເທິງ, ໃຫ້ຄຳໝັ້ນສັນຍາ ຈະເຄົາລົບນັບຖືສັນຍາດັ່ງກ່າວ, ແລະຮຽກຮ້ອງ ຢ່າງສະຫງ່າຜ່າເຜີຍ ບັນດາປະເທດ ທີ່ເປັນພາຄີ ຂອງກອງປະຊຸມເຈນີວປີ ໑໙໖໑–໑໙໖໒ ກ່ຽວກັບລາວ ກໍຄື ປະເທດອື່ນ ໆ ຢູ່ໃນໂລກ ໃຫ້ເຄົາລົບນັບຖື ແລະປະຕິບັດຕາມທຸກມາດຕາ ຂອງສັນຍາດັ່ງກ່າວ ຢ່າງຈຸດຈິດ, ເຄົາລົບ ນັບຖືອະທິປະໄຕ, ເອກະລາດ, ເອກະພາບ ແລະຜືນແຜ່ນດິນ ອັນຄົບຖ້ວນ ຂອງປະເທດລາວ ກໍຄືຄວາມເປັນກາງ ຂອງພະລາຊະອານາຈັກລາວ, ເດັດຂາດ ບໍ່ໃຫ້ມີການເຄື່ອນໄຫວໃດໆ ທີ່ກົງກັນຂ້າມກັບ ບັນດາຫຼັກການ ທີ່ໄດ້ບົ່ງໄວ້ ໃນສັນຍາດັ່ງກ່າວ; ແລະຕ້ອງເຄົາລົບນັບຖື ສິດຕັດສິນດ້ວຍຕົນເອງ ຂອງປະຊາຊົນລາວ ຢ່າງສັນເຊີງ, ເດັດຂາດ ບໍ່ແຊກແຊງໂດຍກົງ ຫຼື ໂດຍທາງອ້ອມ ເຂົ້າກິດຈະການພາຍໃນ ຂອງລາວ.

ສອງ – ສອງຝ່າຍ ກໍ່ເປັນເອກະສັນກັນ ຮັບຮອງວ່າ ບັນດາລະບຽບການ ກ່ຽວກັບບັນດາສິດເສລີພາບ ປະຊາທິປະໄຕ ຂອງປະຊາຊົນ, ກ່ຽວກັບການ ເລືອກຕັ້ງທົ່ວໄປ ຢ່າງເສລີ ປະຊາທິປະໄຕ,

ແລະບັນດາຂໍ້ເພີ່ມເຕີມເຂົ້າໃນ ລັດຖະທຳມະນູນ ຂອງພະລາຊະອານາຈັກ ຄືທີ່ໄດ້ບົ່ງໄວ້ ໃນບັນດາສັນຍາ ວຽງຈັນປີ ໑໙໕໗ ລະຫວ່າງ ບັນດາກຳລັງສູ້ຮົບ ຂອງຝ່າຍປະເທດລາວ ກັບ ລັດຖະບານ ພະລາຊະອານາຈັກລາວ ຍັງຄົງຮັກສາຄຸນຄ່າການເມືອງ ແລະ ກົດໝາຍໄວ້ຢູ່.

ສອງຝ່າຍ ໄດ້ເປັນເອກະສັນກັນ ຮຽກຮ້ອງປະຊາຊົນທັງໝົດ ແລະບັນດາກຳລັງ, ບັນດາຝ່າຍ ຢູ່ພາຍໃນປະເທດ ຈົ່ງປະຕິບັດຕາມບັນດາລະບຽບການດັ່ງກ່າວຢ່າງສຸດຂີດ ແລະເຂັ້ມງວດ ດ້ວຍຈິດໃຈແຫ່ງຄວາມຖືກຕ້ອງປອງດອງຊາດ ຢ່າງແທ້ຈິງ, ຈົ່ງພ້ອມກັນຮ່ວມແຮງ ແກ້ໄຂບັນດາບັນຫາຂອງປະເທດຊາດ ໃຫ້ໄດ້ຮັບຜົນດີ.

x

x x

ປະຈຸບັນນີ້ ໃນເງື່ອນໄຂ ແຫ່ງສະພາບການຕົວຈິງ ຂອງພະລາຊະອານາຈັກ ພວມດຳລົງຄົງຄືເປັນສອງເຂດ, ສອງອຳນາດການປົກຄອງ ແລະ ມີ ກຳລັງການເມືອງ ແລະກຳລັງປະກອບອາວຸດນັ້ນ, ເພື່ອຢຸດເຊົາສົງຄາມ, ຟື້ນຟູສັນຕິພາບຄືນ, ສ້າງເງື່ອນໄຂນຳເອົາປະເທດຊາດໄປຕາມເສັ້ນທາງສັນຕິພາບ, ເອກະລາດ, ເປັນກາງ, ປະຊາທິປະໄຕ ແລະເອກະພາບ, ສອງຝ່າຍໄດ້ຕົກລົງເປັນເອກະສັນກັນດັ່ງລຸ່ມນີ້:

໑)- ຢຸດເຊົາ ການສູ້ຮົບ, ຟື້ນຟູ ສັນຕິພາບ ຢູ່ລາວຄືນໃໝ່, ປະກອບດ້ວຍ :

ກ)- ລັດຖະບານອາເມລິກາ ຕ້ອງຢຸດເຊົາ ການຖິ້ມລະເບີດ ພ້ອມກັບທຸກການເຄື່ອນໄຫວ ທາງການທະຫານອື່ນໆ ຂອງອາເມລິກາ ແລະບັນດາປະເທດ ທີ່ຂຶ້ນກັບຝ່າຍ ອາເມລິກາ ຢູ່ບົນດິນແດນລາວ ຢ່າງສິ້ນເຊີງ ແລະຕະຫລອດການ, ເລີກລ້າງ ທຸກຖານທັບ, ທຸກທີ່ຕັ້ງ ແລະພື້ນຖານ ທາງທະຫານ ຂອງອາເມລິກາ ຢູ່ດິນແດນລາວ, ລົບລ້າງ ກອງທະຫານພິເສດ ເຊິ່ງແມ່ນ ອາເມລິກາ ຈັດຕັ້ງ, ອົບຮົມ, ປະກອບອາວຸດ, ລ້ຽງດູ ແລະບັນຊາໂດຍກົງ. ລັດຖະບານ ອາເມລິກາ ຕ້ອງທົດແທນ ການໃຊ້ຈ່າຍ ເພື່ອປົວແປງ ບາດແຜສົງຄາມ ທີ່ອາເມລິກາ ເປັນຜູ້ກໍ່ຂຶ້ນ.

ຂ)- ບັນດາກຳລັງປະກອບອາວຸດຢູ່ລາວ ຕ້ອງຢຸດເຊົາ ທຸກການເຄື່ອນໄຫວ ທາງການທະຫານ ທີ່ເປັນປໍລະປັກກັນ ຢູ່ໜ້າດິນ ແລະເທິງອາກາດ, ປະຕິບັດ ການຢຸດຍິງກັນທີ່ ຢ່າງສິ້ນເຊີງ ແລະພ້ອມໆກັນ ຢູ່ໃນທົ່ວ ດິນແດນລາວ.

ຫລັງຈາກ ປະຕິບັດ ການຢຸດເຊົາ ການສູ້ຮົບ ແລະ ການເຄື່ອນໄຫວ ທີ່ເປັນປໍລະປັກກັນ:

ກ)- ທີ່ປຶກສາ, ພະນັກງານ ທະຫານ, ກອງທະຫານ ປະຈຳການ ແລະນອກປະຈຳການ ຂອງຕ່າງປະເທດ ຕ້ອງຖອນອອກຈາກລາວ ໃຫ້ໝົດຢ່າງຖືກຕ້ອງ ຕາມບັນດາ ຂໍ້ກຳນົດ ໃນສັນຍາເຊີແນວປີ ໑໙໖໒ ກ່ຽວກັບລາວ ແລະ ບັນດາ ລະບຽບການ ທີ່ຝ່າຍຕ່າງໆ ໄດ້ຕົກລົງກັນ ພາຍໃນ ໓໐ ວັນ ນັບແຕ່ເວລາ ໄດ້ເຊັນ ຂໍ້ຕົກລົງ ສະບັບນີ້.

ຂ)- ຫ້າມຂາດ ທຸກການເຄື່ອນໄຫວ ລ່ວງລ້ຳ ຫລື ບຸກຍຶດ ເຂດທີ່ຝ່າຍ ກົງກັນຂ້າມ ຄວບຄຸມ ຊົ່ວຄາວ ແລະ ຫ້າມຂາດ ທຸກການເຄື່ອນທັບ ກວາດລ້າງ, ທຸກການເຄື່ອນໄຫວ ໜີບຮັດ, ປາບປາມ, ຈັບກຸມ, ຈົ່ມແກ້ແຄ້ນ ຕໍ່ຜູ້ທີ່ໄດ້ຮ່ວມມື ກັບຝ່າຍອື່ນ ໃນສະໄໝ ສົງຄາມ.

ຄ)- ຫ້າມຂາດ ບໍ່ໃຫ້ນຳເອົາ ກອງທະຫານປະຈຳການ ແລະນອກປະຈຳການ, ບັນດາທີ່ປຶກສາ ແລະ ພະນັກງານ ທະຫານ ກໍຄື ອາວຸດ ຍຸດທະພັນ ແລະພາຫະນະສົງຄາມ ບໍ່ວ່າຂອງຕ່າງປະເທດໃດໆແລະ

ຢູ່ພາຍໃຕ້ຮູບການໃດໆ ເຂົ້າມາລາວ; ຢຸດເຊົາທຸກການຊ່ວຍເຫລືອ ທາງດ້ານການທະຫານ ໃຫ້ຝ່າຍໃດ ຝ່າຍໜຶ່ງ ເປັນສະເພາະຢູ່ໃນລາວ. ໃນກໍລະນີ ທີ່ຈຳເປັນ ຕ້ອງປ່ຽນອາວຸດຍຸດທະພັນ, ພາຫະນະສົງ ຄາມ ທີ່ຖືກເປ່ເພເສຍຫາຍນັ້ນ ຈະແມ່ນບັນດາຝ່າຍ ເປັນຜູ້ປຶກສາ ຕົກລົງກັນ ແລະໂດຍແມ່ນ ລັດຖະບານ ປະສົມ ເປັນຜູ້ຮ້ອງຂໍ ແລະແບ່ງປັນ.

໕)– ບັນດາຝ່າຍທີ່ກ່ຽວຂ້ອງ ຈະສົ່ງມອບບັນດາທະຫານ ແລະປະຊາຊົນສາມັນ ຂອງຝ່າຍອື່ນ ບໍ່ວ່າແມ່ນ ສັນຊາດໃດ ທີ່ຖືກຈັບ ແລະຖືກຄຸມຂັງ ໃນລະຫວ່າງສົງຄາມ ຄືນໃຫ້ກັນທັງໝົດ, ຕາມລະບຽບ ການ ທີ່ຝ່າຍຕ່າງໆ ໄດ້ຕົກລົງກັນ. ການແລກປ່ຽນນີ້ ຈະເລີ່ມຕົ້ນ ແລະສິ້ນສຸດລົງ ພ້ອມກັບກັບການ ຖອນກອງທະຫານ ແລະພະນັກງານ ທະຫານ ຂອງຕ່າງປະເທດ ອອກຈາກລາວໃຫ້ໝົດ.

໖)– ໃນເວລາ ລໍຖ້າການດຳເນີນການເລືອກຕັ້ງທົ່ວໄປ ແບບເສລີ ປະຊາທິປະໄຕ ຢ່າງແທ້ ຈິງ ເພື່ອເລືອກຕັ້ງລັດຖະສະພາ ແລະຈັດຕັ້ງລັດຖະບານປະສົມແຫ່ງຊາດ ເປັນທາງການນັ້ນ, ສອງຝ່າຍ ຕົກລົງກັນ ສ້າງຕັ້ງ ສະພາ ປະສົມການເມືອງ ແລະລັດຖະບານປະສົມແຫ່ງຊາດຊົ່ວຄາວຊຸດໃໝ່ຂຶ້ນ ໂດຍ ທັນທີ ເພື່ອປະຕິບັດບັນດາຂໍ້ຄວາມ ທີ່ໄດ້ຕົກລົງກັນ ແລະຈັດການບໍລິຫານງຽກງານ ຂອງປະເທດຊາດ, ປະຕິບັດຄວາມຖືກຕ້ອງປອງດອງ ແລະເອກະພາບຂອງຊາດ. ອົງການທັງສອງດັ່ງກ່າວ ຕ້ອງໄດ້ຈັດຕັ້ງຂຶ້ນ ໃຫ້ແລ້ວ ຢ່າງຊ້າທີ່ສຸດພາຍໃນ ໓໐ ວັນ ຫລັງຈາກໄດ້ ເຊັນຂໍ້ຕົກລົງ ສະບັບນີ້.

ສະພາປະສົມການເມືອງ ແມ່ນອົງການສູງສຸດ ຂອງຄວາມຖືກຕ້ອງປອງດອງຊາດ, ເຊິ່ງປະ ກອບດ້ວຍ ຜູ້ແທນຂອງສອງຝ່າຍ ແລະຜູ້ແທນບັນດາກຳລັງເປັນກາງຮັກຊາດ, ຜູ້ແທນ ພະບໍລົມມະອົງ ສານຸອົງ, ຜູ້ຊົງຄຸນວຸດທິ ທີ່ເຫັນດີເຫັນພ້ອມນຳ ສັນຕິພາບ, ເອກະລາດ, ເປັນກາງ, ປະຊາທິປະໄຕ, ໂດຍມີອັດຕາສ່ວນເທົ່າທຽມກັນ. ອົງການນີ້ ມີໜ້າທີ່ ປະກອບຄຳເຫັນ, ຊຸກຍູ້ ແລະຊ່ວຍເຫລືອ ລັດຖະ ບານປະສົມແຫ່ງຊາດຊົ່ວຄາວຊຸດໃໝ່ ປະຕິບັດບັນດາຂໍ້ຄວາມ ທີ່ໄດ້ຕົກລົງກັນ ລະຫວ່າງຝ່າຍຕ່າງໆ, ແລະ ສືບຕໍ່ເຈລະຈາແກ້ໄຂບັນດາບັນຫາ ທີ່ຍັງຄົງຄ້າງ ເຊິ່ງພົວພັນເຖິງສອງຝ່າຍ, ນັບທັງການພົວພັນ ລະຫວ່າງ ສອງເຂດ, ຮັບປະກັນສິດສະເໝີພາບ ລະຫວ່າງບັນດາຊົນຊາດ ແລະສິດເສລີພາບ ປະຊາທິປະໄຕ ຂອງ ປະຊາຊົນ, ນະໂຍບາຍຕ່າງປະເທດ ສັນຕິພາບ ເປັນກາງ, ແກ້ໄຂບັນຫາການຊ່ວຍເຫລືອ ຂອງຕ່າງປະ ເທດ ແລະກຽມການດຳເນີນການເລືອກຕັ້ງທົ່ວໄປ ເພື່ອສ້າງຕັ້ງລັດຖະສະພາ ແລະຈັດຕັ້ງລັດຖະບານປະ ສົມແຫ່ງຊາດເປັນທາງການ ເຊິ່ງ ຈະເປັນຕົວແທນ ທີ່ແທ້ຈິງ ຂອງປະຊາຊົນ ບັນດາຊົນຊາດລາວ. ສະພາ ປະສົມການເມືອງນີ້ ມີຄະນະປະຈຳ ທີ່ປະກອບດ້ວຍ ຜູ້ແທນ ຂອງທັງສອງຝ່າຍ (ຝ່າຍ ແນວລາວຮັກຊາດ, ຝ່າຍ ວຽງຈັນ) ແລະຜູ້ແທນ ຂອງບັນດາກຳລັງເປັນກາງຮັກຊາດ ແລະຜູ້ແທນ ພະບໍລົມມະອົງສານຸອົງ, ຜູ້ຊົງຄຸນວຸດທິ ທີ່ເຫັນດີນຳ ສັນຕິພາບ, ເປັນກາງ, ເອກະລາດ ແລະ ປະຊາທິປະໄຕ, ໂດຍມີ ອັດຕາ ສ່ວນເທົ່າທຽມກັນ.

ລັດຖະບານປະສົມແຫ່ງຊາດຊົ່ວຄາວຊຸດໃໝ່ ຈັດຕັ້ງຂຶ້ນ ຕາມລະບຽບການພິເສດ, ໂດຍໄດ້ ຮັບ ພະປະລະມາພິໄທແຕ່ງຕັ້ງ ຈາກ ພະມະຫາກະສັດ, ເຮັດວຽກຕາມຫລັກການ ເປັນເອກະສັນ ລະ ຫວ່າງຝ່າຍຕ່າງໆ, ມີສ່ວນປະກອບ ອັນເໝາະສົມ ແລະມີໜ້າທີ່: ປະຕິບັດບັນດາ ຂໍ້ຄວາມ ທີ່ໄດ້ເຊັນ ກັນ ລະຫວ່າງຝ່າຍຕ່າງໆ ແລະໂຄງການດຳເນີນງານ ທີ່ໄດ້ວາງອອກໃນປີ ໑໙໕໖. ລັດຖະບານດັ່ງ ກ່າວ ປະກອບດ້ວຍ ອັດຕາສ່ວນເທົ່າທຽມກັນ ດັ່ງນີ້:

- ແນວ ລາວ ຮັກ ຊາດ,

- ບັນດາກຳລັງເປັນກາງຮັກຊາດ ແລະ ບຸກຄົນອຸດົມທີ ທີ່ເຫັນດີນຳ ສັນຕິພາບ, ເປັນກາງ, ເອກະລາດ, ປະຊາທິປະໄຕ.

- ແລະ ຝ່າຍ ວຽງ ຈັນ.

ໃນເວລາ ທີ່ຍັງບໍ່ທັນມີ ລັດຖະສະພາ ແລະ ລັດຖະບານປະສົມແຫ່ງຊາດ ເປັນທາງການເທື່ອນັ້ນ, ແຕ່ລະຝ່າຍ ເປັນຜູ້ຄຸ້ມຄອງເຂດ ທີ່ຕົນກວດກາຊົ່ວຄາວ, ປະຕິບັດຫຼັກສິດເສລີພາບ ປະຊາທິປະໄຕ ອັນກວ້າງຂວາງ ຕໍ່ປະຊາຊົນ ແລະປະຕິບັດ ນະໂຍບາຍການເມືອງ ຕ່າງປະເທດ ເອກະລາດ, ສັນຕິພາບ ເປັນກາງ. ແຕ່ລະຝ່າຍ ນຳໃຊ້ຄວາມສາມາດຂອງຕົນ ແລະການຊ່ວຍເຫຼືອ ຂອງທາງນອກ ເພື່ອປົວແປງບາດແຜ ຂອງສົງຄາມ, ກໍ່ສ້າງ ແລະຂະຫຍາຍ ເສດຖະກິດ ແລະ ວັດທະນະທຳ, ແກ້ໄຂຊີວິດການເປັນຢູ່ ຂອງປະຊາຊົນ ໃຫ້ດີຂຶ້ນ.

ບັນດາຝ່າຍ ທີ່ກ່ຽວຂ້ອງ ຕົກລົງກັນ ເອົາໃຫ້ຕົວເມືອງວຽງຈັນ ກາຍເປັນເຂດ ເປັນກາງ ເພື່ອຮັບປະກັນ ຄວາມປອດໄພ ໃຫ້ແກ່ບ່ອນຕັ້ງ ລັດຖະບານປະສົມ ແລະ ສະພາ ປະສົມການເມືອງ, ຕ້ານທຸກການທຳລາຍ ຫຼືການຫັບເຜັງ ບໍ່ວ່າຈະມາຈາກ ກຳລັງໃດ ຝ່າຍໃນ ຫຼືຝ່າຍນອກປະເທດ ເພື່ອໃຫ້ລັດຖະບານປະສົມແຫ່ງຊາດຊົ່ວຄາວຊຸດໃໝ່ ແລະສະພາປະສົມການເມືອງ ມີການເຄື່ອນໄຫວ ຢ່າງມີພົນສັກສິດ.

ນ)- ບັນດາຝ່າຍ ໃຫ້ຄຳໝັ້ນສັນຍາ ຮັບປະກັນ ແລະປະຕິບັດຢ່າງຄົບຖ້ວນ ແລະເຄັ່ງຄັດ ບັນດາສິດເສລີພາບ ປະຊາທິປະໄຕ ຂອງປະຊາຊົນ, ເຊັ່ນ: ເສລີພາບ ໃນການອອກສະໝັກຮັບເລືອກຕັ້ງ ແລະເລືອກຕັ້ງ, ເສລີພາບ ໃນການປາກເວົ້າ, ພິມຈຳໜ່າຍ, ໃນການຈັດຕັ້ງ, ໂຮມຊຸມນຸມ, ຕັ້ງພູມລຳເນົາ, ໃນການໄປມາຄ້າຂາຍ ແລະກຳມະສິດຊັບສົມບັດສ່ວນຕົວ ແລະອື່ນໆ ແລະລົບລ້າງທຸກ ຂໍ້ບັງຄັບ, ທຸກລະບຽບການ ແລະທຸກການຈັດຕັ້ງ ທີ່ຂັດກັບສິດເສລີພາບ ປະຊາທິປະໄຕດັ່ງກ່າວ, ທັງນີ້ ກໍ່ເພື່ອໃຫ້ພົນລະເມືອງລາວ ທຸກຄົນ ມີເງື່ອນໄຂສະດວກດີ ເພື່ອອຸທິດຄວາມສາມາດ ແລະເຫື່ອແຮງຂອງຕົນ ໃຫ້ແກ່ປະເທດຊາດ.

ບັນດາຝ່າຍ ໃຫ້ຄຳໝັ້ນສັນຍາວ່າ ບໍ່ໃຫ້ມີການປະພຶດ ຈຳແນກແກ້ແຄ້ນ ຕໍ່ບັນດາຜູ້ຄົນທີ່ໄດ້ຮ່ວມມືກັບ ຝ່າຍອື່ນ ໃນສະໄໝສົງຄາມ, ຝ່າຍວຽງຈັນ ຕ້ອງຍຸບເລີກ ບັນດາເຂດເຕົ້າໂຮມປະຊາຊົນ ທີ່ເອີ້ນວ່າ "ເຂດອົບພະຍົບຫຼົບໄພ" ໂດຍທັນທີ ແລະມອບສິດເປັນອິດສະຫລະ ຄືນໃຫ້ປະຊາຊົນ ທີ່ຖືກບັງຄັບໄປເຕົ້າໂຮມ, ຊ່ວຍເຫຼືອເຂົາເຈົ້າ ໃຫ້ກັບຄືນບ້ານເດີມ ເພື່ອທຳມາຫາກິນ ແລະໃຊ້ຄ່າເສຍຫາຍທຸກຢ່າງ ໃຫ້ແກ່ເຂົາເຈົ້າ.

ຫຼັງຈາກ ຂໍ້ຕົກລົງສະບັບນີ້ ໄດ້ເຊັນກັນ ແລະປະກາດອອກ, ທັງສອງຝ່າຍ ຕ້ອງສືບຕໍ່ ເປີກສາຫາລືກັນ ເພື່ອປະຕິບັດ ບັນດາຂໍ້ຄວາມດັ່ງກ່າວຂ້າງເທິງ ແລະບັນດາບັນຫາອື່ນໆ ທີ່ຍັງຄັ່ງຄ້າງ ແລະພ້ອມກັນນັ້ນ ແຕ່ລະຝ່າຍ ຕ້ອງອອກຄຳສັ່ງ ໃຫ້ບັນດາກຳລັງປະກອບອາວຸດ ປະຈຳການ ແລະນອກປະຈຳການ ທີ່ຂຶ້ນກັບ ຝ່າຍຕົນ, ປະຕິບັດການຢຸດຍິງ ແລະຢຸດເຊົາທຸກການເຄື່ອນໄຫວ ທີ່ເປັນປໍລະປັກອື່ນໆ ໃນທົ່ວດິນແດນລາວ, ນັບແຕ່ເວລາ ໐ ໂມງ (ໂມງອິນດູຈີນ) ຂອງວັນທີ.... ເດືອນ.... ປີ ໑໙໗໓, ທັງສອງຝ່າຍ ຕ້ອງພ້ອມກັນ ຈັດຕັ້ງຄະນະກຳມະການປະສົມໃນທັນທີ ເພື່ອດຳເນີນການຄວບຄຸມ ແລະກວດກາການຢຸດຍິງ ດ້ວຍການຊ່ວຍເຫຼືອ ຂອງຄະນະກຳມະທິການກວດກາ ແລະຄວບຄຸມສາກົນ ທີ່ໄດ້ຮັບການຈັດຕັ້ງຂຶ້ນ ຈາກກອງປະຊຸມເຈນີວປີ ໑໙໖໑--໑໙໖໒ ກ່ຽວກັບລາວ, ແລະ ໃນຂອບເຂດ ໜ້າທີ່ ສິດອຳນາດ ທີ່ໄດ້ບົ່ງໄວ້ ໃນອະນຸສັນຍາເຈນີວປີ ໑໙໖໒.

ເຮັດ ທີ່ ວຽງຈັນ, ວັນທີ ... ເດືອນ ... ປີ ໑໙໗໓.

| | |
|---|---|
| ຫົວໜ້າ ຄະນະຜູ້ແທນ ອຳນາດການປົກຄອງ ວຽງຈັນ | ຫົວໜ້າ ຄະນະຜູ້ແທນ ບັນດາກຳລັງ ຮັກຊາດລາວ |
| ເພັງ ພົງສະຫວັນ | ນາຍພົນ ພູມ ສີປະເສີດ |

2ème séance
24-10-72
24 OCT 1972

ຄຳປາໄສ

ຂອງ ທ່ານພູນ ສີປະເສີດ, ຫົວໜ້າຄະນະຜູ້ແທນ ບັນດາກຳລັງຮັກ ຊາດລາວ, ກ່າວໃນວາລະປະຊຸມເທື່ອທີສອງ ຂອງ ການເຈລະຈາ ເປັນທາງການ ທີ່ວຽງຈັນ ເມື່ອວັນທີ ໒໔/໑໐/໑໙໗໒.

---

ຮຽນ ບັນດາທ່ານ !

ໃນວາລະປະຊຸມ ເທື່ອທຳອິດ ເມື່ອວັນທີ ໑໗/໑໐/໑໙໗໒, ພວກຂ້າພະເຈົ້າ ໄດ້ຟັງບົດ ປາໄສ ຂອງຄະນະຜູ້ແທນຝ່າຍວຽງຈັນ ທີ່ສະແດງເຖິງທັດສະນະ ແລະ ຫລັກໝັ້ນ ໃນການເຈລະຈາ. ໃນບົດປາໄສນັ້ນ, ຄະນະຜູ້ແທນຝ່າຍວຽງຈັນ ໄດ້ສະແດງທ່າທີ ຂາດເຈດຕະນາດີຂອງຕົນ, ບໍ່ຕົວຈິງ, ບໍ່ມີການກໍ່ສ້າງ ແລະ ບໍ່ມີຄວາມສະເໝີພາບ. ເປັນຫຍັງ ພວກທ່ານຈຶ່ງຖືວ່າ ເປັນຜູ້ຕາງໜ້າ ຂອງລັດຖະບານປະສົມ ແຫ່ງຊາດຊົ່ວຄາວ ເພື່ອເຈລະຈາ ກັບພວກຂ້າພະເຈົ້າ ? ລັດຖະບານ ປະສົມແຫ່ງຊາດສາມຝ່າຍນີ້ ໄດ້ສ້າງຕັ້ງຂຶ້ນ ບົນພື້ນຖານ ຂອງສັນຍາ ຊູຣິກ ແລະທົ່ງໄຫຫີນ ເມື່ອ ປີ ໑໙໖໒ ນັ້ນ, ໄດ້ຖືກອາເມລິກາ ແລະລູກມືຂອງຈັກທຳລາຍ, ໂຄ່ນລົ້ມຢ່າງສິ້ນເຊີງແລ້ວ, ແລະ ຍັງຈະມີລັດຖະບານປະສົມຫຍັງອີກ ທີ່ໄດ້ມອບໝາຍໜ້າທີ່ ໃຫ້ພວກທ່ານເປັນຜູ້ຕາງໜ້າ? ນັ້ນແມ່ນ ພວກທ່ານ ຖືຕົນເປັນເຈົ້າຂອງບ້ານຊັ້ນບໍ່ ? ແລະຖືພວກຂ້າພະເຈົ້າເປັນແຂກ, ແລ້ວເປັນເຈົ້າພາບ ເປີດກອງປະຊຸມ ແລະ ເປັນປະທານກອງປະຊຸມ ? ຫລືເວົ້າໃຫ້ຖືກກວ່ານັ້ນ, ພວກທ່ານໄດ້ຖືຕົນ ເປັນຜູ້ຕາງໜ້າລັດຖະບານ ທີ່ຖືກກົດໝາຍ, ຮຽກຮ້ອງພວກຂ້າພະເຈົ້າ ກັບຄືນມາສູ່ ວົງສາຄະນາ ຍາດແຫ່ງຊາດ, ກັບມາຫາລັດຖະບານ ? ອັນນັ້ນ ແມ່ນເລື່ອງທີ່ໄຮ້ເຫດຜົນທີ່ສຸດ ແລະບໍ່ອາດ ຈະຮັບເອົາໄດ້. ສຳນວນຄວາມເວົ້າ ຂອງພວກທ່ານ ແມ່ນບໍ່ສອດຄ່ອງ ກັບສະພາວະການ ຂອງ ປະເທດຊາດບ້ານເມືອງ ປະຈຸບັນຈັກເມັດ.

ມີຄວາມຈຳເປັນ ຕ້ອງຢືນຢັນຢ່າງຈະແຈ້ງວ່າ, ຄະນະຜູ້ແທນ ບັນດາກຳລັງຮັກຊາດລາວ ແມ່ນຕາງໜ້າ ໃຫ້ແນວລາວຮັກຊາດ ແລະບັນດາກຳລັງເປັນກາງຮັກຊາດ ທີ່ເປັນກຳລັງການເມືອງ ອັນເຂັ້ມແຂງ, ພວມເປັນເຈົ້າຂອງດິນແດນ ໔/໕ (ສີ່ສ່ວນຫ້າ) ຂອງໝົດປະເທດ ແລະມີປະຊາ ຊົນ ໑ ລ້ານກ່ວາຄົນ, ທັງໄດ້ຮັບຄວາມສະໜັບສະໜູນ ແລະເຫັນດີເຫັນພ້ອມ ຈາກປະຊາຊົນ ໃນ ທົ່ວປະເທດ ແລະ ໃນທົ່ວໂລກ, ພວມຢູ່ໃນທ່າເປັນເຈົ້າການ, ທ່າມີໄຊ ໃນທົ່ວສະໜາມຮົບ. ໃນ ຖານະດັ່ງກ່າວ, ພວກຂ້າພະເຈົ້າ ເຂົ້າມາທີ່ນີ້ ເພື່ອເຈລະຈາ ກັບຝ່າຍວຽງຈັນ ຢ່າງສະເໝີພາບ, ແນໃສ່ຊອກຫາວິທີການແກ້ໄຂ ບັນຫາລາວຢ່າງຖືກຕ້ອງ.

ເທື່ອນັ້ນ, ເຖິງວ່າຈະຢູ່ໃນທ່າມີໄຊກໍຕາມ, ພວກຂ້າພະເຈົ້າ ກໍໄດ້ຕົກລົງເຫັນດີ ມາເຈລະຈາ ກັບຝ່າຍວຽງຈັນ ໂດຍຢຶດໝັ້ນ ໃນຄວາມປະສົງ ຢາກເຮັດໃຫ້ສົງຄາມຮຸກຮານ ອັນນອງເລືອດ ຂອງ ອາເມລິກາຢູ່ລາວ ຍຸດຕິລົງໂດຍໄວ ເທົ່າທີ່ຈະໄວໄດ້, ເຮັດໃຫ້ຄວາມທຸກທໍລະມານ ຂອງພີ່ນ້ອງ ຮ່ວມຊາດ ແລະການທຳລາຍເຜົາຜານ ປະເທດຊາດພວກເຮົາ ຢ່າງແສນສາຫັດ ເຊິ່ງເປັນວົນຮ້າຍ

ໂດຍທີ່ ມາຈາກການແຊກແຊງ ແລະ ຮຸກຮານອັນປ່າເຖື່ອນ ຂອງຈັກກະພັດອາເມລິກາ ຢູ່ລາວນັ້ນ ໃຫ້ສົງຄາມລຸດລົງໂດຍໄວ ເທົ່າທີ່ຈະໄວໄດ້. ທ່າທີຂອງພວກຂ້າພະເຈົ້າ ດັ່ງກ່າວນັ້ນ, ແມ່ນຫລັກການ ໃໝ່ ທີ່ຢືນຢັນເຈດຕະນາດີ ຂອງບັນດາກຳລັງຮັກຊາດລາວ ເຊິ່ງຝ່າຍອາເມລິກາ ບໍ່ຄວນເຂົ້າໃຈຜິດ.

ພວກຂ້າພະເຈົ້າຖືວ່າ, ຢາກແກ້ໄຂບັນຫາລາວໂດຍສັນຕິ, ບໍ່ອາດຈະຮຽກຮ້ອງ ໃຫ້ແຕ່ ຝ່າຍດຽວ ມີເຈດຕະນາດີເທົ່ານັ້ນ, ແຕ່ ທັງສອງກຳລັງສອງຝ່າຍ ລ້ວນແຕ່ຕ້ອງມີເຈດຕະນາດີນຳກັນ, ຕ້ອງ ເຄົາລົບສາທາລະນະ ຢ່າງສະເໝີພາບ ແລະຕ້ອງເບິ່ງສະພາບການຕົວຈິງຢູ່ລາວ ເພື່ອຈະຊອກຫາທາງແກ້ ໃຫ້ຖືກ ແລະ ບັງເກີດຜົນສັກສິດ.

ໂດຍຫວັງຫນ້າໃຫ້ ບັນດາກຳລັງຮັກຊາດລາວ, ໃນວາລະປະຊຸມນີ້, ຂ້າພະເຈົ້າ ມີຄວາມ ເຫັນເພີ່ມເຕີມ ກ່ຽວກັບບາງບັນຫາດັ່ງນີ້:

໑)- ສຸພາສິດໄດ້ກ່າວໄວ້ວ່າ "ຊ້າງຕາຍທັງໂຕ ເອົາໃບບົວໄປປົກ ບໍ່ຮອບຮະຕຸ້ມ". ໃນ ຄຳປາໄສທີ່ກ່າວໃນວາລະປະຊຸມທີ່ແລ້ວນັ້ນ, ຝ່າຍອາເມລິກາຈັ່ງເວົ້າວ່າ : "ປະເທດລາວເຮົາ ຍັງຄົງ ເປັນເອກະລາດ ໃນທຸກດ້ານ, ມີອະທິປະໄຕ ຢ່າງຄົບຖ້ວນ ແລະ ເປັນກາງຢ່າງ ຄົງຄ້ອງ ".ຄຳເວົ້າ ຂອງພວກທ່ານດັ່ງກ່າວ ເຮັດແນວໃດ ຈຶ່ງຈະໄປປົກປິດ ການແຊກແຊງ ແລະ ຮຸກຮານຢ່າງປ່າເຖື່ອນ ຂອງອາເມລິກາ ຢູ່ປະເທດເຮົາເກືອບ ໔໐ ປີມານີ້ໄດ້, ເຮັດແນວໃດ ຈຶ່ງຈະປົກປິດ ໂທດກຳອັນ ມາກມາຍກ່າຍກອງ ທີ່ອາເມລິກາໄດ້ກໍ່ຂຶ້ນ ຕໍ່ປະຊາຊົນເຮົາໄດ້ ?.

ຖ້າປະເທດເຮົາຫາກເປັນ ເອກະລາດ, ມີອະທິປະໄຕ ແລະຄວາມເປັນກາງແທ້, ເປັນຫຍັງ ຈຶ່ງມີການຕໍ່ສູ້ອັນພິລະອາດຫານ ຂອງຊາດເຮົາ ທີ່ຕ້ານການຮຸກຮານ ໃນຕະຫຼອດກ່ວາ ໑/໔ ຂອງ ສະ ຕະວັດ ແລະ ຈະມີຄວາມຈຳເປັນຫຍັງ ທີ່ຈະຕ້ອງມີການເຈລະຈາ ລະຫວ່າງສອງຝ່າຍ ຄືດັ່ງປະຈຸບັນນີ້?

ໃນໃບລາຍງານ ເມື່ອວັນທີ ໖/໘/໑໙໗໑ ຂອງອະນຸກຳມະການ ກ່ຽວກັບສັນຍາດ້ານຄວາມ ສະຫງົບ ແລະ ຄຳໝັ້ນສັນຍາ ຂອງອາເມລິກາ ຕໍ່ຕ່າງປະເທດ ສັງກັດຄະນະກຳມາທິການຕ່າງປະເທດ ຂອງສະພາສູງອາເມລິກາ (ຫລື ເອີ້ນວ່າ ອະນຸກຳມະການ ໄຊມິງຕັນ) ກໍ່ໄດ້ເວົ້າອອກຢ່າງຈະແຈ້ງ ວ່າ : "ລັດຖະບານພະລາຊະອານາຈັກລາວ ແມ່ນຂຶ້ນກັບ ອາເມລິກາເກືອບໝົດ, ອາດຈະແມ່ນຂຶ້ນ ກັບພວກເຮົາ (ໝາຍເຖິງອາເມລິກາ) ຍິ່ງກ່ວາລັດຖະບານໃດໆ ໃນໂລກ...", "ສົງຄາມຢູ່ລາວ ແມ່ນສະຖານທູດອາເມລິກາ ຢູ່ວຽງຈັນ ເປັນຜູ້ບັງຄັບບັນຊາ ໃນທຸກດ້ານ ", "ໃນຕົວຈິງແລ້ວ, ພວກ ເຮົາ (ໝາຍເຖິງອາເມລິກາ) ພອມໃຊ້ລາວ ເຂົ້າໃນຈຸດປະສົງ ຂອງພວກເຮົາ ໂດຍເອົາດິນແດນ ແລະ ຊີວິດຂອງຄົນລາວໄປແລກ...". ໃນຖານເປັນຄົນລາວ, ພວກເຮົາຈະຄິດແນວໃດ ຕໍ່ໃບລາຍ ງານດັ່ງກ່າວ ? ຈະເປັນໄປໄດ້ບໍ່, ຄົນອາເມລິກາ ໝົດທຸກຄົນ ແມ່ນເວົ້າມາດແນວນັ້ນ ຈະໄປເວົ້າສັງທີ່ບໍ່ຖືກຕ້ອງ ຕໍ່ລັດຖະບານ ຂອງພວກທ່ານ ? ໃນຂະນະ ທີ່ກະໂຕຄົນອາເມລິກາເອງ ກໍ່ໄດ້ຮັບສາລະພາບຢ່າງ ເປີດເຜີຍ ກ່ຽວກັບການແຊກແຊງ ຮຸກຮານ ຂອງອາເມລິກາຕໍ່ລາວ ຄືແນວນັ້ນ, ຍັງມີຄົນຈຳນວນ ໜຶ່ງ ທີ່ຖືວ່າ ຕົນມີຄວາມຮັບຜິດຊອບ ຕໍ່ປະເທດຊາດ ຊ້ຳພັດອອກແຮງ ປົກປິດໃຫ້ແກ່ຜູ້ຫມາຍຮຸກຮານ .

ພວກທ່ານເວົ້າວ່າ: "ປະເທດລາວເຮົາ ຍັງຄົງເປັນ ເອກະລາດ ໃນທຸກດ້ານ, ມີອະທິ ປະໄຕ ຢ່າງຄົບຖ້ວນ", ແມ່ນແນວນັ້ນແທ້ບໍ່ ? ໂດຍທົ່ວໄປແລ້ວ, ປະເທດໃດທີ່ເປັນເອກະລາດ ແລະ ມີອະທິປະໄຕ, ແມ່ນປະຊາຊົນຢູ່ໃນປະເທດນັ້ນ ເປັນເຈົ້າໂຊກຊາຕາຂອງຕົນ, ເປັນເຈົ້າດິນແດນ,

ເປັນເຈົ້າຊັບສິນບັດຂອງຕົນ, ປົກຄອງປະເທດຊາດຂອງຕົນ ຕາມລະບອບທີ່ຕົນມັກ, ກຳນົດນະໂຍບາຍພາຍໃນ ແລະ ຕ່າງປະເທດຂອງຕົນເອງ, ໂດຍປາສະຈາກການຄອບຄອງ ຫນີບຕົວ ແລະກົດຂີ່ຂູດຮີດ ຂອງຕ່າງປະເທດ. ແຕ່ຄວາມຈິງ ຢູ່ໃນລາວເຮົາ ແມ່ນເປັນແນວໃດແທ້ ?:

- <u>ທາງດ້ານການເມືອງ</u>: ໃຜເປັນເຈົ້າຂອງເຂດກວດກາ ຂອງຝ່າຍວຽງຈັນ ໃນປະຈຸບັນ? ໃຜເປັນຜູ້ປົ້ນແຕ່ງອຳນາດການປົກຄອງວຽງຈັນ ໃນປະຈຸບັນ ແລະ ບັງຄັບບັນຊາ ? ບໍ່ມີອັນສົງໄສອີກແລ້ວ, ເພາະວ່າ ກະໂຕເອກອັກຄະລາຊະທູດ ອາເມລິກາ ປະຈຳລາວ ກໍໄດ້ລ່ວງເກີນບົດບາດ ຂອງນັກການທູດທຳມະດາ. ເຂົາໄດ້ກາຍເປັນຜູ້ສຳເລັດລາຊະການ ທີ່ແທ້ຈິງຢູ່ລາວ. ສະຖານທູດອາເມລິກາ ໄດ້ກາຍເປັນ ສູນກາງກົງຈັກສົງຄາມ ຂອງອາເມລິກາຢູ່ລາວ ໂດຍໃຊ້ຮູບສະຖານທູດ ເປັນສິ່ງປົກປິດ. ເບື້ອງແທ້ ຂອງສະຖານທູດອາເມລິກາ ແລະອົງການ ຢູເອັດ ນັ້ນ ແມ່ນກົງຈັກຄອບຄອງ ລ່າເມືອງຂຶ້ນແບບໃຫມ່ ຢອງຢູ່ເທິງກົງຈັກປົກຄອງ ຂອງຝ່າຍວຽງຈັນ, ຄອບງຳນະໂຍບາຍພາຍໃນ ແລະ ຕ່າງປະເທດ ຂອງພະລາຊະອານາຈັກລາວ. ເອກະລາດ ເຊິ່ງພວກທ່ານ ຮ້ອງໂຮນັ້ນແມ່ນ ເອກະລາດປອມ. ໃນຕົວຈິງ, ເຂດກວດກາຂອງພວກທ່ານ ໄດ້ກາຍເປັນ ຫົວເມືອງຂຶ້ນແບບໃຫມ່ ຂອງ ອາເມລິກາ ແລະ ອຳນາດການປົກຄອງວຽງຈັນ ໄດ້ຂຶ້ນກັບອາເມລິກາຢ່າງສິ້ນເຊີງ ໃນດ້ານການເມືອງ, ການທະຫານ ແລະ ເສດຖະກິດ.

- <u>ທາງດ້ານການທະຫານ</u>: ແມ່ນໃຜເປັນຜູ້ຈັດຕັ້ງ, ໃຫ້ເງິນເດືອນ ແລະ ບັງຄັບບັນຊາກອງທະຫານຝ່າຍຂວາ ? ແມ່ນໃຜເປັນຜູ້ບັງຄັບບັນຊາສົງຄາມຢູ່ລາວ ? ໂດຍອົງໃສ່ການຊ່ວຍເຫລືອທາງດ້ານທະຫານ ໒໕໐ ກວ່າລ້ານໂດລາຕໍ່ປີ, ອົງໃສ່ທີ່ປຶກສາ ແລະ ພະນັກງານທະຫານອາເມລິກາ ເປັນພັນໆຄົນ ທີ່ໄດ້ຈັດວາງ ຕັ້ງແຕ່ເສນາທິການສູງສຸດ ລົງຮອດພາກທະຫານ ແລະກົມກອງຕ່າງໆ ຂອງທະຫານຝ່າຍຂວາ, ອາເມລິກາ ໄດ້ກຳກຳລັງປະກອບອາວຸດຝ່າຍຂວາວຽງຈັນໄວ້ ແຫນ້ນທີ່ສຸດ, ໃຊ້ກຳລັງປະກອບອາວຸດດັ່ງກ່າວ ເປັນເຄື່ອງມືສູ້ຮົບປະເທດເຮົາ, ເຂັ່ນຂ້າຮາວີ ພີ່ນ້ອງຮ່ວມຊາດພວກເຂົາ. ຄຳສາລະພາບ ຂອງອານຸກຳມະການ ໄຊມິງຕັນ ດັ່ງຕໍ່ໄປນີ້ ໄດ້ຢືນຢັນເລື່ອງທີ່ກ່າວມານັ້ນຢ່າງຈະແຈ້ງແລ້ວຄື: "ແຕ່ລະມື້, ນັບທັງວັນເສົາ ເລີ່ມແຕ່ເວລາ ໘ ໂມງ ເຖິງ ໑໐ ໂມງ ໓໐ ນາທີ, ໄດ້ມີການປະຊຸມ ຢູ່ທີ່ສະຖານທູດອາເມລິກາ ພາຍໃຕ້ການເປັນປະທານ ຂອງເອກອັກຄະລາຊະທູດ, ປຶກສາກ່ຽວກັບການເຄື່ອນທັບ. ການປະຊຸມດັ່ງກ່າວ ໄດ້ໃຊ້ເວລາສ່ວນໃຫຍ່ ເພື່ອຟັງລາຍງານລະອຽດ ຂອງທູດທະຫານບົກ, ທູດທະຫານອາກາດ ແລະຂອງຜູ້ຮັບຜິດຊອບ ເຊອີອາ (CIA) ກ່ຽວກັບສະພາບການໃນໄລຍະ ໒໔ ຊົ່ວໂມງທີ່ຜ່ານມາ. ບັນດາການເຄື່ອນໄຫວ ຂອງກອງທັບອາກາດ ໄດ້ມີການຕິດຕາມຢ່າງໃກ້ຊິດທີ່ສຸດ, ຈົນກະທັ່ງກຳລັງໄຟຊະນິດໃດທີ່ຕ້ອງການໃຊ້ຫລື ວຽກຍົກຍ້າຍຂອງການຂະຫຍາຍກຳລັງທະຫານລາວ, ກຳລັງພິເສດ ແລະການຄຸ້ມກັນໃຫ້ແກ່ກຳລັງດັ່ງກ່າວ". "ອາເມລິກາ ໄດ້ອົບຮົມ, ປະກອບອາວຸດ ແລະ ລຳລຽງຂົນສົ່ງໃຫ້ກອງທະຫານລາວ ແລະອົບຮົມ, ໃຫ້ເງິນເດືອນ, ຄຸ້ມກັນ ຫລືເວົ້າທົ່ວໄປແລ້ວ, ແມ່ນເປັນຜູ້ຈັດຕັ້ງ ກຳລັງນອກລະບຽບ (ຫມາຍເຖິງກຳລັງພິເສດ) ພາຍໃຕ້ການບັງຄັບບັນຊາ ຂອງ ເຊອີອາ ".

ຮ້າຍແຮງຍິ່ງກວ່ານັ້ນ ຄືແຕ່ເດືອນ ໕/໑໙໖໙ ມາເຖິງປະຈຸບັນ, ເປັນຕົ້ນແມ່ນ ແຕ່ ນິກຊັນຂຶ້ນກຳອຳນາດເປັນຕົ້ນມາ, ໃນແຕ່ລະມື້ໄດ້ມີຍົນອາຍພົ່ນ ແລະ ຍົນຫນາກປີ້ນ ຂອງອາເມລິກາຫລາຍຊະ

ນິດ ນັບເປັນພັນໆຖ້ຽວລຳ ບິນໄປຖິ້ມລະເບີດ ຍິງທຳລາຍ ທີ່ມີລັກສະນະລ້າງຜານ ຢູ່ຕາມຫລາຍເຂດ ອັນກວ້າງຂວາງ ໃນດິນແດນລາວ, ເປັນຕົ້ນແມ່ນຢູ່ ບໍລິເວນທົ່ງໄຫຫີນ-ຊຽງຂວາງ ແລະ ພາກກາງ, ພາກໃຕ້ ຂອງປະເທດເຮົາ. ຖ້າວ່າ "ມີອະທິປະໄຕ ຢ່າງຄົບຖ້ວນ" ເປັນຫຍັງຈຶ່ງປ່ອຍໃຫ້ຍົນອາເມລິກາຢູ່ທ່າງເຮັດຟ້າເຮັດໄຟ ຍິງທຳລາຍປະເທດຊາດບ້ານເມືອງ ຂອງພວກເຮົາຕາມໃຈຊອບ ແລະ ເຂັ່ນຂ້າຮາວີ ພີ່ນ້ອງຮ່ວມຊາດຂອງພວກເຮົາຄືແນວນັ້ນ ? ສະເດັດເຈົ້າສຸວັນນະພູມາ ກໍຄົງໄດ້ປະກາດຫລາຍເທື່ອຕໍ່ຫລາຍທີ່ແລ້ວວ່າ, ການຖິ້ມລະເບີດຢູ່ພາກກາງ ແລະພາກໃຕ້ຂອງລາວ ແມ່ນເລື່ອງຂອງອາເມລິກາ, ແມ່ນສິດຂອງອາເມລິກາ, ບໍ່ອາດຈະບອກໃຫ້ເຂົາເຊົາໄດ້. ເມື່ອເປັນແນວນັ້ນ, ແມ່ນໃຜ ເປັນຜູ້ຂາຍອະທິປະໄຕ ດ້ວຍລາຄາຖືກໆ ?.

- <u>ທາງດ້ານເສດຖະກິດ:</u> ເສດຖະກິດການເງິນ ໃນເຂດຄອບຄອງຂອງຝ່າຍວຽງຈັນແມ່ນຂຶ້ນກັບອາເມລິກາທັງໝົດ. ການຊ່ວຍເຫລືອຂອງອາເມລິກາໃຫ້ລາວ ໃນແຕ່ລະປີແມ່ນຫລາຍກວ່າງົບປະມານປະຈຳປີ ຂອງອຳນາດການປົກຄອງວຽງຈັນ ໑໐ ເທົ່າ. ເງິນກີບວຽງຈັນ ໄດ້ຂຶ້ນກັບເງິນໂດລາຢ່າງສົນເຊີງ; ໃນທຸກເທື່ອ ທີ່ເງິນໂດລາອາເມລິກາ ຖືກປັ່ນປ່ວນ ລົງລາຄາ, ເງິນກີບວຽງຈັນກໍໄດ້ລົງລາຄານຳໂລດ, ພາໃຫ້ເກີດໄພເງິນເຟີ້ ແລະເຮັດໃຫ້ຄ່າຄອງຊີບແພງຂຶ້ນ, ອັນເປັນຜົນສະທ້ອນຢ່າງໜັກໜ່ວງ ຕໍ່ຊີວິດການເປັນຢູ່ຂອງປະຊາຊົນເຮົາທຸກຊັ້ນຄົນ, ເປັນຕົ້ນແມ່ນຜູ້ອອກແຮງງານທີ່ອາໄສເງິນເດືອນ ມາລ້ຽງຊີບ. ແຕ່ລະປີ, ອຳນາດການປົກຄອງວຽງຈັນ ໄດ້ສົ່ງສິນຄ້າອອກຂາຍຕ່າງປະເທດພຽງ ໖ ລ້ານໂດລາເທົ່ານັ້ນ, ແຕ່ຊໍ້າພັດນຳສິນຄ້າຕ່າງປະເທດເຂົ້າມາເຖິງ ໖໐ ກວ່າລ້ານໂດລາ. ໃນເມື່ອການຊຳລະເງິນຕາ ແລະການດຸນດ່ຽງການຄ້າເປັນແນວນັ້ນ, ເຮັດແນວໃດຈຶ່ງຈະຮັບປະກັນ ໃຫ້ແກ່ເສດຖະກິດແຫ່ງຊາດໄດ້ ? ສິນຄ້າໃນເຂດຄວບຄຸມ ຂອງພວກທ່ານ, ສ່ວນຫລາຍແມ່ນ ເອົາມາຈາກອາເມລິກາ, ຍີ່ປຸ່ນ, ໂດຍສະເພາະແມ່ນ ເອົາມາຈາກໄທ, ນັບທັງເຄື່ອງອຸປະໂພກ, ບໍລິໂພກ ແລະເຄື່ອງໃຊ້ປະຈຳວັນຕ່າງໆ ເຊັ່ນ: ແອັດຊັງ, ເຂົ້າສານ, ຊີ້ນ ແລະປາເປັນຕົ້ນ. ໄທຢູ່ທາງໜີບຄໍລາວ ໂດຍວິທີເກັບພາສີ ແລະຄ່າຂົນສົ່ງສິນຄ້າຜ່ານດິນໄທ ດ້ວຍອັດຕາແພງທີ່ສຸດ. ດັ່ງນັ້ນ, ຈຶ່ງມີເຫດຜົນ ພຽງພໍທີ່ສຸດວ່າ, ພຽງແຕ່ອາເມລິກາ ງົດການຊ່ວຍເຫລືອ ອາທິດດຽວເທົ່ານັ້ນ, ອຳນາດການປົກຄອງວຽງຈັນ ກໍຈະຕ້ອງລົ້ມຕຸບຟຸບໂລດ, ພຽງແຕ່ໄທ ງົດການຂົນສົ່ງອາທິດດຽວເທົ່ານັ້ນ, ເສດຖະກິດຂອງລາວ ກໍຈະປະສົບຄວາມປັ່ນປ່ວນໃນທັນທີໂລດ. ການເສດຖະກິດ ທີ່ຂຶ້ນກັບປະເທດອື່ນຄືແນວນັ້ນ, ເຮັດແນວໃດ ຈຶ່ງຈະຮັບປະກັນຄວາມເປັນ ເອກະລາດ ຂອງລາວໄດ້ ?.

ເວົ້າເຖິງຄວາມເປັນ ກາງຂອງລາວ, ຖ້າອີງໃສ່ຄະແຫລງການ ວ່າດ້ວຍຄວາມເປັນກາງຂອງລາວໃນ ອານຸສັນຍາເຊີແນວປີ ໑໙໖ ກ່ຽວກັບລາວແລ້ວ, ເຮັດແນວໃດ ຈຶ່ງຈະມີເຫດຜົນ ມາອະທິບາຍໄດ້ ໃນເມື່ອທະຫານປະຈຳການຂອງໄທ ໒໐ ກອງພັນ ເຂົ້າມາເຂັ່ນຂ້າຮາວີ, ປຸ້ນສະດົມປະຊາຊົນເຮົາ, ແລະທະຫານຫຸ່ນໄຊ່ງ່ອນເຂົ້າມາຮຸກຮານ ທາງເລາ ລ ພາກໃຕ້ ຂອງລາວເຮົາ ? ຝ່າຍວຽງຈັນຖືວ່າ ຕົນເປັນຜູ້ຮັກສາຄວາມເປັນກາງໄວ້ໄດ້, ແຕ່ໃນຕົວຈິງແລ້ວ ເປັນຫຍັງຊໍ້າພັດມີການສຳພັນທາງທະຫານ ກັບພວກຫຸ່ນໄຊ່ງ່ອນ, ພະນົມເປັນ ແລະພວກປະຕິການໄທ, ປະໃຫ້ອາເມລິກາໃຊ້ກຸ່ມສຳພັນທະຫານດັ່ງກ່າວ ດຳເນີນການຮຸກຮານລາວ ແລະບັນດາປະເທດ ໃນອິນດູຈີນ ? ໃນໃບລາຍງານຂອງ ເຈມຊ໌-ໂລເວັນເຕັນ ( James G. Lowentein ) ແລະ ລິຊາດ-ໂມສ

(Richard Moose ), ສະມາຊິກສະພາສູງອາເມຣິກາ ທີ່ປະກາດອອກເມື່ອວັນທີ່ ໘/໕/໑໙໗໒ ໄດ້ຍັນວ່າ: ປະຈຸບັນນີ້, ແມ່ນໄທນັ້ນເອງ ທີ່ເປັນປະເທດປະກອບກຳລັງຄົນດີນຕໍ່ ເພື່ອສືບຕໍ່ສົງຄາມທາງໜ້າດິນຢູ່ລາວ ແລະຍົນທຸກຂະນິດ ຂອງອາເມຣິກາ ທີ່ບິນໄປຖິ້ມລະເບີດ ຍິງທຳລາຍລາວນັ້ນກໍ່ແມ່ນບິນຈາກ ບັນດາຖານທັບ ໃນປະເທດໄທ ..."

ຄວາມຈິງທັງໝົດທີ່ກ່າວມານັ້ນ ກໍ່ພຽງພໍ ທີ່ຈະສະແດງໃຫ້ເຫັນວ່າ ປະເທດລາວ ພວມຖືກອາເມຣິກາຮຸກຮານ, ອະທິປະໄຕ ແລະເອກະລາດຂອງລາວ ພວມຖືກພວກເຂົາຢຽບຢ່ຳ, ຄວາມເປັນກາງຂອງລາວ ໄດ້ຖືກທຳລາຍ ແລະປະຊາຊົນລາວ ໄດ້ຕົກທຸກທໍລະມານ. ຍ້ອນບໍ່ຮັບຮູ້ຄືແນວນັ້ນ ຫລືດຶງແກ້ງບໍ່ຮັບຮູ້ຄືແນວນັ້ນ, ພວກທ່ານຈຶ່ງໄດ້ເວົ້າອອກທີ່ວທີບວ່າ "ຍ້ອນຄວາມເຫັນແຕກຕ່າງກັນໃນດ້ານການເມືອງ, ລາວໄດ້ແບ່ງກັນເປັນພັກຝ່າຍ, ມີຫລາຍອຸດົມການແຜກໆ ຕ່າງໆ ກັນ, ຕໍ່ສູ້ກັນຢ່າງທໍລະຫົດ ໂດຍທັບອາວຸດປະຫັດປະຫານກັນ, ບາງກຸ່ມບາງຄະນະ ໄດ້ກາຍໄປເປັນເຄື່ອງມືໃຫ້ຕ່າງປະເທດ, ນຳເອົາຄົນຕ່າງດ້າວ ເຂົ້າມາເຂັ່ນຂ້າປະຊາຊົນລາວ ຢ່າງໂຫດຮ້າຍທາລຸນ, ຢຽບຢ່ຳອຳນາດອະທິປະໄຕຂອງລາວ..." ຄຳເວົ້າດັ່ງກ່າວແມ່ນ ມະລຸ້ມມະລ່ອຍທີ່ສຸດ, ບໍ່ເຫັນສາຍເຫດ ແລະກົກເຫງົ້າ ຂອງສະພາບການລາວ ໃນປະຈຸບັນ, ມີແຕ່ຢາກປົກປິດກົນອຸບາຍ ແລະໂທດກຳຮຸກຮານ ຂອງອາເມຣິກາຢູ່ລາວເທົ່ານັ້ນ. ຍ້ອນເຫັນແກ່ຜົນປະໂຫຍດສ່ວນຕົວ ແລະຄອບຄົວຂອງຕົນ, ຍ້ອນຄວາມມັກໃຫຍ່ໃຝ່ສູງສ່ວນຕົວ ທາງດ້ານສິດອຳນາດ, ຍ້ອນທັດສະນະການເມືອງບໍ່ຈະແຈ້ງ, ຈຶ່ງເຮັດໃຫ້ຄົນຈຳນວນໜຶ່ງ ໃນວົງການກຳອຳນາດວຽງຈັນ, ເປັນຕົ້ນແມ່ນ ພວກຂວາຈັດ ໄດ້ຂາຍນະໂນທຳ ດ້ວຍລາຄາຖືກ, ທໍລະຍົດຕໍ່ຊາດ, ຍິນຍອມເປັນລູກມືໃຫ້ອາເມຣິກາ, ນຳເອົາອາເມຣິກາ ເຂົ້າມາຮຸກຮານປະເທດເຮົາ ແລະຮັບໃຊ້ພວກນັ້ນ. ຄົນຈຳພວກນັ້ນ ດຳລົງຄົງຕົວຢູ່ໄດ້ ກໍ່ຍ້ອນອີງໃສ່ເງິນໂດລາ ແລະອາວຸດຂອງອາເມຣິກາ, ສ້າງຄວາມຮັ່ງມີ ຢູ່ເທິງກອງກະດູກ ແລະບວກເລືອດ ຂອງປະຊາຊົນ. ກົງກັບໂທດກຳຂາຍຊາດ ຂອງພວກເຂົາ, ພວກເຂົາຕ້ອງຮັບຜິດຊອບ ຕໍ່ປະຊາຊົນ ແລະຕໍ່ປະຫວັດສາດ.

ສ່ວນຝ່າຍບັນດາກຳລັງຮັກຊາດລາວ ແມ່ນຕັ້ງໜ້າໃຫ້ແກ່ ຜົນປະໂຫຍດອັນສູງສົ່ງ ຂອງປະເທດຊາດ ແລະປະຊາຊົນ. ພວກຂ້າພະເຈົ້າ ໄດ້ຮັບຮູ້ແຈ້ງ ກ່ຽວກັບສາຍເຫດ ແລະກົກເຫງົ້າ ຂອງສະພາບການ ອັນແສນໜັກໜ່ວງຢູ່ລາວ ໃນປະຈຸບັນ ແລະຖືວ່າ, ຖ້າຢາກແກ້ໄຂບັນຫາລາວ ໃຫ້ໄດ້ນັ້ນ, ພວກເຮົາຕ້ອງ ກຳຈັດປັດເປົ່າກົກເຫງົ້າ ທີ່ກໍ່ໃຫ້ເກີດສະພາບການດັ່ງກ່າວນີ້ ໃຫ້ຈົບໄດ້, ໝາຍຄວາມວ່າ: <u>ກ່ອນອື່ນໝົດ, ພວກເຮົາຕ້ອງເຮັດໃຫ້ການແຊກແຊງ ແລະຮຸກຮານ ຂອງອາເມຣິກາຕໍ່ລາວຢຸດເຊົາລົງ, ອຳນາດການປົກຄອງວຽງຈັນ ຕ້ອງປະລະນະໂຍບາຍ ເດີນຕາມອາເມຣິກາ ແລະເປັນລູກມືໃຫ້ອາເມຣິກາ.</u> ມີແຕ່ເຮັດຄືແນວນີ້ເທົ່ານັ້ນ, ປະເທດຊາດບ້ານເມືອງ ຂອງພວກເຮົາ ຈຶ່ງຈະມີ ເອກະລາດ, ເມື່ອມີເອກະລາດ ຈຶ່ງຈະມີສັນຕິພາບອັນແທ້ຈິງ; ເມື່ອມີເອກະລາດ, ສັນຕິພາບ ແລະອະທິປະໄຕອັນແທ້ຈິງ ຈຶ່ງຈະສ້າງຄວາມຖືກຕ້ອງປອງດອງ ແລະເອກະພາບແຫ່ງຊາດໄດ້.

໒)- ໃນຄຳປາໄສ, ພວກທ່ານເວົ້າວ່າ "ລັດຖະບານປະສົມແຫ່ງຊາດສາມຝ່າຍ ຍັງຄົງຕົວຢູ່ໄດ້" ແລະ "ລັດຖະບານປະສົມແຫ່ງຊາດຊົ່ວຄາວ ຍິນດີຢາກເຫັນ ພວກລັດຖະມົນຕີ ຝ່າຍແນວລາວຮັກຊາດ ຄືນມາຮັບເອົາຕຳແໜ່ງ ແລະພາລະໜ້າທີ່ ຄວາມຮັບຜິດຊອບຕາມເດີມ". ພວກຂ້າພະເຈົ້າຖືວ່າ ອັນນັ້ນແມ່ນ ການປັ້ນຂາວໃຫ້ເປັນດຳ, ບິດເບືອນ ພິກປີ້ນຄວາມຈິງຢ່າງບັງອາດ ແລະເປັນການ

ເລື່ອງທ່ອງ ທີ່ດື້ດ້ານທີ່ສຸດ. ພວກເຂົາຮູ້ດີແລ້ວວ່າ ລັດຖະບານປະສົມແຫ່ງຊາດ ທີ່ສ້າງຕັ້ງຂຶ້ນ ເມື່ອ ປີ ໑໙໖໒ ແມ່ນ ອີງບົນພື້ນຖານສັນຍາ ຊູຣິກ ແລະທົ່ງໄຫຫີນ, ສ່ວນປະກອບຮ່ວມມີ ໓ ຝ່າຍ ໂດຍມີ ພະລາຊະອົງການແຕ່ງຕັ້ງ ຕາມລະບຽບການພິເສດ ແລະດຳເນີນວຽກງານ ຕາມຫຼັກການ ເປັນເອກະສັນ ໓ ຝ່າຍ. ລັດຖະບານດັ່ງກ່າວ ໄດ້ເອົາ ໂຄງການການເມືອງ ທີ່ທັງ ໓ ຝ່າຍໄດ້ຕົກລົງກັນ ເປັນແນວທາງນະໂຍບາຍຂອງຕົນ. ແຕ່ດ້ວຍອິດທິພາບ ຄາດຕະກຳພະນະທ່ານ ກີນິມ ພົນເສນາ ລັດຖະມົນຕີກະຊວງການຕ່າງປະເທດ, ດ້ວຍການເຮັດລັດຖະປະຫານ ເມື່ອວັນທີ ໑໙/໔/໑໙໖໔, ດ້ວຍອິດທິພາບດັດແປງລັດຖະບານ ທີ່ບໍ່ໄດ້ຮັບການເຫັນດີເປັນເອກະສັນ ຈາກຝ່າຍຕ່າງໆເຖິງ ໕ ເທື່ອ ແລະ ໃຊ້ເລ່ຫຼ່ຽມກົນອຸບາຍຫຼາຍຢ່າງ, ຈັກກະພັດອາເມລິກາ ໄດ້ລົບລ້າງສ່ວນປະກອບ, ແນວທາງນະໂຍບາຍ ແລະຫຼັກການເຮັດວຽກຂອງລັດຖະບານປະສົມແຫ່ງຊາດ ໓ ຝ່າຍຢ່າງສິ້ນເຊີງ. ມັນເປັນອັນຈະແຈ້ງແລ້ວວ່າ, ໂດຍມີການສົມຮູ້ຮ່ວມຄິດຂອງຝ່າຍພວກທ່ານ, ຈັກກະພັດອາເມລິກາ ໄດ້ທຳລາຍ ແລະໂຄ່ນລົ້ມລັດຖະບານດັ່ງກ່າວຢ່າງສິ້ນເຊີງ. ຈຳນວນລັດຖະມົນຕີ ແລະລັດຖະມົນຕີຊ່ວຍວ່າການ ໑໙ ທ່ານ ໃນລັດຖະບານປະສົມເກົ່າ, ປະຈຸບັນນີ້ ຍັງເຫຼືອພຽງແຕ່ ໖ ຄົນເທົ່ານັ້ນ ທີ່ຍັງຢູ່ໃນອຳນາດການປົກຄອງວຽງຈັນ, ແຕ່ພວກນີ້ ບໍ່ຫຼາຍກໍ່ໜ້ອຍໄດ້ນິຍົມອາເມລິກາ, ຮັບໃຊ້ອາເມລິກາ ແລະບໍ່ອາດຈະເປັນຕົວແທນ ໃຫ້ໃຜໄດ້ ນອກຈາກເປັນຕົວແທນໃຫ້ແກ່ ຝ່າຍຂວາວຽງຈັນ. ອຳນາດການປົກຄອງວຽງຈັນ ປະຈຸບັນນີ້ ພຽງແຕ່ແມ່ນ ອຳນາດການປົກຄອງ ຂອງຝ່າຍດຽວເທົ່ານັ້ນ, ຊຶ່ງເປັນເຄື່ອງມືປົກປິດໃຫ້ແກ່ການຮຸກຮານ ຂອງອາເມລິກາ, ປະຕິບັດນະໂຍບາຍ ລ່າເມືອງຂຶ້ນແບບໃໝ່ຂອງອາເມລິກາ, ເປັນຕົ້ນແມ່ນ ປະຕິບັດນະໂຍບາຍພາຍໃນ ແລະຕ່າງປະເທດ ຕາມຄຳສັ່ງ ຂອງອາເມລິກາ. ສ່ວນຮູບຮ່າງ ໓ ຝ່າຍ ທີ່ພວກທ່ານລົມເຖິງນັ້ນ ໄດ້ມີການປ່ຽນແປງ ໃນດ້ານພື້ນຖານແລ້ວ, ສະເດັດເຈົ້າສຸວັນນະພູມາ ໄດ້ປະລະນະໂຍບາຍສັນຕິພາບເປັນກາງ, ໄດ້ປະກາດ ເອົາກຳລັງຂອງເພິ່ນ ທີ່ຍັງເຫຼືອເລັກນ້ອຍ ເຂົ້າກັບກຳລັງຂອງຝ່າຍຂວາ ແລະຖືຕົນເອງວ່າ ເປັນຫົວໜ້າ ຂອງຝ່າຍນີ້. ສະນັ້ນ, ຜູ້ທີ່ເປັນຕົວແທນ ທີ່ແທ້ຈິງ ຂອງກຳລັງເປັນກາງຮັກຊາດ ໃນປະຈຸບັນນີ້ແມ່ນ ຄະນະຮ່ວມສຳພັນ ບັນດາກຳລັງເປັນກາງຮັກຊາດ ແຕ່ຕົວດຽວເທົ່ານັ້ນ, ແມ່ນກຳລັງການເມືອງ ທີ່ມີກຳລັງປະກອບອາວຸດຕ່າງຫາກ, ໄດ້ເຕີບໃຫຍ່ຂຶ້ນ ໃນທຸກດ້ານ ແລະໄດ້ປະກອບສ່ວນ ອັນສຳຄັນ ໃນການອຸທິດໃຫ້ແກ່ພາລະກິດກູ້ຊາດ ຕ້ານອາເມລິກາ ຂອງຊາດເຮົາ.

ຈາກຄວາມຈິງ ທີ່ກ່າວມາ, ພວກຂ້າພະເຈົ້າ ເຫັນໄດ້ຢ່າງຈະແຈ້ງວ່າ ອັນທີ່ ອາເມລິກາແລະພວກທ່ານເອີ້ນວ່າ ລັດຖະບານປະສົມຢູ່ວຽງຈັນນັ້ນ, ເປັນພຽງແຕ່ ລັດຖະບານປະສົມ ຂອງກຳລັງທີ່ນິຍົມອາເມລິກາ, ໃນນັ້ນ ພວກຂວາຈັດ ແມ່ນກຸ່ມທີ່ໄດ້ຮັບການອຸ້ມຊູຈາກອາເມລິກາຫຼາຍກວ່າເພື່ອນ. ອຳນາດການປົກຄອງວຽງຈັນ ໄດ້ສະແດງບົດບາດ ເອົາການເອົາງານທີ່ສຸດ ໃນການປະຕິບັດ ນະໂຍບາຍຮຸກຮານ ຂອງອາເມລິກາຢູ່ລາວ, ປະຕິບັດນະໂຍບາຍ "ໃຊ້ຄົນລາວຂ້າຄົນລາວ" ຂອງຈັກກະພັດອາເມລິກາ ຢ່າງສຸດອົກສຸດໃຈ, ຫລອກລວງທະຫານຝ່າຍຂວາ ແລະກຳລັງພິເສດ ໄປບຸກໂຈມຕີ ບຽດບັງເຂດປົດປ່ອຍ ຂອງບັນດາກຳລັງຮັກຊາດ. ພວກເຂົາໄດ້ສົມຮູ້ຮ່ວມຄິດກັບຈັກກະພັດອາເມລິກາ ຜູ້ຮຸກຮານ ນຳເອົາຍົນເຂົ້າມາທຳລາຍເອົາຕາຍ ທົ່ວແຜ່ນດິນລາວ, ນຳເອົາທະຫານໄທ ແລະທະຫານຫຸ່ນໄຊ່ງ່ອນ ເຂົ້າມາເຂັ່ນຂ້າປະຊາຊົນເຮົາ, ພວກເຂົາໄດ້ກາຍເປັນ ກະບອກສຽງ ຮ້ອງໂຮ ປົດບັງ ນະໂຍບາຍ

ຮາກຖານ ຂອງຈັກກະພັດອາເມລິກາ ແລະບໍ່ໄດ້ລົດລະ ໃນການໃສ່ຮ້າຍປ້າຍສີ ບັນດາກຳລັງຮັກຊາດ. ອຳນາດການປົກຄອງ ຄືແນວນັ້ນ, ເຮັດແນວໃດ ພວກທ່ານ ຈະໄປຮຽກຮ້ອງ ພວກຂ້າພະເຈົ້າ ໃຫ້ເຂົ້າມາຮັບເອົາບາງຕັ່ງ ໃນກົງຈັກຂາງຊາດ, ທີ່ລະເມີດປະຊາທິປົກຄືແນວນັ້ນ. ເວົ້າລວມແລ້ວ, ແມ່ນອາເມລິກາ ແລະພວກລູກມືຂອງຈັດ ໄດ້ຈີກສັນຍາ ຊູຣິກ ແລະທັງໄທທັນຖິ້ມໝົດທັງແລ້ວ, ໄດ້ໂຄ່ນລົ້ມລັດຖະບານປະສົມ ມ ຢ່າງຢ່າງສິ້ນເຊີງ! ເພາະສະນັ້ນ, ໃນເທື່ອນີ້, ເພື່ອແກ້ໄຂບັນຫາທີ່ພົວພັນລະຫວ່າງຝ່າຍທີ່ກ່ຽວຂ້ອງ, ກ່າວເຖິງ ສ້າງຄວາມຖືກຕ້ອງປອງດອງ ແລະເອກະພາບແຫ່ງຊາດ, ບັນຫາອັນຮີບດ່ວນທີ່ສຸດ ບໍ່ແມ່ນ ຈະຟື້ນຟູ ລັດຖະບານ ທີ່ສູນຫາຍໄປແລ້ວ, <u>ມີແຕ່ຕ້ອງ ຈັດຕັ້ງລັດຖະບານປະສົມໃໝ່ ເຊິ່ງມີສ່ວນປະກອບ, ຈຳນວນ ແລະ ໜ້າທີ່ ດັ່ງພວກຂ້າພະເຈົ້າ ໄດ້ສະເໜີ ໃນວາລະປະຊຸມທີ່ແລ້ວ.</u>

ມ)- ໃນຈົດໝາຍ ຂອງສະເດັດເຈົ້າສຸວັນນະພູມາ ສະບັບລົງວັນທີ່ ໒໔/໗/໑໙໗໒ ທີ່ສົ່ງໄປໃຫ້ສະເດັດເຈົ້າ ສຸພານຸວົງນັ້ນ, ເພິ່ນກໍ່ໄດ້ຮັບເອົາວິທີການການເມືອງ ໕ ຂໍ້ ຂອງແນວລາວຮັກຊາດເປັນພື້ນຖານ ໃນການເປີກສາຫາລືກັນ, ແຕ່ໃນຄຳປາໄສ ຂອງພວກທ່ານຫວ່າງແລ້ວນີ້, ພວກທ່ານຊ້ຳພັດບໍ່ໄດ້ແຕະຕ້ອງ ເຖິງວິທີການການເມືອງ ໕ ຂໍ້ດັ່ງກ່າວ ແຕ່ປະການໃດ. ການກະທຳຂອງພວກທ່ານແມ່ນບໍ່ເຂົ້າເກງກັນ ກັບຄຳເວົ້າຂອງພວກທ່ານ. ອັນນັ້ນ, ແມ່ນເຈດຕະນາດີ ແລະຄວາມຈິງໃຈ ອັນເຂັ້ມງວດ ຂອງພວກທ່ານຊຸ້ມບໍ່ ?. ພວກຂ້າພະເຈົ້າຖືວ່າ ດັ່ງທຳນອງ ແລະຂໍ້ສະເໜີຕ່າງໆ ຂອງຝ່າຍວຽງຈັນນັ້ນ, ແມ່ນລົ້ມຄືນ ຂໍ້ເລື່ອງທອງອັນບັງອາດ ຂອງອາເມລິກາ ໃນເມື່ອກ່ອນນີ້. ເມື່ອເປັນແນວນັ້ນ, ກໍ່ຍິ່ງສະແດງໃຫ້ເຫັນວ່າ ພວກທ່ານ ບໍ່ມີເອກະລາດ, ບໍ່ມີອິດສະຫຼະເສລີ ໃນການກະທຳໃດໆ, ບໍ່ມີສິດຕັດສິນ ບັນຫາຂອງຕົນ ໂດຍຕົນເອງໄດ້.

ສ່ວນຝ່າຍພວກຂ້າພະເຈົ້າ, ໃນວາລະປະຊຸມຄັ້ງກ່ອນ, ພວກຂ້າພະເຈົ້າ ກໍ່ໄດ້ອະທິບາຍເນື້ອໃນລະອຽດ ຂອງວິທີການການເມືອງ ໕ ຂໍ້ ເຊິ່ງຝ່າຍພວກທ່ານເອງ ກໍ່ໄດ້ຮັບເອົາເປັນພື້ນຖານເປີກສາຫາລືກັນ. ອັນນັ້ນ ແມ່ນຂໍ້ສະເໜີ ທີ່ມີການກ້າວໜ້າທີ່ສຸດ ແລະ ສົມເຫດສົມຜົນທີ່ສຸດ, ທີ່ຈະຊ່ວຍໃຫ້ພວກເຮົາ ຊອກຫາວິທີການອັນເໝາະສົມ ທີ່ບັນດາຝ່າຍ ອາດຈະຮັບເອົາໄດ້. ອັນນັ້ນ ແມ່ນທາງອອກ ສຳລັບບັນຫາລາວ ໃນປະຈຸບັນ.

ໃນຄຳປາໄສ ຂອງພວກທ່ານ ໃນວາລະປະຊຸມຄັ້ງກ່ອນ, ກໍ່ມີບາງຈຸດທີ່ພວກເຮົາ ພໍຈະຫຍັບເຂົ້າຫາກັນໄດ້, ອັນນັ້ນແມ່ນ ການຢືນຢັນຄືນ ຂອງຝ່າຍພວກທ່ານ ທີ່ໃຫ້ຄຳໝັ້ນສັນຍາ ຈະເຄົາລົບສັນຍາເຊີແນວປີ ໑໙໖໒ ກ່ຽວກັບລາວ.

ສັນຍາດັ່ງກ່າວ ໄດ້ຮັບຮູ້ ບັນດາສິດພື້ນຖານ ຂອງຊາດເຮົາຄື: ອະທິປະໄຕ, ເອກະລາດ, ຄວາມເປັນກາງ, ເອກະພາບ ແລະຜືນແຜ່ນດິນອັນຄົບຖ້ວນ, ຈັກກະພັດອາເມລິກາ ກໍ່ໄດ້ພ້ອມກັບບັນດາປະເທດ ທີ່ເຂົ້າຮ່ວມກອງປະຊຸມເຊີແນວປີ ໑໙໕໔-໖໒ ຮັບຮູ້ ແລະ ໃຫ້ຄຳໝັ້ນສັນຍາ ຮັບປະກັນຄວາມເປັນກາງ ຂອງປະເທດເຮົາ. ປະຈຸບັນນີ້, ສັນຍາເຊີແນວປີ ໑໙໖໒ ຍັງຄົງຮັກສາຄຸນຄ່າຂອງມັນໄວ້ຄືເກົ່າ. ບັນຫາໃໝ່ ທີ່ວາງອອກ ໃນການເຈລະຈາ ຂອງພວກເຮົາ ໃນເທື່ອນີ້ແມ່ນ ຕ້ອງພິຈາ

ລະບາລະພາບການ ຕົວຈິງຢູ່ລາວ ໃນປະຈຸບັນ ແລະເອົາອັນນັ້ນ ເປັນພື້ນຖານ ເພື່ອແກ້ໄຂ ບັນຫາຕ່າງໆ ທີ່ວາງອອກ ສຳລັບປະເທດຊາດບ້ານເມືອງ ຂອງພວກເຮົາ ໃນປະຈຸບັນ, <u>ເຊິ່ງມີສອງບັນຫາຕົ້ນຕໍຄື: ຢຸດເຊົາສົງຄາມຮຸກຮານ ແລະການຕິດພັນທາງທະຫານ ຂອງອາເມລິກາຢູ່ລາວ, ຈັດຕັ້ງລັດຖະບານປະສົມ ແຫ່ງຊາດໃຫມ່ ແລະ ສະພາປະສິການເມືອງ</u>.

ທ່ານຫົວຫນ້າຄະນະຜູ້ແທນຝ່າຍວຽງຈັນ ກໍໄດ້ເວົ້າວ່າ ວັນທີ ໑໒ ຕຸລາ ແມ່ນມື້ສິລິມົງຄົນຂອງລາວທັງຊາດ ແລະພວກເຮົາຄວນຈາລຶກວັນນີ້ໄວ້ ໃນປະຫວັດສາດຂອງລາວ, ເພາະເປັນວັນເປີດສັກກະຫລາດໃຫມ່ ໃນການໂຮມລາວ ແລະປອງດອງຊາດ ຂອງພວກເຮົາ. ຄະນະຜູ້ແທນ ບັນດາກຳລັງຮັກຊາດລາວຫວັງວ່າ ຄຳເວົ້າດັ່ງກ່າວ ຂອງຝ່າຍພວກທ່ານ ຈະກາງເປັນການກະທຳຕົວຈິງ ດ້ວຍການຕອບສະຫນອງ ບັນດາຂໍ້ສະເຫນີ ອັນຖືກຕ້ອງ ຂອງພວກຂ້າພະເຈົ້າ ຢ່າງຕັ້ງຫນ້າ. ພວກຂ້າພະເຈົ້າຖືວ່າ ຖ້າຝ່າຍພວກທ່ານ ຫາກຫລຸດພົ້ນອອກຈາກການຫນີບຮັດ ຂອງອາເມລິກາ, ຖ້າພວກທ່ານຫາກຍຶດຖືປະໂຫຍດຂອງຊາດ, ຂອງປະຊາຊົນ ຂຶ້ນສູງກວ່າສິ່ງໃດຫມົດ, ຖ້າຝ່າຍພວກທ່ານ ຫາກສະແດງເຈດຕະນາດີ ແລະມີທ່າທີ່ສ້າງແທ້, ພວກເຮົາຈະພ້ອມກັບ ຊອກຫາວິທີການທີ່ແນໃສ່ ຟື້ນຟູສັນຕິພາບ ແລະເອກະລາດ ໃຫ້ແກ່ປະເທດຊາດ, ສ້າງຄວາມຖືກຕ້ອງປອງດອງ ແລະເອກະພາບແຫ່ງຊາດ, ຕອບສະຫນອງຄວາມ ມຸ່ງມາດປາຖະຫນາ ແລະຄວາມຄອງຄອຍ ອັນແຮງກ້າ ຂອງປວງປະຊາຊົນເຮົາ ໄດ້ຢ່າງດີດຂາດ ./.

3ème séance

31. 11. 72

31 OCT 1972

# ຄ ຳ ປ າ ໄ ສ

ຂອງ ທ່ານ ພູນ ສີປະເສີດ ຫົວຫນ້າຄະນະຜູ້ແທນ ບັນດາກຳລັງຮັກຊາດ
ທີ່ກ່າວໃນວາລະປະຊຸມ ເທື່ອທີ ໓ (ວັນທີ ໓໑/໑໐/໑໙໗໒).

---

ຮຽນ ບັນດາທ່ານ ,

ໃນຄຳປາໄສ ເມື່ອວາລະປະຊຸມຄັ້ງແລ້ວນີ້, ຄະນະຜູ້ແທນຝ່າຍຂວາວຽງຈັນ ໄດ້ເວົ້າເຖິງ ເຫດການ ອັນເປັນປະຫວັດສາດຢູ່ລາວ, ແຕ່ເມື່ອຟັງຄຳເວົ້າ ຂອງພວກທ່ານ ຢ່າງຄັກແນ່ແລ້ວ ມັນຊໍ້າພັດສະແດງໃຫ້ເຫັນວ່າ ພວກທ່ານ ໄດ້ບິດເບືອນຄວາມຈິງ ຂອງປະຫວັດສາດ ໄປຫມົດທັງ. ພວກທ່ານ ເຮັດຄືບໍ່ຮູ້ ຄວາມເປັນຈິງ ທີ່ເປັນໄປຢູ່ໃນປະເທດລາວ ແຕ່ປີ ໑໙໕໔ ເປັນຕົ້ນມາ. ການບິດເບືອນ ຄວາມຈິງດັ່ງກ່າວນັ້ນ ມັນຍິ່ງຢັ້ງຢືນອີກເທື່ອຫນຶ່ງວ່າ ພວກທ່ານ ບໍ່ມີຄວາມຮັບຜິດຊອບ ຕໍ່ປະຫວັດສາດ ແລະ ຕໍ່ປະຊາຊົນ. ຖ້າບໍ່ແມ່ນມີເຈດຕະນາ ຈະຮັບໃຊ້ສິດປະໂຫຍດ ຂອງຈັກກະພັດອາເມລິກາ ຢູ່ລາວ ແລ້ວ, ພວກທ່ານ ບໍ່ຄວນປັ້ນເລື່ອງຂຶ້ນມາປະຕິເສດ ຄວາມຮັບຮູ້ເຫດການ ອັນເປັນປະຫວັດສາດດັ່ງກ່າວນັ້ນ ຕາມຄວາມເປັນໄປ ຢ່າງແທ້ຈິງ ຂອງມັນ ແລະຢ່າງພາວະວິໄສ.

## I : <u>ຄວາມຈິງ ທາງປະຫວັດສາດຢູ່ລາວ ແມ່ນແນວໃດ</u> ?.

໑/- <u>ແມ່ນໃຜ ເປັນຜູ້ຮຸກຮານລາວ, ໃຜເປັນຜູ້ກໍ່ສົງຄາມ ອັນໂຫດຮ້າຍທີ່ສຸດ ຢູ່ລາວປະຈຸບັນ. ໃຜເປັນຜູ້ທີ່ຈະຕ້ອງຮັບຜິດຊອບ ຕໍ່ສະພາບ ທີ່ປະເທດຊາດ ບ້ານເມືອງ ຖືກທຳລາຍເພົາຜານ</u> ?

ໃນວາລະປະຊຸມເທື່ອແລ້ວ ພວກຂ້າພະເຈົ້າ ກໍ່ໄດ້ອະທິບາຍຢ່າງແຈ່ມແຈ້ງແລ້ວວ່າ, ແມ່ນ ກະໂດຈັກກະພັດອາເມລິການັ້ນເອງ ທີ່ເປັນຜູ້ຮຸກຮານລາວ, ເປັນຜູ້ກໍ່ສົງຄາມອັນໂຫດຮ້າຍທີ່ສຸດຢູ່ລາວ ຕັ້ງແຕ່ປີ ໑໙໕໔ ມາຈົນເຖິງປະຈຸບັນ. ດັ່ງນັ້ນ ມັນຈຶ່ງແມ່ນອາເມລິກາເອງ ແລະຝ່າຍຂວາວຽງຈັນ ລວມທັງສະເດັດເຈົ້າ ສຸວັນນະພູມາດ້ວຍ ຕ້ອງເປັນຜູ້ຮັບຜິດຊອບຢ່າງຫນັກ ຕໍ່ເຫດຮ້າຍທຸກປະການ ທີ່ເປັນມາຢູ່ໃນບ້ານເມືອງລາວ.

ໃນເທື່ອນີ້, ພວກຂ້າພະເຈົ້າ ຈະອະທິບາຍເພີ່ມເຕີມ ກ່ຽວກັບຫລັກຖານຕົວຈິງ ຈຳນວນ ຫນຶ່ງ ຊຶ່ງແມ່ນຄົນ ໃນວົງການອຳນາດການປົກຄອງ ອາເມລິກາເອງ ເປັນຜູ້ເວົ້າອອກ ເຊັ່ນ: ດາແລັດ ອະດີດ ລັດຖະມົນຕີຕ່າງປະເທດ ສະໄຫມປະທານາທິບໍດີ ໄອແຊນຮາວ ເຄີຍໄດ້ເວົ້າວ່າ "ລາວ ແມ່ນຫ່ວງ ທີ່ເປັນຂໍກະແຈ ສຳລັບຍຸດທະສາດ ກວມໂລກ" ຂອງອາເມລິກາ ຢູ່ອາຊີ ອາຄະເນ. ໃນການຊີ້ແຈງ ກ່ຽວກັບເລື່ອງ ອາເມລິກາ ເພີ່ມທະວີການແຊກແຊງ ເຂົ້າອິນດູຈີນ ເມື່ອເດືອນ ໕/໑໙໕໔ ນັ້ນ, ປະທານາທິບໍດີ ໄອແຊນຮາວ ໄດ້ຖະແຫລງວ່າ ໃນກໍລະນີ ທີ່ອິນດູຈີນຖືກເສຍໄປ " ບໍ່ຊຸນ ແລະ ບໍ່ກົ່ວ ຢູ່ໃນອານາເຂດນີ້ ຊຶ່ງພວກເຮົາຕີລາຄາສູງທີ່ສຸດນັ້ນ ກໍ່ຈະບໍ່ເປັນຂອງພວກເຮົາອີກ ".

ຍ້ອນວ່າ ມີຄວາມປະສົງທາງດ້ານການທະຫານ, ການເມືອງ ແລະ ເສດຖະກິດດັ່ງກ່າວນັ້ນ, ເລີ່ມແຕ່ປີ ໑໙໕໒, ໑໙໕໔ ແລະ ໑໙໕໕ ພຸ້ນມາ ອາເມລິກາ ຈຶ່ງໄດ້ສວຍໂອກາດ ໃນເວລາທີ່ຝລັ່ງ ຖືກເສຍໄຊ ແລ້ວຊອກວິທີແຊກຊຶມ ເຂົ້າບັນດາປະເທດ ໃນອິນດູຈີນ.

ເຖິງຄາວຝະລັ່ງຕ້ອງຖອນ ອອກຈາກອິນດູຈີນນັ້ນ, ໃຫ້ ກໍລ້ອນແຕ່ ໄດ້ເຕັ້ນກັບດາ ກ່ຽວກັບການ ເພີ່ມທະວີການແຊກແຊງ ແລະ ຮຸກຮານ ຂອງອາເມລິກາ ໃນແຕ່ລະໄລຍະ; ເລື່ອງນີ້ ພວກທ່ານເອງ ກໍໄດ້ຮັບຮູ້ ແລະ ເວົ້າເຖິງ, ແຕ່ຊ້ຳພັດ ອະທິບາຍໄປ ຢ່າງກົງກັນຂ້າມ ກັບສະພາບ ຄວາມເປັນຈິງ.

໖/- <u>ໃຜເປັນຜູ້ທຳລາຍສັນຍາເຈນີວປີ ໑໙໕໔ ກ່ຽວກັບອິນດູຈີນ</u> ?:

ສັນຍາເຈນີວປີ ໑໙໕໔ ກ່ຽວກັບອິນດູຈີນ ໄດ້ຮັບຮູ້ ອະທິປະໄຕ, ເອກະລາດ ແລະ ພື້ນແຜ່ນດິນອັນຄົບຖ້ວນຂອງລາວ; ພ້ອມກັນນັ້ນ ສັນຍາເຈນີວ ກໍໄດ້ລະບຸໄວ້ ຢ່າງຈະແຈ້ງວ່າ ກຳລັງປະເທດລາວ ແມ່ນກຳລັງທີ່ມີຖານະຖືກຕ້ອງ ຕາມກົດໝາຍ, ມີເຂດເຕົ້າໂຮມສອງແຂວງ ແລະຈະເຈລະຈາ ກັບອຳນາດການປົກຄອງວຽງຈັນ ເພື່ອປະຕິບັດຄວາມຖືກຕ້ອງປອງດອງ ແລະ ເອກະພາບແຫ່ງຊາດ.

ແຕ່ວ່າ, ອາເມລິກາ ຊ້ຳພັດບໍ່ຍອມລົງນາມ ໃນສັນຍາດັ່ງກ່າວ. ເປັນຫຍັງ ອາເມລິກາຈຶ່ງບໍ່ຍອມລົງນາມ ໃນສັນຍານັ້ນ? ຢູ່ໃນປື້ມຂອງ ຊັງ-ລາກູຕູຽ (Jean Lacouture) ແລະ ເດີວິນແລ (Devillers) ທີ່ຈຳໜ່າຍຢູ່ ປາຣີ ເມື່ອປີ ໑໙໖໐ ທີ່ພາດຫົວເລື່ອງວ່າ "ການສິ້ນສຸດຂອງສົງຄາມ" ກໍໄດ້ເປີດເຜີຍຢ່າງຈະແຈ້ງກ່ຽວກັບເງື່ອນໄຂ ກ ຂໍທີ່ລັດຖະບານອາເມລິກາວາງອອກໃຫ້ລັດຖະບານຝະລັ່ງ ໃນເວລາເຊັນສັນຍາເຈນີວປີ ໑໙໕໔ ກ່ຽວກັບອິນດູຈີນ, ໃນນັ້ນມີເງື່ອນໄຂທີ່ພົວພັນກັບລາວດັ່ງຕໍ່ໄປນີ້:

+ ຕ້ອງຮັກສາດິນແດນລາວໄວ້ຢ່າງຄົບຖ້ວນ (ໝາຍຄວາມວ່າ ຕ້ອງຕ້ານກັບການກຳນົດເອົາສອງແຂວງ ເປັນເຂດເຕົ້າໂຮມຂອງກຳລັງປະເທດລາວ).

+ ບໍ່ໃຫ້ມີການຈຳກັດສິດໃດໆຂອງລາວກ່ຽວກັບການສ້າງກຳລັງ, ການນຳເອົາອາວຸດເຂົ້າມາ ແລະ ຮ້ອງຂໍເອົາທີ່ປຶກສາຈາກຕ່າງປະເທດ. ບັນດາສິດດັ່ງກ່າວນັ້ນ, ແມ່ນແນໃສ່ຈຸດປະສົງຫຍັງ, ຖ້າບໍ່ແມ່ນ ເພື່ອສ້າງເງື່ອນໄຂໃຫ້ອາເມລິກາແຊກແຊງເຂົ້າລາວໂດຍກົງ. ໃນຖະແຫຼງການຂອງໄອແຊນຮາວ ຕໍ່ສັນຍາເຈນີວປີ ໑໙໕໔ ກ່ຽວກັບອິນດູຈີນກໍໄດ້ເວົ້າວ່າ: "ອາເມລິກາບໍ່ແມ່ນຝ່າຍໜຶ່ງທີ່ກ່ຽວຂ້ອງ ໃນມະຕິທີ່ຕານໃນກອງປະຊຸມນັ້ນ ແລະ ບໍ່ໄດ້ຖືກມະຕິດັ່ງກ່າວນັ້ນຜູກມັດ... ໃນສັນຍາທີ່ໄດ້ເຊັນກັນ, ມີບັດໃຈຕ່າງໆທີ່ພວກຂ້າພະເຈົ້າບໍ່ມັກ"..

ໃນທ້າຍປີ ໑໙໕໔, ໄດ້ມີ ເຫດການປັ່ນປ່ວນຫຼາຍຢ່າງ ເກີດຂຶ້ນຕິດຕໍ່ກັນໃນລັດຖະບານລາຊະອານາຈັກລາວນັ້ນ ໂດຍແມ່ນລູກມືອາເມລິກາກໍ່ຂຶ້ນ, ແລ້ວໄປເຖິງກະຕ່າຍຂຶ້ນເປັນນາຍົກລັດຖະມົນຕີ; ລັດຖະບານກະຕ່າຍ ກາຍເປັນເຄື່ອງມືຂອງ ອາເມລິກາ ແລະ ເປີດທາງໃຫ້ອາເມລິກາ ແຊກແຊງເຂົ້າລາວໂດຍກົງ. ເຫດການທີ່ກະຕ່າຍເອົາທະຫານໄປບຸກໂຈມຕີ ບຸກຍຶດສອງແຂວງເຕົ້າໂຮມຂອງແນວລາວຮັກຊາດ ແລະ ທຳລາຍສັນຍາສງົບຢູ່ທົ່ງໄຫຫີນນັ້ນ ແມ່ນເພື່ອຈຸດປະສົງຫຍັງ ? ກ່ຽວກັບເລື່ອງນີ້ ກະຕ່າຍເອງກໍປະກາດວ່າ: "ຄວາມຫວັງເບື້ອງຕົ້ນແມ່ນຕ້ອງເຮັດໃຫ້ຝ່າຍປະເທດລາວວາງອາວຸດ ແລະ ຍຸບກອງທະຫານຂອງພວກເຂົາ (ຕາມວິທະຍຸວຽງຈັນ ວັນທີ ໔/໑໐/໑໙໕໕). ໜັງສືພິມ "ນິວຢອກ ເຮຣາລ ຕະລິບູນ" ຂອງອາເມລິກາສະບັບວັນທີ ໒໘/໖/໑໙໕໕ ກໍໄດ້ລົມເຖິງຄວາມເວົ້າ

ຂອງ ດາເລດ ໃນເວລາມາວຽງຈັນເມື່ອເດືອນ ໒/໑໙໕໕ ທີ່ເວົ້າກັບນັກຂ່າວວ່າ: "ຈຳຕ້ອງມີການກະທຳທີ່ດຸເດືອດກ່ວານັ້ນອີກ ເພື່ອຕ້ານກັບຝ່າຍປະເທດລາວ."

ພາຍຫຼັງທີ່ໄດ້ມີສັນຍາເຊີແນວປີ ໑໙໕໔ ກ່ຽວກັບອິນດູຈີນ ຕໍ່ມາສອງເດືອນ, ອາເມລິກາໄດ້ສ້າງຕັ້ງກຸ່ມ ຊີອາໂຕຂຶ້ນ ແລະ ເອົາລາວເຂົ້າຢູ່ໃນຂົງເຂດອາລັກຂາຂອງກຸ່ມດັ່ງກ່າວນັ້ນ ຕາມລຳພັງໃຈ. ກະຕ່າຍກໍໄດ້ໄປຮ່ວມກອງປະຊຸມຕ່າງໆຂອງກຸ່ມ ຊີອາໂຕ ໃນຖານະຜູ້ສັງເກດການ. ໃນຕົ້ນປີ ໑໙໕໘ ພາຍຫຼັງທີ່ໄດ້ໂຄ່ນລົ້ມລັດຖະບານປະສົມເທື່ອທີ່ໜຶ່ງລົງແລ້ວ, ທ່ານ ຜູຍ ຊະນະນິກອນ ກໍໄດ້ປະກາດລົບລ້າງສັນຍາເຊີແນວປີ ໑໙໕໔ ແລະ ກະຊວງຕ່າງປະເທດຂອງອາເມລິກາກໍໄດ້ປະກາດຖະແຫຼງວ່າ: " ສະໜັບສະໜູນຄວາມຕັດສິນໃຈ" ຂອງລັດຖະບານ ຜູຍ ຊະນະນິກອນ ແລະ ວ່າ: "ແຕ່ນີ້ຕໍ່ໄປ, ລາວອາດຈະເຂົ້າຮ່ວມກຸ່ມ ຊີອາໂຕ". ໜັງສືພິມ ນິວຢອກ - ເຮລານ - ຕຼີບູນ ສະບັບວັນທີ ໙/໓/໑໙໕໘ ກໍໄດ້ເວົ້າວ່າ: "ການກະທຳຂອງທ່ານ ຜູຍ ຊະນະນິກອນ ດັ່ງກ່າວໄດ້ອຳນວຍໃຫ້ອາເມລິກາມີຄວາມສາມາດຫຼາຍກ່ວາເກົ່າ ໃນການຈັດຕັ້ງການປ້ອງກັນປະເທດທີ່ມີຄວາມສຳຄັນອັນນີ້" (ໝາຍເຖິງ ປະເທດລາວ).

ທາງພາຍໃນປະເທດ, ອາເມລິກາໄດ້ກຳເອົາກອງທະຫານລູກມື ຝະລັ່ງແຕ່ເກົ່າ, ປ່ຽນແປງເຄື່ອງແບບ, ລະບຽບແບບແຜນ ແລະ ອາວຸດຍຸດທະພັນໃຫ້ເປັນແບບອາເມລິກາ ; ເອົານາຍທະຫານອາເມລິກາເຂົ້າມາຄວບຄຸມກອງທະຫານນີ້ ດ້ວຍວິທີບັດເຂັ່ງທີ່ປຶກສາທະຫານຝະລັ່ງ ອອກເພື່ອລະກ້ວດ; ທຳການຈັບກຸມ ແລະ ຄາດຕະກຳບັນດາບຸກຄົນຜູ້ບໍ່ເຫັນພ້ອມກັບການແຊກແຊງຂອງອາເມລິກາ ຄືພະນະທ່ານກຸ ວໍລະວົງ ອະດີດລັດຖະມົນຕີກະຊວງປ້ອງກັນປະເທດ ແລະ ອື່ນໆ; ໃຊ້ກຳລັງທະຫານບີບບັງຄັບໃຫ້ລັດຖະບານລາວ ເວລານັ້ນຈຳຕ້ອງຍອມເປັນລູກມືໃຫ້ອາເມລິກາ; ສົ່ງກອງທະຫານລູກມືອາເມລິກາ ໄປບຸກໂຈມຕີ ໒ ແຂວງ ເຕົ້າໂຮມຂອງຝ່າຍປະເທດລາວ, ຫວັງຈະດັບສູນກຳລັງອັນນີ້ແລ້ວຢຶດເອົາ ໒ ແຂວງນັ້ນຢ່າງງ່າຍດາຍ. ເພື່ອຮັບໃຊ້ເຈດຈຳນົງອັນມືດມົນນີ້, ຈັກກະພັດອາເມລິກາໄດ້ເອົານາຍທະຫານອາເມລິກາເຂົ້າມາລາວຫຼາຍຂຶ້ນ ຊັກໃຊ້; ຈັດຕັ້ງອົງການ ຢູໂຊມ ( U.S.O.M. ) ຂຶ້ນເພື່ອຄວບຄຸມ ແລະ ໃຊ້ເຄື່ອງຂອງທີ່ຂົນເອົາມາຊ່ວຍລາວນັ້ນ ໃຫ້ເປັນທຶນໃຫ້ແກ່ການແຊກແຊງຮຸກຮານ ຂອງອາເມລິກາ, ເພີ່ມທະວີນາຍທະຫານເຂົ້າຢູ່ໃນອົງການ ຢູຊິດ ( U.S.I.S. ) ແລະ ສະຖານທູດອາເມລິກາ; ຫວ່ານກອງປົ້ນເຂົ້າໄປລົບກວນ ສອງແຂວງເຕົ້າໂຮມ ຂອງຝ່າຍປະເທດລາວ; ໃຊ້ກອງທະຫານແຕກທັບຈຽງໄກເຊັກ ໄປກໍ່ການວຸ້ນວາຍ ຢູ່ພາກເໜືອຂອງລາວ; ໃຊ້ບໍລິສັດເດີນອາກາດ "ແອອາເມລິກາ " ລຳລຽງຂົນສົ່ງອາວຸດຍຸດທະພັນ ໄປໃຫ້ກອງທະຫານລູກມືຂອງພວກເຂົານັ້ນ; ໃຊ້ພະນັກງານ ຟີລິປິນເປັນນັກສືບລັບ ຢາຍຢູ່ທົ່ວທຸກສຳນັກອົງການ ຫຼືຈັດຕັ້ງໂຮງໝໍຕາມເສັ້ນທາງເຄື່ອນທັບ ຂອງພວກເຂົາເພື່ອຮັບໃຊ້ການກໍ່ສົງຄາມ ຂຶ້ນໃນລາວ ແລະ ອື່ນໆອີກຫຼາຍຢ່າງ.

ບັນດາເຫດການດັ່ງກ່າວນັ້ນ ໄດ້ຢັ້ງຢືນວ່າ, ເພື່ອບໍ່ໃຫ້ມີການຜູກມັດໃນການແຊກແຊງເຂົ້າລາວ, ອາເມລິກາໄດ້ລົບລ້າງສັນຍາເຊີແນວປີ ໑໙໕໔ ກ່ຽວກັບອິນດູຈີນຢ່າງບັງອາດ ແລະ ໂດຍສິ້ນເຊີງ.

໓)- ຍ້ອນເຫດຜົນອັນໃດຈຶ່ງພາໃຫ້ເກີດກໍລະນີປີ ໑໙໕໘ ?

ກໍລະນີປີ ໑໙໕໘ ແມ່ນຫຍັງ ? ແມ່ນລະບົບດຽວ ແຫ່ງການທຳລາຍສັນຍາເຊີແນວປີ ໑໙໕໔ ກ່ຽວກັບອິນດູຈີນ ແລະ ສັນຍາວຽງຈັນປີ ໑໙໕໗, ທຳລາຍຄວາມຖືກຕ້ອງປອງດອງຊາດ ລະຫວ່າງສອງ

ຝ່າຍຢູ່ລາວ ເທື່ອທໍາອິດຂອງຈັກກະພັດອາເມລິກາ ແລະ ທ່ານ ຜຸຍ ຊະນະນິກອນ ລູກມືຂອງມັນໃນຄາວ ນັ້ນ.

ໂດຍມີຄວາມຢ້ານກົວຕໍ່ໄຊຊະນະອັນໃຫຍ່ຫຼວງ ຂອງຂະບວນຮັກຊາດຢູ່ລາວ ແລະ ຂອງກໍາລັງຝ່າຍປະເທດລາວ ເມື່ອປີ ໑໙໕໗ - ໑໙໕໘, ພ້ອມກັນນັ້ນກໍເພື່ອສືບຕໍ່ແຊກແຊງລາວ ແລະ ອິນດູຈີນ ຮັດເຂັມເຂົາກ່ອນເຄື່ອ, ຈັກກະພັດອາເມລິກາ ແລະ ລູກມືຈຶ່ງສວຍໂອກາດ ໃນເວລາທີ່ກໍາລັງແນວລາວຮັກຊາດ ເຂົ້າຮ່ວມໃນວົງສາຄະນາຍາດ ເພື່ອດໍາເນີນການຈັບກຸມຄຸມຂັງບັນດາຜູ້ນໍາຂອງແນວລາວຮັກຊາດ ເຊິ່ງມີທັງສະເດັດເຈົ້າສຸພານຸວົງ, ປາບປາມຈັບກຸມຄຸມຂັງ ແລະ ຍິງຂ້າພະນັກງານຂອງແນວລາວຮັກຊາດ, ທັບຄືນເມືອບ້ານຕາມສັນຍາວຽງຈັນ, ໃຊ້ກໍາລັງເຖິງ ໗, ໘ ກອງພັນປິດລ້ອມ ໒ ກອງພັນທີ່ຕັ້ງຢູ່ຊຽງເງິນ ແລະ ທົ່ງໄຫຫີນ, ບັງຄັບໃຫ້ນາຍທະຫານໃນ ໒ ກອງພັນນີ້ຍອມປ່ອຍໃຫ້ປົດອາວຸດ ຖອກນັ້ນ ແລະ ໃຫ້ພົນທະຫານຍອມປ່ອຍໃຫ້ແຍກຍ້າຍ ເຂົ້າໄປເຂົ້າກອງທະຫານຝ່າຍຂວາ ເພື່ອຈະບີບບັງຄັບໃຫ້ນັ້ງກໍາລັງຝ່າຍປະເທດລາວ ເພື່ອຈະດັບສູນກອງກໍາລັງອັນນີ້ໃນຂັ້ນສຸດທ້າຍ.

ໃນວັນທີ ໒໕/໑/໑໙໕໗, ໂຄສົກກະຊວງຕ່າງປະເທດ ອາເມລິກາ ຖະແຫຼງວ່າ: "ອາເມລິກາຖືວ່າ, ການຈັດຕັ້ງລັດຖະບານປະສົມອັນມີຜູ້ແທນ ຂອງຝ່າຍປະເທດລາວ ເຂົ້າຮ່ວມນໍານັ້ນແມ່ນອັນຕະລາຍ...". ເມື່ອເດືອນ ໘/໑໙໕໘ , ຈັກກະພັດອາເມລິກາ ແລະ ລູກມືຂອງມັນ ໃນເວລານັ້ນໄດ້ທໍາລາຍລັດຖະບານປະສົມ ຊຸດທໍາອິດ ທີ່ມີຕົວແທນແນວລາວຮັກຊາດເຂົ້າຮ່ວມນໍາ, ໂດຍໃຊ້ວິທີບັງຄັບລັດຖະບານລາວໃຫ້ຂຶ້ນລາຄາເງິນໂດລາຈາກ ໓໕ ມາເປັນ ໘໐ ກີບຕໍ່ ໑ ໂດລາ, ບັງຄັບລັດຖະບານລາວບໍ່ໃຫ້ປະຕິບັດນະໂຍບາຍເປັນກາງ, ເມື່ອເຫັນລັດຖະບານລາວ ບໍ່ຍອມປະຕິບັດຕາມຄວາມເວົ້າ ຂອງມັນ, ພວກມັນກໍໃຫ້ລູກມືຂອງມັນໃນລັດຖະບານ ແລະ ໃນກອງທະຫານ ຝ່າຍຂວາໂຄ່ນລົ້ມລັດຖະບານປະສົມນັ້ນລົງແລ້ວ ເອົາລູກມືຕົວບໍລິສຸດຂອງມັນຂຶ້ນກໍາອໍານາດແທນ. ຫນັງສືພິມ "ບາງກອກໂປດ" ສະບັບວັນທີ ໑໔/໑/໑໙໕໙ ຂຽນວ່າ: "... ນີ້ຂ່າວວ່າ ບາດກ້າວຕໍ່ໄປ ຂອງລັດຖະບານ ຜຸຍ ຊະນະນິກອນ ທີ່ຂຶ້ນແທນລັດຖະບານປະສົມແຕ່ງຊາດນັ້ນ ແມ່ນຈະເອົາພັກ ແນວລາວຮັກຊາດ ອອກນອກກົດຫມາຍ ເພື່ອໄຂທາງໃຫ້ແກ່ ອັນທີ່ເອີ້ນວ່າ ການຂໍຄວາມຊ່ວຍເຫຼືອ ຂອງອາເມລິກາ ແລະ ປັບປຸງເສດຖະກິດຂອງລາວ ທີ່ພວນຄອນແຄນ...".

ໃນການໂຄສນັກຫນັງສືພິມຢູ່ວຽງຈັນ ເມື່ອວັນທີ ໑໑/໒/໑໙໕໙, ທ່ານ ຜຸຍ ຊະນະນິກອນ ກໍໄດ້ປະກາດ ລົບລ້າງສັນຍາເຊີແນວປີ ໑໙໕໔ ກ່ຽວກັບອິນດູຈີນ. ໃນຂະນະດຽວກັນ, ຍັງປະກາດຂັບໄລ່ ຄະນະກໍາມະການສາກົນ ອອກຈາກລາວຢ່າງບັງອາດ ໂດຍອ້າງວ່າ ທະຫານຕ່າງດ້າວໄດ້ຖອນອອກຈາກດິນແດນລາວຫມົດແລ້ວ, ຄະນະກໍາມະການສາກົນບໍ່ມີວຽກຈະເຮັດອີກ. ແຕ່ນັ້ນມາ, ສະຖານະການບ້ານເມືອງໄດ້ມີການຂະຫຍາຍຕົວໄປທາງຮ້າຍຢ່າງຫນັກຫນ່ວງທີ່ສຸດ. ວັນທີ ໑໑/໕/໑໙໕໙, ທ່ານ ຜຸຍ ຊະນະນິກອນ ໄດ້ອອກຄໍາສັ່ງໃຫ້ ປິດລ້ອມ, ນາບຂູ່ ກອງທະຫານຂອງຝ່າຍປະເທດລາວ, ຕັດການລໍາລຽງຂົນສົ່ງ ສະບຽງອາຫານ ແລະ ບັງຄັບປົດອາວຸດ ຂອງພວກເຂົາເຈົ້າຄືດັ່ງກ່າວມາເທິງນີ້.

ວັນທີ ໒໑/໕/໑໙໕໙, ຄໍາພັນ ປັນຍາ, ລັດຖະມົນຕີກະຊວງຕ່າງປະເທດ ຂອງລັດຖະບານ ຜຸຍ ຊະນະນິກອນ ໃນຄາວນັ້ນ ໄດ້ຕອບຄໍາສໍາພາດ ຂອງສໍານັກຂ່າວສານ ອາເປ ຂອງອາເມລິກາວ່າ: "ລັດຖະບານ ພະລາຊະອານາຈັກລາວ ໄດ້ຕັດສິນດັບສູນ ພັກ ແນວລາວຮັກຊາດ, ຖ້າພັກນີ້ ຫາກບໍ່ຍອມສະຫວາມີພັກ". ວັນທີ ໒໕/໕/໑໙໕໙, ພວກເຂົາ ໄດ້ປະກາດໃຊ້ກໍາລັງອາວຸດ ດັບສູນ ກອງທະຫານຝ່າຍ

ປະເທດລາວດັ່ງກ່າວ.

ໂດຍເປັນຕໍ່ໜ້າກັບອຸບາຍອັນຮ້າຍກາດ ຂອງຈັກກະພັດອາເມລິກາ ແລະ ລູກນ້ອງດັ່ງກ່າວ, ກອງທະຫານຝ່າຍປະເທດລາວ ຈຶ່ງຈຳຕ້ອງມີການຕໍ່ສູ້ປ້ອງກັນຕົວຢ່າງຄົງອາດກ້າຫານ, ບຸກໂຈມຕີປິດລ້ອມຂອງກອງທະຫານລູກນ້ອງອາເມລິກາອອກໄປທາງເຂດທີ່ໝັ້ນເກົ່າເພື່ອຊອກຫາຄວາມປອດໄພ ແລະ ສືບຕໍ່ກຽມຕໍ່ສູ້.

ນັ້ນເປັນອັນຈະແຈ້ງແລ້ວວ່າ, ອ້ອມກັບອຸບາຍ ຂອງອາເມລິກາ ແລະ ທ່ານ ຕຸງຊະນະນຸກອນ ຕໍ່ເປັນລູກນ້ອງໃນຄາວນັ້ນ ໄດ້ເຮັດໃຫ້ຄວາມປອງດອງຊາດ ເທື່ອທຳອິດແຕກທະລາຍ, ສົງຄາມ ໄດ້ເກີດຂຶ້ນຢູ່ລາວຄືນໃໝ່. ເຫດການໃນຄາວນັ້ນແມ່ນ ອາເມລິກາ ແລະ ທ່ານ ຕຸງຊະນະນຸກອນ ນັ້ນເອງ ເປັນຜູ້ກໍ່ຂຶ້ນຢ່າງມີເຈດຕະນາ ແລະ ແຜນການລະອຽດທີ່ສຸດ; ດັ່ງນັ້ນພວກເຂົາຈຶ່ງເປັນຜູ້ຮັບຜິດຊອບໝົດທັງສິ້ນ.

ໃນວາລະປະຊຸມເທື່ອກ່ອນ, ຂ້າພະເຈົ້າກໍໄດ້ເວົ້າແລ້ວວ່າ ແມ່ນຈັກກະພັດອາເມລິກາ ແລະລູກນ້ອງນັ້ນເອງ ເປັນຜູ້ທຳລາຍສັນຍາເຊີແນວປີ ໑໙໖໒ ແລະ ສັນຍາຕ່າງໆຢູ່ລາວ.

ການກະທຳອັນເປີດແປນທີ່ສຸດຂອງອາເມລິກາ ແລະ ລູກນ້ອງນັ້ນ ໄດ້ມີຫຼັກຖານພິຍານລະອຽດຫຼວງຫຼາຍທີ່ສຸດ ເຊິ່ງລາວທຸກຄົນທີ່ເປັນຫ່ວງນຳໂຊກຊາຕາຂອງບ້ານເມືອງ ລ້ວນແຕ່ບໍ່ອາດຈະປະຕິເສດໄດ້. ໃນການກະທຳນ້າງໆດັ່ງກ່າວນັ້ນ, ອັນເປັນສິ່ງປ່າເຖື່ອນທີ່ສຸດ ແມ່ນຄະດີຄາດຕະກຳ ພະນະທ່ານກີນີມ ພົນເສນາ, ລັດຖະມົນຕີກະຊວງຕ່າງປະເທດຂອງລັດຖະບານປະສົມແຫ່ງຊາດສາມຝ່າຍ, ການປາບປາມຈັບກຸມ, ການລອບຄາດຕະກຳບຸກຄົນທີ່ມີຈິດໃຈອຽງໄປໃນທາງຊ້າຍຢູ່ກາງເມືອງວຽງຈັນຕັ້ງແຕ່ມີການຈັດຕັ້ງລັດຖະບານປະສົມແຫ່ງຊາດ ໓ ຝ່າຍຕັ້ງມາ. ພວກທີ່ກໍ່ຄວາມອຸບອາຍເຫຼົ່ານັ້ນ ລ້ວນແຕ່ແມ່ນພວກລູກນ້ອງທີ່ອາເມລິກາ ຊື້ຈ້າງ, ອົບຮົມ ແລະ ບັນຊາທັງນອນ. ການທີ່ພວກຂວາຈັດໃນຄາວນັ້ນ ເຮັດລັດຖະປະຫານ ໂຄ່ນລົ້ມລັດຖະບານປະສົມສາມຝ່າຍ ແລະ ຈັບສະເດັດເຈົ້າສຸວັນນະພູມາໄປຂັງເມື່ອວັນທີ ໑໙/໔/໑໙໖໔ ຢ່າງບ້າອາດນັ້ນ ເປັນຫຼັກຖານອັນແໜ້ນໜາທີ່ທຸກຄົນຄົງຈະຈື່ບໍ່ລືມ.

ນັບແຕ່ລັດຖະບານປະສົມສາມຝ່າຍໄດ້ຖືກໂຄ່ນລົ້ມແລ້ວ, ຄວາມຖືກຕ້ອງປອງດອງຊາດ ເທື່ອທີ່ ໒ ກໍໄດ້ຖືກແຕກທະລາຍ. ພວກລູກນ້ອງຂວາຈັດຂອງອາເມລິກາໄດ້ຂຶ້ນກຳອຳນາດ ແລະ ພາຍໃຕ້ການບັງຄັບບັນຊາຂອງສະຖານທູດອາເມລິກາຢູ່ວຽງຈັນ, ສົງຄາມຮຸກຮານຂອງອາເມລິກາຢູ່ລາວກໍໄດ້ສືບຕໍ່ຂະຫຍາຍຕົວອອກນັບມື້ນັບກ້ວາງຂວາງ.

ຝ່າຍຂວາວຽງຈັນຍັງຄົງອອກແຮງປົກປິດການກະທຳຕ່າງໆດັ່ງກ່າວນັ້ນ, ອ້າງກ່າວນັ້ນ, ອ້າງອອດອ້າງວ່າ, ຝ່າຍຂອງຕົນ ແລະ ນາຍຂອງຕົນ ເປັນຜູ້ເຄົາລົບສັນຍາເຊີແນວ, ເຄົາລົບຂໍ້ບັນຍັດກ່ຽວກັບຄວາມເປັນກາງຂອງລາວ; ແລ້ວຊ້ຳຍັງ ປັ້ນເລື່ອງນັ້ນເລື່ອງນີ້ມາອ້າງ ເພື່ອກ່າວຮ້າຍປ້າຍສີບັນດາກຳລັງຮັກຊາດ ແລະ ປະເທດສາທາລະນະລັດ ປະຊາທິປະໄຕຫວຽດນາມ ຢ່າງຂາດນາລະຍາດ ແລະ ບໍ່ມີມູນຄວາມຈິງ. ການປັ້ນນ້ຳໃຫ້ເປັນຕ່ອນແບບນັ້ນ ໃຊ່ກໍຍິ່ງເຫັນແຈ້ງວ່າ ແມ່ນຝ່າຍຂວາວຽງຈັນຫາເລື່ອງມາປົກປິດການແຊກແຊງຮຸກຮານ ກໍ່ສົງຄາມຂອງອາເມລິກາ ແລະ ລູກນ້ອງເພື່ອກໍ່ຄວາມອຸບອາຍຂຶ້ນໃນບ້ານເມືອງລາວ, ໂດຍເຈດຕະນາຈະເຮັດໃຫ້ການເຈລະຈາ ບໍ່ສຳເລັດ ແລະ ໃຫ້ອາເມລິກາ ແລະ ລູກນ້ອງສືບຕໍ່ເຮັດເສິກ ຢູ່ເມືອງລາວໄປເຖິງນານ. ກ່ຽວກັບເລື່ອງນີ້, ຝ່າຍຂວາ ວຽງຈັນຕ້ອງຮັບຜິດຊອບໝົດທັງສິ້ນ.

ພວກຂ້າພະເຈົ້າຄິດວ່າ, ພວກທ່ານອາດຈະບໍ່ໄດ້ອ່ານໝົດ ຫຼືອ່ານແລ້ວກໍທຳທ່າເຮັດຄືບໍ່ຮູ້ຈັກ ກັບເອກະສານລັບຕ່າງໆທີ່ໜັງສືພິມຕ່າງແດນ ໄດ້ເປີດເຜີຍກ່ຽວກັບບັນຫາອິນດູຈີນທີ່ຮູ້ກັນໝົດທົ່ວໂລກແລ້ວ. ເປັນຕົ້ນການພົບປະກັນ ລະຫວ່າງສານສະເດັດຢູ່ ທ່ຳຄຳລາແຊນ ແຊງກະຊຸ ປະເທດຝະລັ່ງຈັ່ງບໍ່ໄປ

ເຖິງຜົນສຳເລັດ, ເປັນຫຍັງຕັ້ງແຕ່ປີ ໑໙໖໔ ມານີ້, ອາເມລິກາຈຶ່ງດຳເນີນສົງຄາມດ້ວຍທັບອາກາດຢ່າງ ປ່າເຖື່ອນທີ່ສຸດທີ່ມີ ລັກສະນະລ້າງຕາມຢູ່ໃນປະເທດເຮົາ ? ຖ້າຢາກຮູ້ເລື່ອງນີ້ແທ້ໆ, ພວກທ່ານຈົ່ງອ່ານ ບັດຕີຂອງກອງເສນາທິການປະສົມ ກອງທັບອາເມລິກາ ກ່ຽວກັບແບບທາງການເຄື່ອນໄຫວທາງທະຫານຂອງ ເຂົາຢູ່ ອາຊີອາຄະເນ ລົງວັນທີ່ ໒໖/໕/໑໙໖໔ ແລະ ໂທລະເລກສະບັບວັນທີ່ ໒໖/໕/໑໙໖໔ ຂອງ ນາງ ດີນລັດ, ລັດຖະມົນຕີກະຊວງຕ່າງປະເທດອາເມລິກາທີ່ສົ່ງໃຫ້ ສະຖານທູດອາເມລິກາປະຈຳລາວ ຫຼື ອ່ານເບິ່ງໃບລາຍງານລົງວັນທີ່ ໑໐/໖/໑໙໖໔ ຂອງການປະຊຸມ ຜູ້ຕາງໜ້າອາເມລິກາທີ່ກອດກາການ ເຄື່ອນໄຫວຂອງອາເມລິກາຢູ່ລາວ, ເຊິ່ງເອກະສານເຫຼົ່ານັ້ນ ລ້ວນແຕ່ໄດ້ໝາຍເຖິງວ່າ ອາເມລິກາຈະ ເຮັດຫຍັງຢູ່ລາວ, ບໍ່ຈຳເປັນຈະຕ້ອງມີຄຳອະນຸຍາດຈາກອຳນາດການປົກຄອງວຽງຈັນ, ມີແຕ່ຖ້າຕ້ອງການ ກໍບອກໃຫ້ພວກເຂົາຮູ້ກ່ອນເທົ່ານັ້ນກໍໄດ້. ເອກະສານເຫຼົ່ານັ້ນ ພຽງແຕ່ແມ່ນບາງຕອນໃນເອກະສານລັບຂອງ ຫ້ານຽບຫ້າແຈ.

ໃນຄວາມຈິງແລ້ວ, ອາເມລິກາ ຮຸກຮານລາວແມ່ນເນື່ອງມາຈາກເຈດຕະນາຂອງພວກເຂົາ ຕໍ່ລາວ ໂດຍສະເພາະ, ພ້ອມກັນນັ້ນກໍແມ່ນເພື່ອໃຊ້ລາວເປັນແປ້ນຍັນສຳລັບ ທຳລາຍປະເທດ ສາທາລະນະລັດ ປະຊາທິປະໄຕຫວຽດນາມ ແລະ ເພີ່ມທະວີການຮຸກຮານພາກໃຕ້ຫວຽດນາມ. ແຕ່ປານນັ້ນ, ເປັນຫຍັງ ອາເມລິກາ ແລະ ລູກມືຈຶ່ງບໍ່ໄດ້ລົດລະໃນການຮ້ອງໂຮວ່າ, ປະເທດສາທາລະນະລັດ ປະຊາທິປະໄຕຫວຽດ ນາມເປັນຜູ້ຮຸກຮານ ? ທັງນີ້ແມ່ນເພື່ອປົກປິດໃບໜ້າຂອງພວກເຂົາ, ເພື່ອຫຼອກລວງທາງສຽງທົ່ວໄປ ແລະ ເພື່ອສືບຕໍ່ການຮຸກຮານຂອງອາເມລິກາຢູ່ລາວ.

໔)- <u>ເປັນຫຍັງຝ່າຍເປັນກາງຂອງສະເດັດເຈົ້າສຸວັນນະພູມາຈຶ່ງຖືກແຕກແຍກ</u> ?

ພາຍຫຼັງທີ່ໄດ້ເຊັນສັນຍາເຈນີວປີ ໑໙໖໒ ກ່ຽວກັບລາວ ແລະ ໄດ້ຈັດຕັ້ງລັດຖະບານປະສົມ ສາມຝ່າຍແລ້ວ, ສະເດັດເຈົ້າສຸວັນນະພູມາ ເຊິ່ງເປັນຫົວໜ້າຂອງຝ່າຍເປັນກາງ ໃນເວລານັ້ນໄດ້ປັ່ນປົ້ນ ນັບທາງເດີນຈາກເສັ້ນທາງອັນຖືກຕ້ອງຂອງຊາດ, ແລ້ວຄືນໄປອີງໃສ່ຝ່າຍຂວາ ເພື່ອຕ້ານກັບກຳລັງທີ່ຮັກ ຊາດ, ສະເດັດເຈົ້າສຸວັນນະພູມາ ແລະ ກອງແລໄດ້ ປ່ອຍໃຫ້ກຳລັງຂອງພູມີໜໍ່ສະຫວັນແຊກຊຶມເຂົ້າໃນກຳ ລັງຂອງຕົນດ້ວຍຫຼາຍວິທີ. ເມື່ອສົ່ງພວກຕົນມີເຂົ້າໄປຢູ່ໃນກຳລັງເປັນກາງໄດ້ແລ້ວ, ອາເມລິກາ ແລະ ພວກລູກມືຂວາຈັດກໍໄດ້ດຳເນີນການປາບປາມ, ຈັບກຸມ ຜູ້ຄົນທີ່ເປັນກາງແທ້ຈິງ.

ຕໍ່ໜ້າກົນອຸບາຍຂອງສັດຕູ ແລະ ທ່າທີຍອມຈຳນົນຂອງສະເດັດເຈົ້າສຸວັນນະພູມາດັ່ງນັ້ນ, ມັນ ກໍເປັນທຳມະດາຢູ່ແລ້ວວ່າ, ກຳລັງເປັນກາງຈຶ່ງມີການພັນແຍກ. ພາກສ່ວນເປັນກາງທີ່ຮັກຊາດກໍໄດ້ເຕົ້າ ໂຮມກັນ ແລະ ສືບຕໍ່ປັບປຸງກຳລັງຂອງຕົນຕໍ່ໄປ ແລະ ຂະຫຍາຍການສຳພັນກັບແນວລາວຮັກຊາດ ຕາມ ນະໂຍບາຍເດີມຂອງຄະນະລັດຖະປະຫານ ໓-໕-໖໐ ເພື່ອດຳເນີນການຕໍ່ສູ້ຕໍ່ໄປ, ເຮັດໃຫ້ການສຳ ພັນດັ່ງກ່າວນັ້ນໄດ້ໜັ້ນແໜ້ນຂະຫຍາຍຕົວ. ກົງກັນຂ້າມ, ພາກສ່ວນທີ່ໄປນຳສະເດັດເຈົ້າສຸວັນນະພູມາ ໄດ້ ນັບມື້ນັບຖືກສັດຕູ ຈຳກັດຄອບງຳ ແລະ ຕົນສຸດທ້າຍກອງແລກໍໄດ້ຖືກເຂັ່ຽອອກ ແລະ ສະເດັດເຈົ້າສຸວັນນະ ພູມາກໍໄດ້ປະກາດເອົາກຳລັງດັ່ງກ່າວໄປຂຶ້ນກັບຝ່າຍຂວາໂດຍກົງ. ໃນບັນຫານີ້, ຂ້າພະເຈົ້າຄິດວ່າ ຄະນະ ຜູ້ແທນຝ່າຍວຽງຈັນຄົງຈະເຂົ້າໃຈດີກວ່າພວກຂ້າພະເຈົ້າ. ນັ້ນແມ່ນສາຍເຫດທີ່ພາໃຫ້ກຳລັງເປັນກາງຂອງ ສະເດັດເຈົ້າສຸວັນນະພູມາຖືກແຕກແຍກ. ສິ່ງທັງໝົດເຫຼົ່ານີ້ ແມ່ນສະພາບຕົວຈິງຂອງປະຫວັດສາດລາວ ເຊິ່ງໃຜຈະໃຊ້ເລ່ຫຼ່ຽມແນວໃດມາບິດເບືອນນັ້ນກໍບໍ່ໄດ້ຢ່າງເດັດຂາດ.

ພວກຂ້າພະເຈົ້າຄິດວ່າ ການອະທິບາຍເພີ່ມເຕີມຂອງພວກຂ້າພະເຈົ້າ ໃນບັນຫານີ້ ຈະເປັນການຊ່ວຍເຮັດໃຫ້ຄວາມສັບສົນຜິດພາດຂອງພວກທ່ານກະຈ່າງແຈ້ງຕື່ມ. ຍິ່ງກວ່ານັ້ນ, ບັນດາຜູ້ທີ່ໄດ້ເຫັນເລື່ອງດັ່ງກ່າວນັ້ນ ກັບຫູກັບຕາກໍ່ຍັງຢູ່ນະທີ່ນີ້. ພວກເຮົາຍັງມີໂອກາດຫຼາຍເພື່ອຈະແລກປ່ຽນກັນຕື່ມໃນເລື່ອງນີ້.

## II : <u>ສະພາບການຕົວຈິງຢູ່ລາວ ໃນປະຈຸບັນແມ່ນແນວໃດ</u> ?

໑/- <u>ຈັກກະພັດອາເມລິກາ ໄດ້ເພີ່ມທະວີສົງຄາມຮຸກຮານລາວ; ໂດຍສະເພາະແມ່ນຕັ້ງແຕ່ນິກເຊີນ ຂຶ້ນກຳອຳນາດ ເປັນຕົ້ນມາ ສົງຄາມພິເສດ ຂອງອາເມລິກາຢູ່ລາວ ໄດ້ກ້າວເຖິງຂັ້ນສຸດຍອດ, ແລະແຕກດັບປະລາໄຊ ຢ່າງໜັກໜ່ວງທີ່ສຸດ</u>.

ຈັກກະພັດອາເມລິກາໄດ້ອີງໃສ່ການຊ່ວຍເຫຼືອ ເປັນຄັນຕາລະບັດບັງໜ້າ ເພື່ອດຳເນີນສົງຄາມຮຸກຮານລາວ. ໃນແຕ່ລະປີ, ໂດຍສະເພາະແມ່ນ ໃນຫຼາຍປີ ມໍ່ໆມານີ້ ການຊ່ວຍເຫຼືອຂອງອາເມລິກາ ໃຫ້ອຳນາດການປົກຄອງວຽງຈັນ ໄດ້ເພີ່ມຂຶ້ນສູ່ລະດັບສູງ. ຕົວຢ່າງ ໃນເລື່ອງນີ້ເຫັນຊັດທີ່ສຸດ; ສະເພາະການຊ່ວຍເຫຼືອທາງທະຫານໃນປີ ໑໙໕໓ ມີພຽງແຕ່ ໑໑ ລ້ານ ໙ ແສນໂດລາເທົ່ານັ້ນ, ແຕ່ມາຮອດປີ ໑໙໗໒ ໄດ້ແລ່ນຂຶ້ນເຖິງ ໒໕໒.໑໐໐.໐໐໐ ໂດລາ, ຖ້າໄລ່ທັງການຊ່ວຍເຫຼືອດ້ານອື່ນອີກ ກໍ່ເຖິງ ໓໒໐ ກວ່າລ້ານໂດລາ, ຫຼື ຫຼາຍກວ່ານັ້ນ; ໜັງສືພິມ ເລີມົງ ຂອງຝະລັ່ງ ຍັງເປີດເຜີຍວ່າ: "ໃນງົບປະມານສົກປີ ໑໙໗໑-໗໒, ການຊ່ວຍເຫຼືອ ຂອງອາເມລິກາ ໃຫ້ອຳນາດການປົກຄອງວຽງຈັນ ມີເຖິງ ໓໗໒ ລ້ານໂດລາ". ຖ້າປຽບໃສ່ກ່ອນໜ້ານີ້ ໙ ປີ ແມ່ນໄດ້ເພີ່ມຂຶ້ນເຖິງ ໒໕ ເທື່ອ.

ຄຽງຄູ່ກັບການເພີ່ມ ຈຳນວນການຊ່ວຍເຫຼືອດັ່ງກ່າວນັ້ນ, ອາເມລິກາກໍໄດ້ເພີ່ມຈຳນວນທີ່ປຶກສາ ແລະ ພະນັກງານທະຫານ ຂອງອາເມລິກາ ຢູ່ລາວຂຶ້ນຢ່າງໄວວາ. ໃນສະໄໝ ໂຢນເຊີນ ກຳອຳນາດ, ທີ່ປຶກສາ ແລະ ພະນັກງານອາເມລິກາຢູ່ລາວ ມີພຽງແຕ່ ໕.໐໐໐ ຄົນ, ແຕ່ມາດຽວນີ້ ໄດ້ຂຶ້ນເຖິງ ໑໒.໐໐໐ ຄົນ. ວາລະສານ ເອແວນ ເນີມັງ ( EVENEMENT ) ເມື່ອເດືອນ ໑/໑໙໕໙ ແລະ ໜັງສືພິມ ເລີມົງ ຂອງຝະລັ່ງ ກໍໄດ້ແຈ້ງວ່າ ຄົນອາເມລິກາ ທີ່ເຄື່ອນໄຫວຢູ່ລາວ ມີເຖິງ ໑໒.໐໐໐ ຄົນ. ພ້ອມກັນນັ້ນ, ການເພີ່ມທະວີທີ່ປຶກສາ ແລະ ທະຫານເລວຮັບຈ້າງຂອງໄທ ຢູ່ລາວ ກໍໄດ້ເພີ່ມຂຶ້ນຢ່າງໄວວາເຊັ່ນດຽວກັນ, ຄືໃນປີ ໑໙໕໘ ມີພຽງແຕ່ ໘໐໐ ຄົນເທົ່ານັ້ນ, ມາຮອດປີ ໑໙໗໐ ຂຶ້ນເຖິງ ໑໒.໐໐໐ ຄົນ ແລະ ຮອດປີ ໑໙໗໒ ຂຶ້ນເຖິງ ໒໐.໐໐໐ ກວ່າຄົນ. ຂ່າວສານ ລາເປ ຂອງອາເມລິກາ ເມື່ອວັນທີ ໒໘/໑/໑໙໗໐ ກໍໄດ້ຮັບວ່າ ທະຫານໄທຢູ່ລາວມີເຖິງ ໑໒.໐໐໐ ຄົນ.

ເພື່ອຊຸກຍູ້ສົງຄາມພິເສດ ຂອງອາເມລິກາຢູ່ລາວ, ອາເມລິກາ ໄດ້ອອກແຮງກໍ່ສ້າງທະຫານເລວຮັບຈ້າງ ຢ່າງຮີບຮ້ອນທີ່ສຸດ ແລະ ໄດ້ຍົກຈຳນວນພົນຂຶ້ນສູ່ລະດັບສູງຢ່າງບໍ່ເຄີຍເຫັນມາແຕ່ກ່ອນ, ເປັນຕົ້ນແມ່ນກຳລັງພິເສດ ຊຶ່ງແມ່ນ ເຊອີອາ ເປັນຜູ້ສ້າງ, ລ້ຽງດູ ແລະ ບັງຄັບບັນຊາໂດຍກົງ. ພວກເຂົາສ້າງໃຫ້ກຳລັງນີ້ມີລັກສະນະເປັນ ອານາຈັກນ້ອຍ ເພື່ອຮັບໃຊ້ກົນອຸບາຍອັນຍາວນານ ຂອງອາເມລິກາຢູ່ລາວ, ໂດຍສະເພາະແມ່ນແນໃສ່ທຳລາຍເຂດປົດປ່ອຍ ຂອງບັນດາກຳລັງຮັກຊາດ. ອາເມລິກາ ໄດ້ອີງໃສ່ທະຫານ ທີ່ຝະລັ່ງປະໄວ້ ໑໗.໐໐໐ ຄົນ ນັ້ນມາເພີ່ມທະວີ ແລະ ກໍ່ສ້າງໃຫ້ເປັນທະຫານປະຈຳການເຖິງ ໗໐.໐໐໐ ຄົນ ແລະ ອີງໃສ່ທະຫານກອງປ່າວ ໓.໑໐໐ ຄົນ ມາເພີ່ມທະວີ ແລະ ກໍ່ສ້າງໃຫ້ມາກາຍເປັ

ກຳລັງພິເສດ ອັນມີຈຳນວນເຖິງ ໓໐.໐໐໐ ຄົນ.

ພ້ອມກັນນັ້ນ, ອາເມລິກາ ກໍໄດ້ເພີ່ມທະວີສົງຄາມ ດ້ວຍກຳລັງທັບອາກາດຂອງອາເມລິກາເອງ ໃສ່ປະເທດເຮົາຢ່າງໂຫດຮ້າຍສາມານທີ່ສຸດ, ສະເພາະຢ່າງຍິ່ງ ຕັ້ງແຕ່ ນິກຊັນ ຂຶ້ນກຳອຳນາດ ເປັນຕົ້ນມາ. ໃນສະໄໝ ໂຢນຊັນ, ປະຣິມານລະເບີດ ທັງໝົດທີ່ຖິ້ມ ປີ ໑໙໖໘ ກວມເອົາແຕ່ ໕ ແສນເຖິງ ໖ ແສນໂຕນ. ແຕ່ໃນ ໓ ປີ ທີ່ນິກຊັນ ຂຶ້ນກຳອຳນາດ ໄລ່ມາຮອດປີ ໑໙໗໑ ເທົ່ານັ້ນ, ອາເມລິກາ ໄດ້ເອົາລະເບີດມາຖິ້ມໃສ່ປະເທດເຮົາ ເຖິງ ໓ ລ້ານໂຕນ, ເທົ່າກັບ ກຳລັງແຮງ ຂອງລະເບີດ ປະລະມານູ ທີ່ອາເມລິກາຖິ້ມລົງໃສ່ ຮີໂລ ຊີມາ, ປະເທດຍີ່ປຸ່ນ ເມື່ອປີ ໑໙໔໕ ນັ້ນ ໑໕໐ ໜ່ວຍ; ຖ້າຈະແບ່ງປັນໃສ່ຈຳນວນຄົນແລ້ວ ປະຊາຊົນລາວຜູ້ໜຶ່ງ ຕ້ອງຮັບແບກເອົາລະເບີດຂອງອາເມລິກາ ໜຶ່ງໂຕນປາຍ.

ຄຽງຄູ່ກັບກົນອຸບາຍ ເຮັດໃຫ້ສົງຄາມຢູ່ພາກໃຕ້ຫວຽດນາມ ກາຍເປັນຂອງຄົນຫວຽດນາມ ແລະ ສົງຄາມຢູ່ ກຳພູຊາ ກາຍເປັນຂອງຄົນກຳພູຊານັ້ນ, ອາເມລິກາ ກໍໄດ້ເຮັດໃຫ້ສົງຄາມຮຸກຮານລາວເຮົາ ເພີ່ມທະວີຄວາມຮ້າຍແຮງຂຶ້ນອີກໃໝ່. ແຕ່ເຖິງແນວໃດກໍດີ, ອາເມລິກາ ກໍຍິ່ງປະລາໄຊໜັກ, ບັນດາກຳລັງຮັກຊາດ ແລະ ປະຊາຊົນ ໃນເຂດປົດປ່ອຍ ກໍໄດ້ລົງໂທດຢ່າງສົມນ້ຳໜ້າທີ່ສຸດ, ເຮັດໃຫ້ ຕຳລາ ທິດສະດີ ນິກຊັນ ທີ່ພວກເຂົານຳມາໃຊ້ຢູ່ລາວ ຖືກພັງທະລາຍລົງເທື່ອລະກ້າວ ແລະ ຖ້າພວກເຂົາຫາກບໍ່ງົດເຊົາເຈຕະນາອັນມືດມົນອັນນີ້, ພວກເຂົາກໍມີແຕ່ຈະເດີນເລິກເຂົ້າໄປຫາຄວາມປະລາໄຊຢ່າງສົ້ນເຊີງ.

ສິ່ງທີ່ກ່າວມານີ້ ແມ່ນ ສະພາບຄວາມຈິງ ເລື່ອງໜຶ່ງໃນລາວ, ແລະ ແມ່ນ ຫຼັກຖານພິຍານອັນຈະແຈ້ງອັນໜຶ່ງ ທີ່ບໍ່ມີຜູ້ໃດປະຕິເສດໄດ້ ກ່ຽວກັບການຮຸກຮານ ຂອງອາເມລິກາ ຢູ່ໃນປະເທດລາວເຮົາ.

໖/- <u>ອັນທີ່ເອີ້ນວ່າ "ລັດຖະບານປະສົມ ຢູ່ວຽງຈັນ ໃນປະຈຸບັນນັ້ນບໍ່ແມ່ນ ລັດຖະບານປະສົມຊົ່ວຄາວແຫ່ງຊາດ ໓ ຝ່າຍອີກແລ້ວ.</u>

ພື້ນຖານ ຂອງສັນຍາ ຊູລິກ, ຫີນເຫີບ ແລະ ທົ່ງໄຫຫີນ ໄດ້ຖືກລົບລ້າງຢ່າງສົ້ນເຊີງແລ້ວ. ລັດຖະບານປະສົມສາມຝ່າຍ ໄດ້ຖືກໂຄ່ນລົ້ມແຕ່ປີ ໑໙໖໔ ຄືຂ້າພະເຈົ້າໄດ້ເວົ້າມາເທື່ອແລ້ວນີ້. ອຳນາດການປົກຄອງວຽງຈັນປະຈຸບັນນີ້ ນັ້ນບໍ່ແມ່ນ ລັດຖະບານປະສົມຊົ່ວຄາວແຫ່ງຊາດ ໓ ຝ່າຍ ຈັກເມັດເລີຍ ທາງດ້ານສ່ວນປະກອບ, ດ້ານໂຄງຮ່າງ, ດ້ານວິທີເຮັດວຽກ ແລະ ດ້ານການກະທຳຕົວຈິງກໍໄດ້ຖືກອາເມລິກາ ແລະ ລູກມືນາງ ເພທຳລາຍໄປໝົດແລ້ວ.

ໃນຈຳນວນລັດຖະມົນຕີ ແລະ ຮອງລັດຖະມົນຕີ ໑໙ ທ່ານ ຂອງລັດຖະບານປະສົມແຫ່ງຊາດ ໓ ຝ່າຍນັ້ນ ຍັງເຫຼືອແຕ່ ໗ ຄົນ ທີ່ນິຍົມອາເມລິກາຫຼື ຍອມຈຳນົນອາເມລິກາເທົ່ານັ້ນ.

ຮູບ ແລະ ໂຄງຮ່າງ ລັດຖະບານປະສົມຊົ່ວຄາວແຫ່ງຊາດ ໓ ຝ່າຍ ອັນແທ້ຈິງນັ້ນ, ແມ່ນຕາມສັນຍາທີ່ໄດ້ເຊັນໃນເດືອນ ໖/໑໙໖໒ ທີ່ທົ່ງໄຫຫີນ. ແຕ່ວ່າ ສ່ວນວ່າ ຮູບ ແລະ ໂຄງຮ່າງ ຂອງອຳນາດການປົກຄອງວຽງຈັນ ປະຈຸບັນນີ້ ບໍ່ແມ່ນແບບ ໓ ຝ່າຍອີກແລ້ວ. ຫຼັງຈາກໄດ້ຍຸບ ກຳລັງເປັນກາງຂອງເພິ່ນເອງທີ່ຍັງເຫຼືອເລັກນ້ອຍ, ແລ້ວເອົາໄປຂຶ້ນກັບຝ່າຍຂວາແລ້ວ, ສະເດັດເຈົ້າສຸວັນນະພູມາກໍໄດ້ກາຍເປັນຫົວໜ້າຂອງຝ່າຍຂວາ ແລະ ໄດ້ກາຍເປັນຝ່າຍຂວາວຽງຈັນຢ່າງຈະແຈ້ງ. ໜັງສືພິມຂອງ ອາເມລິກາ "ທາຍ" ( TIME ) ສະບັບລົງວັນທີ ໓໐/໑໐/໑໙໗໓ ກໍໄດ້ຊີ້ໃຫ້ເຫັນວ່າ " ນາຍົກ ເຈົ້າສຸວັນນະພູມາ ຄົງຕົວຢູ່ໄດ້ ກໍຍ້ອນແຕ່ ການຄຸ້ມຊູ ຂອງຝ່າຍຂວາເທົ່ານັ້ນ". ເມື່ອເປັນແນວນັ້ນ, ຈະເອີ້ນອຳນາດການປົກຄອງວຽງຈັນ ເປັນລັດຖະບານປະສົມແຫ່ງຊາດ ໓ ຝ່າຍໄດ້ແນວໃດ ?.

ລັດຖະບານປະສົມແຫ່ງຊາດ ນ໌ ຝ່າຍ ເດີມແມ່ນ ສ້າງຕັ້ງຂຶ້ນ ບົນພື້ນຖານຂອງສັນຍາ ໝົດຄຸນຄ່າ ທາງກົດໝາຍ ທັງພາຍໃນ ແລະ ຕ່າງປະເທດ, ຕາມວິທີການພິເສດ, ຖືກແຕ່ງຕັ້ງ ໂດຍກົງ ໂດຍ ພະລາຊະອົງການ ຂອງພະບາດສົມເດັດ ພະເຈົ້າມະຫາຊີວິດ, ບໍ່ຜ່ານອົງການທີ່ເອີ້ນວ່າ ສະພາແຫ່ງຊາດ ຂອງຝ່າຍຂວາ. ວິທີເຮັດວຽກຂອງມັນ ແມ່ນຕ້ອງເປັນສາທາລະເປັນເອກະສັນທັງສາມຝ່າຍ ແລ້ວຈຶ່ງ ເຮັດໄດ້. ສ່ວນອຳນາດການປົກຄອງວຽງຈັນ ປະຈຸບັນນັ້ນແມ່ນ ຈັດຕັ້ງຂຶ້ນໂດຍຝ່າຍຂວາຜູ້ດຽວດ້ວຍ ການ ລັດຖະປະຫານ, ເຮັດວຽກແບບຜະເດັດການ ແຕ່ຝ່າຍດຽວ ແລະ ຂຶ້ນກັບແຕ່ງ ໄທ້ວາງນັ້ນ, ມັນຍັງມອບ ຕົວເຂົ້າໄປຢູ່ພາຍໃຕ້ ອຳນາດຄວບຄຸມ ຂອງອົງການທີ່ເອີ້ນວ່າ "ສະພາແຫ່ງຊາດ" ທີ່ຜິດກົດໝາຍ ຂອງ ຝ່າຍຂວາ ເຊິ່ງສັນຍາ ນ໌ ຝ່າຍ ໄດ້ປະຕິເສດຢ່າງຈະແຈ້ງແລ້ວ. ດັ່ງນັ້ນ, ໃນອະໄປ ເອີ້ນອຳນາດ ການປົກຄອງວຽງຈັນ ປະຈຸບັນນີ້ເປັນ ລັດຖະບານປະສົມແຫ່ງຊາດ ນ໌ ຝ່າຍ ແມ່ນບໍ່ໄດ້ຢ່າງເດັດຂາດ. ທຸກຄົນທີ່ຮູ້ເລື່ອງດີ ຄົງຈະບໍ່ຫຼົງເຊື່ອຄວາມຫຼອກລວງອັນໄຮ້ສາລະແບບນີ້.

ໃນການກະທຳຕົວຈິງຂອງມັນ, ອຳນາດການປົກຄອງວຽງຈັນ ປະຈຸບັນນີ້ ໄດ້ກາຍເປັນເຄື່ອງ ມືຮັບໃຊ້ສົງຄາມພິເສດ ຂອງອາເມລິກາ ຢູ່ໃນປະເທດລາວ, ປະຕິບັດຕາມຄຳສັ່ງຂອງອາເມລິກາ. ໃນ ຖະແຫຼງການຂອງ ໂຄສົກກະຊວງການຕ່າງປະເທດອາເມລິກາ ລົງວັນທີ ໑໗/໕/໑໙໕໔ ໄດ້ເວົ້າວ່າ "ສະຫະລັດອາເມລິກາ ກຽມພ້ອມຈະໃຊ້ທຸກມາດຕະການ ທີ່ຈຳເປັນ ເພື່ອຕັດສິນສະພາບການໃນລາວ. ທຸກການກະທຳຂອງອາເມລິກາ (ໃນລາວ) ຈະຢູ່ໃນຂອບເຂດ ມະຕິຂອງ ສະພາສູງອາເມລິກາ ກ່ຽວ ກັບ ອາຊີ ອາຄະເນ ລົງວັນທີ ໑໐/໕/໑໙໕໔ ທີ່ອະນຸຍາດໃຫ້ ປະທານາທິບໍດີ ໂຢນເຊີນ ນີ້ສົດໃຊ້ວິ ທີການ ທີ່ຈຳເປັນ ລວມທັງໃຊ້ກຳລັງອາວຸດ ເພື່ອປ້ອງກັນ ຜົນປະໂຫຍດຂອງອາເມລິກາ ໃນອາຊີ ອາ ຄະເນ, ພາຍຫຼັງກໍລະນີ "ອ່າວຕັງແກງ". ໃນຕົວຈິງແລ້ວ ອຳນາດການປົກຄອງວຽງຈັນ ກໍໄດ້ປະຕິບັດ ນະໂຍບາຍ ເດີນຕາມອາເມລິກາ, ເປັນສາກບັງໜ້າ ແລະ ຮ່ວມໄມ້ຮ່ວມມືກັບຈັກກະພັດອາເມລິກາ ຢ່າງ ບອກໄດ້ໃຊ້ພັງທີ່ສຸດ, ຍິນຍອມໃຫ້ອາເມລິກາໃຊ້ເຮືອບິນ, ກອງທະຫານປະຈຳການ ແລະ ກອງທະຫານ ນອກລະບຽບ ພ້ອມທັງອາວຸດຍຸດໂທປະກອນ ເປັນຈຳນວນຫຼວງຫຼາຍ ມາເຂັ່ນຂ້າຮາວີປະຊາຊົນລາວ, ທຳ ລາຍວັດວາອາຮາມ, ມ້າງເພ ເຮືອນຊານບ້ານຊ່ອງ ໄຮ່ນາ ຮົ້ວສວນ ຂອງ ປະຊາຊົນສາມັນຢ່າງໂຫດ ຮ້າຍ ປ່າເຖື່ອນທີ່ສຸດ.

ພວກເຂົາ ໄດ້ເຮັດໃຫ້ເສດຖະກິດການເງິນ ຂອງເຂດທີ່ພວກເຂົາຄວບຄຸມ ຂຶ້ນກັບເສດຖະກິດອາ ເມລິກາ ແລະ ຂອງພວກປະຕິການໄທ, ຊີວິດການເປັນຢູ່ຂອງປະຊາຊົນນັບມື້ນັບຝືດເຄືອງ, ເງິນກີບລົງ ລາຄາ ເລື້ອຍໆຈົນກະທັ່ງເປັນເງິນເຟີ້, ລາຄາສິນຄ້າຖີບຂຶ້ນສູງ, ເຮັດໃຫ້ພວກລູກມືອາເມລິກາຈຳ ນວນໜຶ່ງຮັ່ງຂຶ້ນຢ່າງໄວວາ, ຂ້າລາຊະການ, ທະຫານ, ຕຳຫຼວດ ແລະ ປະຊາຊົນ ນັບມື້ນັບອັດຕະຄັດ ຂັດສົນລົງທຸກມື້. ຕົນເອງທີ່ເຮັດໃຫ້ບ້ານເມືອງລາວເຂົ້າຕົກຢູ່ໃນສະພາບເປັນແນວນັ້ນ ແມ່ນຍ້ອນການ ຄອບງຳ ຄວບຄຸມຂອງອາເມລິກາ, ໄທ ແລະ ພັກພວກຂອງມັນເທົ່ານັ້ນ, ບໍ່ແມ່ນຍ້ອນຜູ້ອື່ນໃດ.

ອຳນາດການປົກຄອງວຽງຈັນ ບໍ່ມີການຕ່າງປະເທດ ເປັນເອກະລາດ, ທຸກການເຄື່ອນໄຫວ ລ້ວນແຕ່ຖືກອາເມລິກາຄວບຄຸມ. ພວກເຂົາໄດ້ປະຕິບັດ ຕາມຄຳຊີ້ນຳຂອງອາເມລິກາ ໄປຮ່ວມທຸກກອງ ປະຊຸມ ຂອງກຸ່ມສຳພັນ ທາງທະຫານແບບໃໝ່. ຕົວຢ່າງ ກອງປະຊຸມ ບັນດາລັດຖະມົນຕີກະຊວງການ ຕ່າງປະເທດຂອງ ບັນດາປະເທດ ອາຊີ- ປາຊີຟິກຢູ່ ເຊອຸນ (ເກົາຫຼີໃຕ້ ໃນປີ ໑໙໖໘), ກອງປະຊຸມ

ຄັ້ງທີ 6 ຂອງສະພາອາຊີ ປາຊີຟິກ ໃນເດືອນ ກ/໑໙໗໙ ແລະ ໄດ້ປະກາດຢ່າງບ້າອາດວ່າ "ລາວໄດ້ມີສັນຍາເຊີແນວປີ ໑໙໕໔ ຫາກໍ່ຈິງ ແຕ່ພວກເຮົາ (ໝາຍເຖິງພວກກຳອຳນາດການປົກຄອງວຽງຈັນ) ມີສິດປ່ຽນທ່າທີ ແລະ ເຂົ້າເປັນສະມາຊິກ ສະພາອາຊີ" (ຖະແຫຼງການຂອງ ທຸນພັນ ໄຊຍະສິດ ຢູ່ບາງກອກ ວັນທີ ນ/ກ/໑໙໗໙).

ດ້ານສາກົນ, ອຳນາດການປົກຄອງວຽງຈັນ ຖືກຈັດເຂົ້າໃນຈຳພວກ ພວກຫຸ່ນຊຸ້ນຈຳຂອງອາເມລິກາ. ຫວ່າງເດືອນ ກ/໑໙໗໒ ແລ້ວນີ້, ຜູ້ຕາງໜ້າຂອງອຳນາດການປົກຄອງ ວຽງຈັນ ຢູ່ກອງປະຊຸມບັນດາປະເທດ ທີ່ບໍ່ຂື້ນກັບກຸ່ມ ຢູ່ຊຸອາເຊີຕາວ (ປະເທດ ກູຢານ) ກໍ່ໄດ້ເດີນຕາມພວກຫຸ່ນໄຊງ່ອນ ແລະ ຖືກປະນາມຢ່າງອັບອາຍຂາຍໜ້າທີ່ສຸດ. ເຫດການເປັນແນວນັ້ນ, ເຮັດແນວໃດ ຈຶ່ງຍັງມາອ້າງວ່າ ເດີນຕາມນະໂຍບາຍເປັນກາງໄດ້ ?

ນ/– <u>ການຕໍ່ສູ້ກູ້ຊາດ ຂອງແນວລາວຮັກຊາດ, ຂອງບັນດາກຳລັງຮັກຊາດ ແລະ ຂອງປະຊາຊົນລາວ ໄດ້ເຕີບໃຫຍ່ ເຂັ້ມແຂງ ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ.</u>

ຕະຫຼອດໄລຍະທີ່ຜ່ານມາ, ເຖິງວ່າ ຈັກກະພັດອາເມລິກາແລະ ລູກມື ໄດ້ລະດົມກຳລັງຢ່າງຫຼວງຫຼາຍ, ໃຊ້ການຄຸ້ມກັນຢ່າງໃຫຍ່ຫຼວງ ຈາກການຖິ້ມລະເບີດ ຂອງກອງທັບອາກາດ ຂອງອາເມລິກາມາເປີດການບຸກໂຈມຕີ ບຸກຍຶດຢ່າງຂະໜານໃຫຍ່ ແລະ ລຸກຕິດເຂົ້າເຂດປົດປ່ອຍຂອງບັນດາກຳລັງກູ້ຊາດແຕ່ເໜືອຮອດໃຕ້ ແລະ ໃຊ້ພວກກອງປົ້ນ ກອນນັງໂດ ໄຟກກອນ ທຳລາຍປະຊາຊົນຢູ່ໃດກໍ່ຕາມ, ເຂດປົດປ່ອຍ ຂອງບັນດາກຳລັງຮັກຊາດ ບໍ່ພຽງແຕ່ ໄດ້ຖືກປົກປັກຮັກສາໄວ້ໄດ້ເທົ່ານັ້ນ, ແຕ່ຍັງໄດ້ຮັບການກໍ່ສ້າງ, ປັບປຸງ ໃຫ້ເຂັ້ມແຂງໃນທຸກດ້ານ ແລະ ນັບມື້ນັບຂະຫຍາຍກ້ວາງອອກເລື້ອຍໆ. ເຂດປົດປ່ອຍທີ່ຫຼຸດພົ້ນອອກຈາກແອກຄອບຄອງຂອງອາເມລິກາ ແລະ ລູກມື ໄດ້ກາຍເປັນສັນຍາລັກ ແຫ່ງຄວາມເຕີບໃຫຍ່ເຂັ້ມແຂງ ຂອງການປະຕິວັດລາວ, ຂອງປະເທດລາວ ເອກະລາດຢ່າງແທ້ຈິງ ແລະ ເປັນເຂດທີ່ບໍ່ມີໃຜຈະແຕະຕ້ອງໄດ້.

ອຳນາດການປົກຄອງໃນເຂດປົດປ່ອຍ ໄດ້ຮັບການກໍ່ສ້າງຂຶ້ນ ແລະ ປັບປຸງໃຫ້ເຂັ້ມແຂງເພື່ອປົກປັກຮັກສາ ສິດປະໂຫຍດກໍ່ຄື ຮັບປະກັນສິດເສລີພາບ ປະຊາທິປະໄຕ ໃຫ້ແກ່ປະຊາຊົນ.

ກຳລັງທະຫານ ແລະ ກຳລັງການເມືອງ ຂອງບັນດາກຳລັງທີ່ຮັກຊາດ ໄດ້ເຕີບໃຫຍ່ເຂັ້ມແຂງຢ່າງບໍ່ຢຸດຢັ້ງ ຈົນສາມາດທັບມ້າງ ທຸກກົນອຸບາຍ ຂອງສັດຕູ ໃຫ້ມຸ່ນທະລາຍໄປ.

ຄວາມສາມັກຄີ ຂອງບັນດາຊົນຊາດ ໄດ້ຮັບການປັບປຸງ ໃຫ້ແໜ້ນແຟ້ນກວ່າເກົ່າ; ຄວາມສາມັກຄີຮ່ວມມື ລະຫວ່າງ ແນວລາວຮັກຊາດ ກັບກຳລັງເປັນກາງຮັກຊາດ ນັບມື້ນັບແໜ້ນແຟ້ນ ແລະ ນັບມື້ນັບມີຄວາມສັກສິດ ໃນການຕັດສິນໂຊກຊາຕາຂອງຊາດ.

ການດຳລົງຄົງຕົວ ຂອງແນວລາວຮັກຊາດ ແລະ ບັນດາກຳລັງເປັນກາງຮັກຊາດ ແມ່ນສະພາບການຕົວຈິງ ທາງພາວະວິໄສ ທີ່ບໍ່ມີໃຜຈະ ປະຕິເສດ ຫຼື ດູຖູກເບິ່ງເບົາໄດ້.

ບັນດາກຳລັງຮັກຊາດລາວ ໄດ້ມີຖານະບົດບາດສຳຄັນທີ່ສຸດ ໃນຊີວິດການເມືອງ ຂອງປະເທດຊາດໃນປະຈຸບັນ. ທາງດ້ານຕ່າງປະເທດ, ບັນດາກຳລັງຮັກຊາດລາວ ໄດ້ມີການພົວພັນ ຢ່າງແໜ້ນແຟ້ນ ແລະ ໄດ້ຮັບຄວາມສະໜັບສະໜູນໃນທຸກດ້ານ ຈາກບັນດາປະເທດສັງຄົມນິຍົມ, ຈາກຂະບວນປົດປ່ອຍຊາດ ແລະ ຈາກປະຊາຊົນຫົວກ້າວໜ້າໃນທົ່ວໂລກ.

## III – ຫຼັກໝັ້ນ ແກ້ໄຂບັນຫາລາວ ທີ່ແນວລາວຮັກຊາດ ແລະ ບັນດາກຳລັງເປັນກາງຮັກຊາດ ໄດ້ວາງອອກ ແມ່ນຖືກຕ້ອງທີ່ສຸດ.

ຈາກສະພາບການຕົວຈິງທີ່ໄດ້ເວົ້າມາຂ້າງເທິງນັ້ນ, ຝ່າຍພວກຂ້າພະເຈົ້າເຫັນວ່າ ວິທີການແກ້ໄຂບັນຫາລາວ ທີ່ຖືກຕ້ອງອັນດຽວ ແມ່ນວິທີການ ໕ ຂໍ້ ທີ່ບັນດາກຳລັງຮັກຊາດ ໄດ້ວາງອອກ ແລະ ທີ່ພວກຂ້າພະເຈົ້າໄດ້ອະທິບາຍເພີ່ມເຕີມ, ເພາະວິທີການນັ້ນ ໄດ້ອີງໃສ່ຈິດໃຈ ຂອງສັນຍາເຈນີວປີ ໑໙໕໔ ກ່ຽວກັບລາວ ແລະ ອີງໃສ່ສະພາບການຕົວຈິງຂອງລາວ ໃນປະຈຸບັນ. ວິທີການ ໕ ຂໍ້ນັ້ນ, ພະບາດສົມເດັດ ພະເຈົ້າມະຫາຊີວິດ ກໍ່ຊົງພໍພະໄທ, ສະເດັດເຈົ້າສຸວັນນະພູມາ ກໍໄດ້ເຫັນພ້ອມໃຫ້ເອົາເປັນພື້ນຖານການເຈລະຈາ ແລະ ຄະນະຕົວແທນຝ່າຍຂວາ ວຽງຈັນເອງກໍ່ ເຫັນດີແນວນັ້ນ.

ເພື່ອແກ້ໄຂບັນຫາຕ່າງໆ ທີ່ວາງອອກ ສຳລັບປະເທດຊາດບ້ານເມືອງ ຂອງພວກເຮົາ ໃນປະຈຸບັນນີ້ ບໍ່ແມ່ນວ່າ ຈະຟື້ນຟູ ລັດຖະບານ ທີ່ສູນຫາຍໄປແລ້ວ, ແຕ່ນັ້ນແມ່ນຕ້ອງແກ້ໄຂ ສອງບັນຫາອັນດ່ວນທີ່ສຸດ: ຢຸດເຊົາສົງຄາມຮຸກຮານ ແລະ ການຕິດພັນທາງທະຫານ ຂອງອາເມລິກາ ຢູ່ລາວ, ຈັດຕັ້ງລັດຖະບານປະສົມແຫ່ງຊາດໃໝ່ ແລະ ສະພາປະສົມການເມືອງຂຶ້ນ ຄື ພວກຂ້າພະເຈົ້າໄດ້ສະເໜີໄປແລ້ວ. ນອກຈາກນັ້ນ ແມ່ນບໍ່ມີວິທີອື່ນໃດ ອີກທີ່ເໝາະສົມ ແລະ ຖືກແທດກັບສະພາບການຕົວຈິງຢູ່ໃນປະເທດລາວ.

ໂດຍຢຶດໝັ້ນ ຕາມຫຼັກໝັ້ນອັນຖືກຕ້ອງ ຂອງຝ່າຍພວກຂ້າພະເຈົ້າ, ແລະ ໄຈ້ແຍກສະພາບການຕົວຈິງຂອງປະເທດລາວເຮົາແລ້ວ ພວກຂ້າພະເຈົ້າເຫັນວ່າ, ທັດສະນະຂອງຝ່າຍຂວາວຽງຈັນ ບໍ່ຖືກກັບຄວາມເປັນຈິງທີ່ມີຢູ່ໃນລາວ, ດັ່ງເຫດນັ້ນ ຂໍ້ສະເໜີ ໗ ຂໍ້ຂອງຝ່າຍຂວາວຽງຈັນ ທີ່ພວກທ່ານສະເໜີອອກ ໃນວາລະປະຊຸມເທື່ອແລ້ວນີ້, ຈຶ່ງບໍ່ສາມາດຈະສ້າງເງື່ອນໄຂຕົວຈິງ ເພື່ອກ້າວໄປເຖິງການຟື້ນຟູ ສັນຕິພາບ ແລະ ສ້າງຄວາມຖືກຕ້ອງປອງດອງຊາດໄດ້.

໑/- ໃນຕົວຈິງແລ້ວ, ຄະນະຕົວແທນຝ່າຍຂວາວຽງຈັນ ຍັງບໍ່ທັນຮັບເອົາວິທີການ ໕ ຂໍ້ ເປັນພື້ນຖານສຳລັບເປີກສາຫາລືກັນຄື ດັ່ງທີ່ພວກທ່ານ ໄດ້ເຫັນດີນຳແລ້ວ, ມີແຕ່ຕີປ່ອງຍົກຂັ້ນຂັ້ນເກົ່າຂຶ້ນມາ ເຮັດໃຫ້ການຖົກຖຽງຖືກແກ່ຍືດຍາວເປັນການເພີ່ມທະວີອຸປະສັກ ໃຫ້ແກ່ກອງປະຊຸມໄປຊັກໃຊ້.

ພວກທ່ານ ຍັງຄົງແຍກບັນຫາການທະຫານ ອອກຈາກບັນຫາການເມືອງ. ທີ່ຈິງແລ້ວພວກທ່ານ ແມ່ນຢາກໃຫ້ມີແຕ່ການຢຸດຍິງເທົ່ານັ້ນ ແລະ ບໍ່ຍອມເວົ້າເຖິງບັນຫາອື່ນໆທີ່ເປັນພື້ນຖານທາງດ້ານການເມືອງ ຄື ເຮັດແນວໃດ ຈຶ່ງຈະມີການຮັບປະກັນ ສິດແຫ່ງຊາດຂອງລາວ ແລະ ເຮັດແນວໃດ ຈຶ່ງຈະມີພື້ນຖານສຳລັບແກ້ໄຂບັນດາບັນຫາທີ່ມີການພົວພັນ ລະຫວ່າງບັນດາຝ່າຍລາວທີ່ກ່ຽວຂ້ອງ ໃນປະຈຸບັນ.

ເນື້ອໃນ ແລະ ຂອບເຂດ ໃນການແກ້ໄຂ ຂອງພວກທ່ານ ຍັງຄົງແມ່ນ ທັດສະນະ, ຫຼັກໝັ້ນ ອັນເກົ່າແກ່ ຂອງພວກທ່ານ, ໝາຍຄວາມວ່າ ບັງຄັບໃຫ້ ບັນດາກຳລັງຮັກຊາດ ວາງອາວຸດ, ຍຸບກຳລັງຂອງຕົນ ແລ້ວເຂົ້າສະຫວາມີພັກ ຕໍ່ພວກທ່ານ. ພວກທ່ານ ຍັງຄົງຮຽກຮ້ອງ ໃຫ້ໄດ້ຕາມຂໍ້ສະເໜີຕ່າງໆ ຂອງພວກທ່ານ ຄືດັ່ງພວກທ່ານເປັນຝ່າຍຊະນະ ສົງຄາມ. ພວກທ່ານປະກົດວ່າ ບໍ່ຮູ້ສະພາບການຕົວຈິງ ທີ່ບັນດາກຳລັງຮັກຊາດພວມມີໄຊຊະນະຫຼາຍຂຶ້ນຊັກໃຊ້ ແລະ ພວກອາເມລິກາ ແລະ ລູກນ້ອງນັບມື້ນັບປະລາ

ໄຊຫນັກ ແລະ ຈະສືບຕໍ່ປະລາໄຊຫນັກລົງທຸກມື້ຢ່າງບໍ່ມີທາງທີ່ຈະຟື້ນຕົວໄດ້ເລີຍ.

໔/- ຄະນະຜູ້ແທນຝ່າຍຂອງວຽງຈັນ ໄດ້ເວົ້າເຖິງ ສັນຍາເຊີແນວປີ ໑໙໕໔ ກ່ຽວກັບລາວ, ແຕ່ຊ້ຳພັດ ເມີນເສີຍ ຕໍ່ສະພາບການຕົວຈິງຢູ່ລາວ. ດັ່ງນັ້ນ, ພ້ອມກັບເວົ້າວ່າ ເຄົາລົບສັນຍາເຊີແນວ ປີ ໑໙໕໔ , ພວກທ່ານຊ້ຳເວົ້າຫຼາຍເລື້ອງຫຼາຍຢ່າງທີ່ເປັນການລະເມີດ ສັນຍາເຊີແນວອັນນັ້ນ, ຄືດຽວ ກັນກັບເວົ້າວ່າ ປົກປັກຮັກສາລັດຖະບານປະສົມ, ແຕ່ການກະທຳພັດແມ່ນທຳລາຍມັນຢ່າງສິ້ນເຊີງ; ອັນນັ້ນແມ່ນ ອັນພວກຂ້າພະເຈົ້າວ່າ ແມ່ນເລີກບິດເບືອນຄວາມຈິງ ເພື່ອຫຼອກລວງຜູ້ຮູ້ເທົ່າບໍ່ເຖິງການ. ພວກອາເມລິກາ ແລະ ລູກມືປະລາໄຊຢູ່ໃນທີ່ທຸກສະຫນາມຮົບແນວນັ້ນ, ພວກທ່ານກໍ່ຍັງຢາກເຈລະຈາໃນທ່າແຂງ, ຢາກເອົາການເຈລະຈາມາບັງຄັບໃຫ້ພູມີໄຊຊະນະກົ້ມຄົນຍອມຈຳນົນ. ນັ້ນສະແດງໃຫ້ເຫັນແຈ້ງວ່າ ພວກທ່ານຍັງບໍ່ທັນຍອມປະຖິ້ມແນວຄິດຢາກທຳລາຍ ດັບສູນບັນດາກຳລັງຮັກຊາດ [redacted] ເພື່ອປັ່ງໃຫ້ອາເມລິກາຍຶດທາງເອົາປະເທດລາວໄປເປັນເມືອງຂຶ້ນແບບໃໝ່ ແລະ ຖານທັບກົລົງຄາມຂອງພວກມັນ, ເຮັດໃຫ້ປະຊາຊົນລາວເດືອດຮ້ອນທໍລະມານບໍ່ມີວັນສິ້ນສຸດ.

ສະພາບການຕົວຈິງຂອງລາວ ໃນປະຈຸບັນ, ແມ່ນອາເມລິກາ ໄດ້ທຳລາຍສັນຍາເຊີແນວ ປີ ໑໙໕໔ ກ່ຽວກັບລາວ, ແລ້ວເພີ່ມທະວີສົງຄາມຢູ່ໃນລາວ, ເຮັດໃຫ້ລາວເສັຽສັນຕິພາບ, ເອກະລາດ, ຄວາມເປັນກາງ ແລະ ອຳນາດອະທິປະໄຕຂອງຕົນ. ສະນັ້ນ ອາເມລິກາ ຈຶ່ງຕ້ອງ ເຄົາລົບອະທິປະໄຕ, ເອກະລາດ, ເອກະພາບ ແລະ ດິນແດນອັນຄົບຖ້ວນຂອງລາວ ເພື່ອຢຸດເຊົາສົງຄາມ ແລະ ຟື້ນຟູສັນຕິພາບຄືນໃນບ້ານເມືອງລາວ. ຝ່າຍວຽງຈັນ ຕ້ອງຢຸດເຊົາການເປັນເຄື່ອງມືໃຫ້ອາເມລິກາ, ຕ້ອງເຈລະຈາດ້ວຍຄວາມຈິງໃຈ ແລະ ຕ້ອງວາງຂໍ້ສະເຫນີ ອັນລະອຽດ, ຕົວຈິງ ແລະ ສອດຄ່ອງ ກັບສິ່ງປະໂຫຍດຂອງຊາດ ໃນປະຈຸບັນ, ໃນຂອບເຂດວິທີການ ໕ ຂໍ້ຂອງແນວລາວຮັກຊາດທີ່ທັງສອງຝ່າຍໄດ້ຮັບເອົາເປັນພື້ນຖານໃຫ້ແກ່ການເຈລະຈາແລ້ວ, ຈຶ່ງຈະມີຊ່ອງທາງຕົກລົງກັນໄດ້.

ສະພາບການຕົວຈິງຢູ່ລາວແມ່ນ ມີແນວລາວຮັກຊາດ, ມີກຳລັງເປັນກາງຮັກຊາດ ທີ່ໄດ້ເຕີບໃຫ່ຍເຂັ້ມແຂງ ແລະ ໄດ້ຮັບໄຊຊະນະຢູ່ໃນທີ່ທຸກສະຫນາມຮົບ; ສະນັ້ນ, ຝ່າຍຂອງວຽງຈັນ ຈຶ່ງຕ້ອງເຈລະຈາຢ່າງສະເຫມີພາບ, ບໍ່ຄວນຍົກເອົາເຫດຜົນເລື່ອງນັ້ນ ເລື່ອງນີ້ທີ່ບໍ່ຖືກຕ້ອງມາອ້າງອີງ ເພື່ອຍືດເຍື້ອ ຂັດຂວາງການເຈລະຈາ, ເຮັດໃຫ້ກອງປະຊຸມຕົກຄວາມສັບສົນ.

ສະພາບການຕົວຈິງຢູ່ລາວແມ່ນ ອັນທີ່ເອີ້ນວ່າ "ລັດຖະບານປະສົມຢູ່ວຽງຈັນ" ບໍ່ມີຄຸນຄ່າທາງດ້ານກົດຫມາຍຈັກດີ່. ດັ່ງນັ້ນ, ຄະນະຜູ້ແທນຝ່າຍຂອງວຽງຈັນ ຈຶ່ງຕ້ອງເປີກລາກາລີຢ່າງຈິງໃຈ ກັບຄະນະຜູ້ແທນ ບັນດາກຳລັງຮັກຊາດ, ພ້ອມກັນຈັດຕັ້ງສະພາ ປະສົມການເມືອງ ແລະ ລັດຖະບານປະສົມແຫ່ງຊາດຊົ່ວຄາວຊຸດໃຫມ່ ຕາມທີ່ພວກຂ້າພະເຈົ້າໄດ້ສະເຫນີໄປແລ້ວ, ແນໃສ່ຮັກສາສັນຕິພາບ ແລະ ຈັດວາງກະກຽມໃຫ້ແກ່ ການສ້າງຄວາມປອງດອງຊາດ, ເພື່ອກ້າວໄປເຖິງ ຈັດຕັ້ງການເລືອກຕັ້ງສະພາຊຸດໃຫມ່ ຢ່າງອິດສະຫຼະ, ແລະ ຈັດຕັ້ງລັດຖະບານປະສົມແຫ່ງຊາດ ອັນຖາວອນ.

ສະພາບການຕົວຈິງຢູ່ລາວແມ່ນ ສິດເສລີພາບ ປະຊາທິປະໄຕ ຂອງປະຊາຊົນຖືກພວກອາເມ

ລິກາ ແລະ ລູກມືລ່ວງລະເມີດ ແລະ ຢຽບຢ່ຳ ຍ່ຳຍີຢ່າງຫນັກຫນ່ວງ. ດັ່ງນັ້ນ ຈຶ່ງຕ້ອງຟື້ນຟູໝັ້ນຄົງ ແລະ ຮັບປະກັນໃຫ້ປະຊາຊົນປະຕິບັດມັນໄດ້ຢ່າງຄົບຖ້ວນ. ເມື່ອເວົ້າເຖິງສິດເສລີພາບ ປະຊາທິປະໄຕ ຂອງປະຊາຊົນ, ບໍ່ແມ່ນຈະເວົ້າພຽງແຕ່ ເສລີພາບ ໃນການໄປມາ ແລະ ຕັ້ງພູມລຳເນົາເທົ່ານັ້ນ, ແຕ່ຍັງຕ້ອງປະກາດກົດຫມາຍວ່າດ້ວຍສິດເສລີພາບ ປະຊາທິປະໄຕ ຂອງພົນລະເມືອງລາວທຸກຄົນ ຢ່າງຄົບຖ້ວນ, ເພື່ອໃຫ້ປະຊາຊົນເຮົາ ມີສິດເຂົ້າຮ່ວມວຽກບ້ານການເມືອງ, ປົກປັກຮັກສາ ສັນຕິພາບ ແລະ ອະທິປະໄຕ ຂອງຊາດ.

໗/- ຄະນະຜູ້ແທນຝ່າຍຂວາບາງຈັ້ນ ໄດ້ວາງຂໍ້ສະເຫນີອອກຈຳນວນຫນຶ່ງ. ແຕ່ພວກຂ້າພະເຈົ້າເຫັນວ່າຂໍ້ສະເຫນີເຫຼົ່ານັ້ນ ບໍ່ຈະແຈ້ງ, ບໍ່ລະອຽດຄົບຖ້ວນ, ບໍ່ມີລັກສະນະກໍ່ສ້າງ ແລະ ບໍ່ຖືກຕາມລັກສະນະຄັບຄ້ວາ ໕ ຂໍ້ທີ່ພັນທາບທຸກຝ່າຍເຫັນດີນຳກັນ.

ພວກຂ້າພະເຈົ້າເຫັນວ່າ, ການຢຸດຍິງ ຈະບັງເກີດຂຶ້ນໄດ້ ແລະ ມີການຮັບປະກັນ ກໍ່ຕໍ່ເມື່ອການຕິດພັນທາງທະຫານຂອງອາເມລິກາ ແລະ ຂອງບັນດາປະເທດ ທີ່ຂຶ້ນກັບຝ່າຍອາເມລິກາຢູ່ລາວ ຢຸດເຊົາລົງຢ່າງສິ້ນເຊີງ ແລະ ຕະຫຼອດການ. ຖ້າຫາກຍັງຊອກຫາວິທີໃດຫນຶ່ງມາປົກປິດການຮຸກຮານ ຂອງອາເມລິກາ ກໍ່ຫມາຍຄວາມວ່າ ຍັງບໍ່ຍອມກ້າວເຂົ້າເຖິງ ເນື້ອແທ້ ຂອງບັນຫາສ້າງຄວາມປອງດອງຊາດຢູ່ໃນລາວຢ່າງແທ້ຈິງ. ທຸກເລ່ນທີ່ຈະປົກປິດເອົາການແຊກແຊງຮຸກຮານ ຂອງຈັກກະພັດອາເມລິການັ້ນ, ຈະແມ່ນດ້ວຍຄວາມກາວຫາຫຼື ແກ້ຕົວຢ່າງໃດກໍ່ຕາມ, ລ້ວນແຕ່ຈະເປັນອຸປະສັກມາຂັດຂວາງການເຈລະຈາບໍ່ໃຫ້ໄປເຖິງຜົນສຳເລັດໄດ້. ປະເທດລາວຈະມີເອກະລາດ, ແລະ ເປັນກາງ ຢ່າງແທ້ຈິງນັ້ນ ກໍ່ຕໍ່ເມື່ອພວກເຮົາພ້ອມກັນເຮັດໃຫ້ ລັດທິລ່າເມືອງຂຶ້ນແບບໃຫມ່ ຂອງອາເມລິກາ ສິ້ນສຸດລົງຢູ່ໃນປະເທດລາວ.

ເພາະສະນັ້ນ, ພວກຂ້າພະເຈົ້າ ຈຶ່ງຖືວ່າ, ເນື້ອໃນ ໕ ຂໍ້ທີ່ພວກຂ້າພະເຈົ້າ ວາງອອກນັ້ນ ຄວນໄດ້ຮັບການປຶກສາຫາລືຢ່າງເຂັ້ມງວດ ດ້ວຍຈິດໃຈກໍ່ສ້າງແທ້ໆ. ຖ້າຫາກມີບ່ອນໃດບໍ່ທັນແຈ້ງຄັກກໍ່ຂໍໃຫ້ພວກທ່ານຖາມມາດ້ວຍນ້ຳໃສໃຈຈິງ. ພວກຂ້າພະເຈົ້າກຽມພ້ອມຢູ່ສະເຫມີ ເພື່ອນຳເອົາຄວາມແຈ່ມແຈ້ງມາຊີ້ແຈງເພີ່ມຕື່ມ ໃຫ້ພວກທ່ານ ເພື່ອພ້ອມກັນ ແກ້ໄຂບັນຫາລາວ ດ້ວຍສັນຕິວິທີ, ໃຫ້ມັນໄວເທົ່າທີ່ຈະໄວໄດ້, ເຮັດໃຫ້ປະເທດລາວມີສັນຕິພາບ, ເອກະລາດ, ເປັນກາງ, ປະຊາທິປະໄຕ, ເອກະພາບ ແລະ ວັດທະນາຖາວອນ, ສົມດັ່ງຄວາມມຸ່ງມາດປາຖະຫນາຂອງປະຊາຊົນລາວທົ່ວຊາດ./.

---